GCI

# ບົດທີ 3
# ການໃຫ້ຄຳປຶກສາ
# ແລະພັນທະກິດຊ່ວຍເຫລືອຜູ້ມີບັນຫາ

## ອະລຳພະບົດ

ຈຸດປະສົງຂອງບົດຮຽນ:

* ເພື່ອເຂົ້າໃນຫລັກພື້ນຖານໃນການໃຫ້ຄຳປຶກສາແບບສິດຍາພິບານ
* ເພື່ອເຂົ້າໃຈເຖິງປະເພດຕ່າງໆ ຂອງການໃຫ້ຄຳປຶກສາ
* ເພື່ອບົ່ງບອກເຖິງ ພຶດຕິກຳປ້ອງກັນຕົວ
* ເພື່ອເຂົ້າໃຈທັກສະພື້ນຖານໃນການໃຫ້ຄຳປຶກສາ
* ເພື່ອຊ່ວຍເຫລືອຜູ້ມີບັນຫາ

## ໂຄງຮ່າງບົດຮຽນ

I. ອະລຳພະບົດ
   - ກ. ຄຳນິຍາມ ແລະຄວາມສຳຄັນຂອງການໃຫ້ຄຳປຶກສາແບບສິດຍາພິບານ
   - ຂ. ໜ້າທີ່ພື້ນຖານໃນການລ້ຽງດູສະມາຊິກ
   - ຄ. ຂໍ້ດີຂອງສິດຍາພິບານໃນການໃຫ້ຄຳປຶກສາ
   - ງ. ຕົວຢ່າງຈາກພະຄຳພີໃນເລື່ອງການໃຫ້ຄຳປຶກສາ
   - ຈ. ຄຸນສົມບັດພື້ນຖານຂອງຜູ້ໃຫ້ຄຳປຶກສາ

II. ປະເພດຕ່າງໆ ຂອງການໃຫ້ຄຳປຶກສາ
   - ກ. ການໃຫ້ຄຳປຶກສາໃນຊ່ວງສັ້ນ ແລະການໃຫ້ຄຳປຶກສາຢ່າງບໍ່ເປັນທາງການ
   - ຂ. ການໃຫ້ຄຳປຶກສາເລື່ອງຄອບຄົວ ຫລືການສົມລົດ
   - ຄ. ການໃຫ້ຄຳປຶກສາໃນເວລາວິກິດ
   - ງ. ການໃຫ້ຄຳປຶກສາເປັນກຸ່ມ
   - ຈ. ການໃຫ້ຄຳປຶກສາໄລະຍະຍາວ ຫລືໃຫ້ຄຳປຶກສາແບບເລິກ
   - ສ. ການໃຫ້ຄຳປຶກສາແບບປະເຊີນໜ້າ

III. ພຶດຕິກຳປ້ອງກັນຕົນເອງ
   - ກ. ການຝັນກາງວັນ
   - ຂ. ການຫາຂໍ້ອ້າງ
   - ຄ. ການໂທດຄົນອື່ນ
   - ງ. ການຊົດເຊີຍ
   - ຈ. ການຮຽນແບບ
   - ສ. ການປະຕິເສດ
   - ຊ. ການຮຽກຮ້ອງຄວາມສົນໃຈ
   - ຍ. ການຄິດໃນແງ່ລົບ
   - ດ. ການຖອຍຫລັງ
   - ຕ. ການເກັບກົດ
   - ຖ. ການລະບາຍຄວາມກ້າວຮ້າວ

IV. ຂັ້ນຕອນພື້ນຖານໃນການໃຫ້ຄຳປຶກສາ
   - ກ. ການປະເມີນ
   - ຂ. ການຄົ້ນຫາຂໍ້ແທ້ຈິງ

GCI

- ຄ. ແນວທາງ

V. ທັກສະພື້ນຖານໃນການໃຫ້ຄຳປຶກສາ
- ກ. ສ້າງຄວາມສະໜິດສະໜົມ
- ຂ. ຟັງຢ່າງຕັ້ງໃຈ
- ຄ. ຢ່າດ່ວນສະຫລຸບເລື່ອງໄວເກີນໄປ
- ງ. ການແນະນຳໄປຍັງຜູ້ໃຫ້ຄຳປຶກສາຄົນອື່ນ

VI. ພັນທະກິດກັບຜູ້ນຳທີ່ລົ້ມລົງໃນຄວາມບາບ
- ກ. ທັກສະຕໍ່ຜູ້ນຳແບບສົມເຫດສົມຜົນ
- ຂ. ອົງປະກອບທີ່ເຮັດໃຫ້ຜູ້ນຳລົ້ມລົງ
- ຄ. ວິທີການຊ່ວຍເຫລືອເມື່ອພົບສະຖານນະການດັ່ງກ່າວ

VII. ພັນທະກິດກັບຜູ້ທີ່ຊຶມເສົ້າ
- ກ. ນິຍາມ ຂອງຄຳວ່າ ຊຶມເສົ້າ
- ຂ. ໃຜແດ່ທີ່ໄດ້ຮັບຜົນກະທົບຈາກຄວາມຊຶມເສົ້າ
- ຄ. ອັນໃດຄືສາເຫດຂອງຄວາມຊຶມເສົ້າ
- ງ. ສາເຫດທາງຈິດໃຈ
- ຈ. ສາເຫດຝ່າຍວິນຍານ
- ສ. ວິທີເຮັດພັນທະກິດກັບຜູ້ທີ່ຊຶມເສົ້າ

VIII. ພັນທະກິດກັບຄົນທີ່ຢາກຂ້າຕົວຕາຍ
- ກ. ຕົວຢ່າງຄົນທີ່ຂ້າຕົວຕາຍໃນພະຄຳພີ
- ຂ. ວິທີສັງເກດອາການຂອງຄົນທີ່ຢາກຂ້າຕົວຕາຍ
- ຄ. ວິທີສັງເກດຄົນທີ່ມີຄວາມສ່ຽງສູງທີ່ຈະຂ້າຕົວຕາຍ
- ງ. ວິທີເຮັດພັນທະກິດກັບຄົນທີ່ຢາກຂ້າຕົວຕາຍ

IX. ພັນທະກິດກັບຜູ້ທີ່ມີບັນຫາຄວບຄຸມອາລົມໂກດບໍ່ໄດ້
- ກ. ລາຍລະອຽດຈາກພະຄຳພີກ່ຽວກັບເລື່ອງຄວາມໂກດ
- ຂ. ຄວາມໂກດບໍ່ໄດ້ເປັນຄວາມບາບສະເໝີໄປ
- ຄ. ຄວາມໂກດທີ່ເປັນຄວາມບາບ
- ງ. ການຈັດການກັບຄວາມໂກດ

X. ພັນທະກິດກັບຜູ້ທີ່ໂສກເສົ້າ
- ກ. ຄວາມຕາຍ ຄືການສູນເສັຽທີ່ເຈັບປວດ
- ຂ. ຂັ້ນຕອນຕ່າງໆ ຂອງຄວາມເສົ້າໃຈ
- ຄ. ອາການສະແດງອອກທົ່ວໄປຂອງຄວາມເສົ້າ
- ງ. ວິທີການຊ່ວຍເຫລືອຜູ້ທີ່ໂສກເສົ້າ
- ຈ. ສິ່ງທີ່ຕ້ອງຫລີກລ້ຽງ
- ສ. ຄຳແນະນຳສຳລັບຍິງໝ້າຍ

XI. ບົດສະຫລຸບ
- ກ. ການສົ່ງຕໍ່
- ຂ. ຂໍ້ເຕືອນໃຈໃນທາງປະຕິບັດ
- ຄ. ຂໍ້ພະຄຳພີທີ່ກ່ຽວຂ້ອງ

GCI

# I. <u>ອະລຳພະບົດ</u>

"ພະເຈົ້າຂອງເຈົ້າຕັດວ່າ ຈົ່ງເລົ້າໂລມຊົນຊາດຂອງເຮົາ" **ເອລີຢາ 40:1**

"ບ່ອນໃດທີ່ມີການນຳ ປະຊາຊົນກໍລົ້ມລົງ ແຕ່ໃນທີ່ຊຶ່ງມີທີ່ປຶກສາຫລາຍຍ່ອມມີຄວາມປອດໄພ" **ສຸພາສິດ 11:14**

"ທາງຂອງຄົນໂງ່ນັ້ນຖືກຕ້ອງໃນສາຍຕາຂອງເຂົາເອງ ແຕ່ນັກປາດຍ່ອມຟັງຄຳແນະນຳ" **ສຸພາສິດ 12:15**

## *ກ. ຄຳນິຍາມ ແລະຄວາມສຳຄັນຂອງການໃຫ້ຄຳປຶກສາແບບສິດຍາພິບານ*

1. ການໃຫ້ຄຳປຶກສາແບບສິດຍາພິບານຄື ການຕອບສະໜອງຕໍ່ຄວາມຕ້ອງການໂດຍຄົນຊຶ່ງມີຄວາມຫວ່ງໃຍຢ່າງແທ້ຈິງຕໍ່ຄົນທີ່ກຳລັງປະສົບຄວາມທຸກ ໃນຂອບເຂດຄວາມສາມັກຄີທຳຂອງຄຣິສຕະຈັກຕະຫລອດຈົນຜູ້ຄົນອີກຫລວງຫລາຍທີ່ຢູ່ນອກຄຣິສຕະຈັກ ຊຶ່ງໄດ້ຕິດຕໍ່ຂໍຄວາມຊ່ວຍເຫລືອຈາກສິດຍາພິບານເມື່ອກຳລັງປະສົບກັບພາວະວິກິດໃນຊີວິດ

2. ເມື່ອສິດຍາພິບານເບິ່ງສະມາຊິກຂອງເຂົາໃນການນະມັດສະການຕອນເຊົ້າວັນອາທິດ ເຂົາຈະເບິ່ງເຫັນຄົນຊຶ່ງກຳລັງມີ<u>**ບັນຫາ**</u> ແລະພາລະໜັກ ຢ່າງຫລີກລ້ຽງບໍ່ໄດ້

   "ແລະພີ່ນ້ອງທັງຫລາຍເຮົາຂໍວິງວອນພວກທ່ານໃຫ້ຕັກເຕືອນຄົນທີ່ກຽດຄ້ານ ໜູນນ້ຳໃຈຜູ້ທີ່ທໍ້ໃຈຊູ ກຳລັງຄົນທີ່ອ່ອນກຳລັງ ແລະມີໃຈອົດເອົາເບົາສູ້ຕໍ່ຄົນທັງປວງ" **1ເທຊະໂລນີກ 5:14**

## *ຂ. ໜ້າທີ່ພື້ນຖານໃນການລ້ຽງດູສະມາຊິກ*

1. <u>**ການຮັກສາໂລກ**</u>
   ໜ້າທີ່ໃນການອະພິບານສິດຂໍ້ນີ້ ມີເປົ້າໝາຍເພື່ອຊ່ວຍໃຫ້ຜູ້ເຊື່ອໄດ້ເອົາຊະນະບັນຫາໂດຍການຟື້ນຟູສະພາບຂອງເຂົາໃຫ້ຫາຍເປັນປົກກະຕິ

2. <u>**ການເສີມກຳລັງ**</u>
   ຊ່ວຍເຫລືອຜູ້ເຊື່ອທີ່ມີຄວາມເຈັບຊໍ້າໃຫ້ມີຄວາມອົດທົນຕໍ່ສະຖານນະການທີ່ຍາກລຳບາກ

3. <u>**ການນຳພາ**</u>
   ການຊ່ວຍຜູ້ເຊື່ອໃຫ້ສາມາດເລືອກຕັດສິນໃຈເຮັດໃນສິ່ງທີ່ຖືກຕ້ອງໃນເວລາທີ່ຕ້ອງປະເຊີນກັບທາງເລືອກຫລາຍທາງ

4. <u>**ການເຮັດໃຫ້ກັບຄືນດີ**</u>
   ຊ່ວຍໃຫ້ຜູ້ເຊື່ອກັບສູ່ຄວາມສຳພັນອັນດີໃນຂະນະທີ່ຄວາມສຳພັນຂອງເຂົາເສັຽໄປແລ້ວ ທັງລະຫວ່າງມະນຸດກັບມະນຸດ ແລະມະນຸດກັບພະເຈົ້າ

## *ຄ. ຂໍ້ດີຂອງສິດຍາພິບານໃນການໃຫ້ຄຳປຶກສາ*

1. <u>**ຄວາມໄວ້ວາງໃຈ**</u>
   ໂດຍທົ່ວໄປ ສະມາຊິກຈະມີຄວາມໄວ້ວາງໃຈໃນສິດຍາພິບານ

2. <u>**ການມີຄວາມສຳພັນອັນດີຢູ່ແລ້ວ**</u>

GCI

ສິດຍາພິບານ ມີຂໍ້ໄດ້ປຽບເພີ່ມເຕີມຄື ເຂົາມີຄວາມສຳພັນອັນດີກັບສະມາຊິກຄຣິສຕະຈັກຢູ່ ກ່ອນແລ້ວ ໃນການທຳງານຂອງສິດຍາພິບານນັ້ນເຂົາຈະມີໂອກາດໄດ້ຕິດຕໍ່ກັບສະມາຊິກຄຣິສຕະ ຈັກຢູ່ເປັນ ປະຈຳ

3. **<u>ພັນທະກິດໃນຍາມວິກິດ</u>**
ຫລາຍຄັ້ງສິດຍາພິບານຈະມີສ່ວນຮ່ວມກັບສະມາຊິກໃນພາວະວິກິດເຊັ່ນ ໃນງານສົບ ໃນຍາມ ເຈັບປ່ວຍ ແລະປະສົບອຸບັດຕິເຫດ

4. **<u>ຄວາມພ້ອມທີ່ຈະຊ່ວຍເຫລືອ</u>**
ຂໍ້ໄດ້ປຽບເພີ່ມເຕີມອີກປະການນຶ່ງຄື ສະມາຊິກຮູ້ດີຢູ່ແລ້ວວ່າ ສິດຍາພິບານເປັນຜູ້ທີ່ພ້ອມຢູ່ສະເໝີ ທີ່ຈະຊ່ວຍເຫລືອພວກເຂົາໃນຍາມຍາກລຳບາກ

5. **<u>ການຝຶກອົບຮົມ</u>**
ການທີ່ສິດຍາພິບານ ໄດ້ຜ່ານການຝຶກອົບຮົມມາເປັນພິເສດ ເຮັດໃຫ້ເຂົາມີຂໍ້ໄດ້ປຽບເມື່ອຕ້ອງປະ ປະເຊີນກັບບັນຫາຄອບຄົວຫລືປະເດັນທາງສາດສະໜາຕ່າງໆ

## *ງ. ຕົວຢ່າງຈາກພະຄຳພີໃນເລື່ອງການໃຫ້ຄຳປຶກສາ*

1. ໂມເຊ ໃຫ້ປຶກສາປະຊາກອນອິດສະລາເອນ
"ວັນໃຫມ່ ໂມເຊອອກນັ່ງພິຈາລະນາພພາກສາຄວາມໃຫ້ປະຊາຊົນ ພວກເຂົາຢືນຫ້ອມລ້ອມ ໂມເຊຕັ້ງ ແຕ່ເຊົ້າຈົນຄ່ຳ" **ອົບພະຍົບ 18:13**

2. ຜູ້ເຜີຍພະວັດຈະນະ ນາທານ ໃຫ້ຄຳປຶກສາແລະປະເຊີນໜ້າກັບດາວິດ **2ຊາມູເອນ 12:1-15**

3. ໂມເດໄຄ ໃຫ້ປຶກສາແກ່ເອສະເທີ **ເອັສະເທີ 4:1-14**

4. ຊາມູເອນ ໃຫ້ຄຳປຶກສາແກ່ຊາອູນ **1ຊາມູເອນ 15:10-23**

5. ພະເຢຊູໃຫ້ຄຳປຶກສາແກ່ນິໂກເດມັດ **ໂຢຮັນ 3:1-17**

6. ພະເຢຊູໃຫ້ຄຳປຶກສາແກ່ຍິງຊາວສະມາເລັຽ **ໂຢຮັນ4:1-30**

## *ຈ. ຄຸນສົມບັດພື້ນຖານຂອງຜູ້ໃຫ້ຄຳປຶກສາ*

1. ຕ້ອງມີຄວາມເປັນ**<u>ຜູ້ໃຫຍ່</u>**
"ຝ່າຍພະເຢຊູ ເມື່ອຊົງເລີ້ມພະຣາຊະກິດ ພະອົງມີພະຊົນມາຍຸປະມານສາມສິບພັນສາ.." **ລູກາ 3:23**
2. ຕ້ອງມີຊີວິດເຝົ້າດ່ຽວຢ່າງ**<u>ສະໝ່ຳສະເໝີ</u>**

   ກ) ອະທິຖານ **ມາຣະໂກ 1:35**
   ຂ) ສັນລະເສີນ **ເພງສັນລະເສີນ 57:8-9**
   ຄ) ພະວັດຈະນະ **ເພງສັນລະເສີນ 119:98-100**

3. ຕ້ອງເປັນຄົນທີ່ມີໃ**<u>ຈເມດຕາ</u>** ສົງສານຄົນອື່ນ - ພະເຢຊູຊົງເຮັດພັນທະກິດດ້ວຍຈິດໃຈເອັນດູສົງ ສານຜູ້ຄົນ

"ເຮົາສົງສານຄົນເຫລົ່ານີ້ ເພາະເຂົາຄ້າງຢູ່ກັບເຮົາໄດ້ສາມາວັນແລ້ວ ແລະບໍ່ມີອາຫານຈະກິດ" **ມາຣະໂກ 8:2**

ພະເຢຊູຊົງສົງສານເຂົາຈຶ່ງຊົງຢື່ນພະຫັດຖືກຕ້ອງຄົນນັ້ນ ຕັດແກ່ເຂົາວ່າ "ເຮົາພໍໃຈແລ້ວ ຈົ່ງຫາຍ ເຖີດ" **ມາຣະໂກ 1:41**

GCI

4. ຕ້ອງເປັນຄົນທີ່ມີ**ຄວາມຮູ້** ແລະ**ສົມດຸນ**

"ເມື່ອທ່ານມາຈົ່ງເອົາເສື້ອຄຸມຊຶ່ງຂ້າພະເຈົ້າໄດ້ຝາກໄວ້ກັບຄາປັສ ທີ່ເມືອງໂຕອັດສະມາພ້ອມກັບໜັງ ສື ແລະສິ່ງທີ່ສຳຄັນທີ່ສຸດຄືໜັງສືທີ່ຂຽນເທິງແຜ່ນໜັງ" **2ຕີໂມທຽວ 4:13**

ຕົວຢ່າງ ຄວາມຮູ້ທົ່ວໄປຂອງໂປໂລ **1ໂກຣິນໂທ 10:23**

"ເພາະເຫດນີ້ເອງ ທ່ານຈົ່ງອົດສາຈົນສຸດກຳລັງທີ່ຈະເອົາຄຸນນະທຳເພີ່ມຄວາມເຊື່ອ ເອົາຄວາມຮູ້ເພີ່ມຄຸນນະທຳ" **2ເປໂຕ 1:5**

"ບາງຄັ້ງ ບັນຫາທາງຈິດວິທະຍາເຊັ່ນ ຄວາມຊຶມເສົ້າ ຄວາມກັງວົນ ຄວາມຢ້ານທີ່ລົບກວນໃຈ ອາລົມທີ່ຄວບຄຸມບໍ່ໄດ້ ບັນຫາທາງເພດ ການຂີ້ຕົວະທີ່ແກ້ບໍ່ໄດ້ ອາລົມແປປວນ ເປັນຜົນມາຈາກການທີ່ຄົນພະຍາຍາມຮັບມືກັບຄວາມຕ້ອງການທາງດ້ານຈິດໃຈ ຊຶ່ງບໍ່ໄດ້ຮັບການຕອບສະໜອງ"

ຄວາມຕ້ອງການພື້ນຖານທາງດ້ານຈິດໃຈມີ 3 ດ້ານຄື

ກ) ຄວາມຕ້ອງການທີ່ຈະມີ**ເຈົ້າຂອງ** ຫລືເປັນສ່ວນນຶ່ງຂອງສິ່ງນຶ່ງສິ່ງໃດ
ຂ) ຄວາມຕ້ອງການທີ່ຈະຮູ້ສຶກສ່າ**ຕົວເອງມີຄຸນຄ່າ**
ຄ) ຄວາມຕ້ອງການທີ່ຈະປະສົບ**ຄວາມສຳເລັດ**

5. ຕ້ອງເປັນຄົນທີ່ມີ**ຈະລິຍະທຳອັນດີ**

ກ) ເຮົາຕ້ອງບໍ່ໃຫ້ຄຳປຶກສາແກ່ສະມາຊິກຄຣິສຕະຈັກອື່ນໂດຍບໍ່ຂໍອະນຸຍາດຈາກສິດຍາພິບານ ຫລືຜູ້ນຳຂອງຜູ້ຮັບຄຳປຶກສາເສັຽກ່ອນ ຍົກເວັ້ນໃນກໍລະນີສຸກເສີນແທ້ໆ ຫລືສະມາຊິກຄົນ ນັ້ນໄດ້ອອກຈາກຄຣິສຕະຈັກນັ້ນມານານແລ້ວ

ຂ) ຜູ້ໃຫ້ຄຳປຶກສາຕ້ອງບໍ່ເວົ້າເຖິງຄຣິສຕະຈັກອື່ນໃນແງ່ລົບ ຫລືໃນທາງເສື່ອມເສັຽ

6. ຕ້ອງເປັນຄົນທີ່**ໄວ້ໃຈໄດ້**

ກ) ບຸກຄົນທີ່ທຽວຊຸບຊິບກໍເຜີຍຄວາມລັບ ແຕ່ບຸກຄົນທີ່ໄວ້ວາງໃຈໄດ້ຍ່ອມປົດບັງສິ່ງນຶ່ງສິ່ງໃດໄວ້ ໄດ້ **ສຸພາສິດ 11:13**

ຂ) ຈົ່ງຕັດສິນເລື່ອງຂອງເຈົ້າກັບເພື່ອນບ້ານຂອງເຈົ້າ ແລະຢ່າເຮັດໃຫ້ເຜີຍຄວາມລັບຂອງເຂົາຢ້ານວ່າຜູ້ທີ່ໄດ້ຍິນຈະນຳຄວາມອາຍມາສູ່ເຈົ້າ ແລະຊື່ສຽງຂອງເຈົ້າຈະມົວໝອງຢູ່ນານ **ສຸພາສິດ25:9-10**

7. ຕ້ອງເປັນຄົນທີ່ມີຄວາມຮູ້ໃນຂໍ້ພະຄຳພີ**ເປັນຢ່າງດີ**

ກ) **ເຮັບເລີ 4:12** ມີລິດທີ່ຈະເກີດຜົນ
ຂ) **2ຕີໂມທຽວ3:16** ເປັນປະໂຫຍດໃນການນຳພາຊີວິດ

## II. ປະເພດຕ່າງໆ ຂອງການໃຫ້ຄຳປຶກສາ

### *ກ. ການໃຫ້ຄຳປຶກສາໃນຊ່ວງສັ້ນ ແລະການໃຫ້ຄຳປຶກສາຢ່າງບໍ່ເປັນທາງການ*

ບາງຄັ້ງເມື່ອສິດຍາພິບານຕ້ອງອອກໄປຢ້ຽມຢາມສະມາຊິກ ອາດຈຳເປັນຕ້ອງໃຫ້ຄຳປຶກສາແບບບໍ່ເປັນ ທາງ ການ

GCI

1. ເປັນສິ່ງທີ່ເກີດຂຶ້ນໄດ້ໃນ**ທຸກທີ່ທຸກແຫ່ງ**

2. ຄອຍສັງເກດ**ເບິ່ງສັນຍານ**ບາງຢ່າງ

    ກ) ເດັກນ້ອຍ**ທີ່ຢູ່ບໍ່ເປັນສຸກ** (ຊຶ່ງຕາມປົກກະຕິສະທ້ອນໃຫ້ເຫັນວ່າ ຊີວິດສົມລົດກຳລັງຂາດ ຄວາມສຸກ)

    ຂ) ຄວາມຮູ້ສຶ**ກຂາຍໜ້າຢ່າງຜິດປົກກະຕິ**ເມື່ອເຫັນສິດຍາພິບານໄປຢ້ຽມ

    ຄ) **ອາການຊຶມເສົ້າ**- ລວມທັງອາການຜິດປົກກະຕິອື່ນໆ ເຊັ່ນ ນອນບໍ່ຫລັບ ກິນບໍ່ໄດ້ ເບື່ອສິ່ງບັນເທີງ ມັກກໍ່ກວນ..

    ງ) ການ**ເມົາເຫລົ້າ**ເລື້ອຍໆ

    ຈ) ມີການປ່ຽນແປງ**ພຶດຕິກຳ**ຕ່າງໆໄປຈາກເດີມຢ່າງສິ້ນເຊີງ

    ສ) ພະຍາຍາມ**ຫລົບໜ້າ**ສິດຍາພິບານ

    ຊ) ພະຍາຍາມສົນທະນາແຕ່ເລື່ອ**ງພືວເພີນ** ເພື່ອຈະໄດ້ບໍ່ຕ້ອງເຈາະລຶກໃນບັນຫາສ່ວນຕົວ

3. ໃຊ້ປະໂຫຍດທີ່ຊ່ວຍ**ເປີດ**ການສົນທະນາ

    - "ສະຖານນະການຊີວິດຂອງທ່ານຕອນນີ້ເປັນຈັ່ງໃດແດ່?"
    -"ທ່ານເປັນຢ່າງໃດແດ່ໃນຝ່າຍວິນຍານ?"
    -"ທ່ານຮູ້ສຶກເປັນຈັ່ງໃດກ່ຽວກັບ?"
    -"ທ່າທາງທ່ານກຳລັງຮູ້ສຶກທໍ້ໃຈກ່ຽວກັບເລື່ອງ.."

4. **ເປົ້າໝາຍ**ທີ່ເປັນໄປໄດ້ບາງປະການໃນການໃຫ້ຄຳປຶກສາໃນຊ່ວງສັ້ນໆ

    ກ) ສ້າງຄວາມສຳພັນ**ແບບພ້ອມ**ຈະສະໜັບສະໜູນເຂົາສະເໝີ
    ຂ) ຊ່ວຍລົດ**ຄວາມກົດດັນ** ໂດຍການພະຍາຍາມເຂົ້າໃຈໃນບັນຫາຂອງເຂົາ
    ຄ) ຊ່ວຍໃຫ້ເຂົາມີມຸມມອງທີ່ຊັ**ດຂຶ້ນ**ໃນຂະນະທີ່ເຂົາກຳລັງຮູ້ສຶກສັບສົນ
    ງ) ຊ່ວຍໃຫ້ຂໍ້ມູນທີ່ເປັນປະໂຫຍດ ຫລືສະເໜີ**ທາງເລືອກ**ອື່ນເພື່ອຊ່ວຍໃຫ້ເຂົາຕັດສິນໃຈ ໄດ້ຢ່າງມີປັນຍາ
    ຈ) ຮັກສາ**ຄວາມສຳພັນ**ໄວ້ເພື່ອປູພື້ນສຳລັບການໃຫ້ຄຳປຶກສາຄັ້ງຕໍ່ໄປ

## *ຂ. ການໃຫ້ຄຳປຶກສາເລື່ອງຄອບຄົວ ຫລື**ການສົມລົດ***

ກວ່າຮ້ອຍລະ **50 ຂອງບັນຫາ**ທີ່ພົບໃນການໃຫ້ຄຳປຶກສາຂອງສິດຍາພິບານ ຈະເປັນບັນຫາຄອບຄົວ
"ການສົມລົດທີ່ດີ ຄືການສົມລົດທີ່ທຸກຝ່າຍຊຶ່ງກ່ຽວຂ້ອງຈະມີໂອກາດສູງສຸດທີ່ຈະຈະເລີນຂຶ້ນສູ່ສັກກະຍະ ພາບທີ່ພະເຈົ້າຈັດຕຽມໄວ້ສຳລັບເຂົາໂດຍການຕອບສະໜອງຄວາມຕ້ອງການ ແລະສ້າງຄວາມເພິ່ງພໍ ໃຈແກ່ກັນແລະກັນ"

1. ເປົ້າໝາຍບາງປະການໃນການໃຫ້ຄຳປຶກສາບັນຫາຄອບຄົວ ແລະການສົມລົດ

    ກ) ຊ່ວຍເປີດທາງໃຫ້ມີ**ການສື່ຄວາມ**ກັນລະຫວ່າງສະມາຊິກໃນຄອບຄົວ
    ຂ) ຂັດຂວາງ ຢຸດຢັ້ງ ການ**ແກ້ເຜັດກັນ**ລະຫວ່າງສະມາຊິກໃນຄອບຄົວ
    ຄ) ຊີ້ໃຫ້ເຂົາເຫັນເຖິງຄວາມຈຳເປັນທີ່ຕ້ອງພັດທະນາໃຫ້ຄວາມສຳພັນໃນຄອບຄົວ**ແຂງ ແກ່ນຂຶ້ນ**
    ງ) **ຮຽນຮູ້**ຈາກຄວາມຂັດແຍ້ງທີ່ເກີດຂຶ້ນ
    ຈ) ຊີ້ໃຫ້ເຂົາເຫັນເຖິງດ້ານຕ່າງໆ ໃນການສົມລົດຊຶ່ງກຳລັງຖືກລະເລີຍ **ຂາດຄວາມຮັບຜິດຊອບ**

GCI

ສ) **<u>ວາງແຜນ</u>**ເພື່ອເສີມຈຸດອ່ອນໃນຄວາມສຳພັນ

2. ແນວທາງປະຕິບັດທີ່ຄວນຈົດຈຳໄວ້

ກ) ພະຍາຍາມຢ່າງເຕັມທີ່ ທີ່ຈະໃຫ້ຄຳປຶກສາແກ່**<u>ທັງສາມີແລະພັນລະຍາ</u>** ບໍ່ແມ່ນຄົນໃດຄົນນຶ່ງ

ຂ) ຖ້າສາມີ ຫລືພັນລະຍາ ຝ່າຍໃດຝ່າຍນຶ່ງບໍ່ໄດ້ຢູ່ນຳ ໃຫ້ເຮັດດັ່ງຕໍ່ໄປນີ້
1) ຢ່າໃຫ້ຜູ້ຮັບຄຳປຶກສານິນທາອີກຝ່າຍນຶ່ງລັບຫລັງ
2) ເນັ້ນໃຫ້ຜູ້ຮັບຕຳປຶກສາປັບປຽນພຶດຕິກຳຂອງຕົນເອງເປັນຫລັກ
3) ຫລີກລ້ຽງການລົມນອກເລື່ອງ

ຄ) ຖ້າທັງຄູ່ຢູ່ພ້ອມໜ້າກັນ ຈຶ່ງໃຫ້ໂອກາດທັ**<u>ງສອງຝ່າຍເທົ່າກັນ</u>**ທີ່ຈະໄດ້**<u>ສະແດງ</u>**ຄວາມຄິດເຫັນໃນແຕ່ລະເລື່ອງ

## ຄ. *ການໃຫ້ຄຳປຶກສາໃນຍາມ<u>ວິກິດການ</u>*

"ພະອົງຜູ້ຊົງຊູໃຈເຮົາໃນການທຸກຢ່າງທັງຊັ້ນຂອງເຮົາເພື່ອເຮົາຈະສາມາດຊູໃຈຄົນເຫລົ່ານັ້ນທີ່ມີຄວາມທຸກຢ່າງໃດຢ່າງນຶ່ງໄດ້ດ້ວຍຄວາມຊູໃຈ ຊຶ່ງຕົວເຮົາເອງໄດ້ຮັບຈາກພະເຈົ້າ" **2ໂກຣິນໂທ 1:4**

ຕະຫລອດຫລາຍສັດຕະວັດທີ່ຜ່ານມາ, ສິດຍາພິບານຄືຜູ້ທີ່ຄອຍຊ່ວຍເຫລືອສະມາຊິກເມື່ອເຂົາປະສົບກັບວິກິດການໃນຊີວິດ

ສິ່ງທີ່ທ້າທາຍສຳລັບສິດຍາພິບານ ການພະຍາຍາມຊ່ວຍໃຫ້ຜູ້ເຊື່ອທີ່ກຳລັງປະສົບກັບວິກິດໄດ້ເຫັນຄວາມສຳຄັນຂອງການມີຊີວິດໃນຄວາມສຳພັນອັນດີກັບພະເຈົ້າຜູ້ຊຶ່ງເຕັມດ້ວຍຄວາມຮັກໝັ້ນຄົງບໍ່ປ່ຽນແປງ ແມ່ນໃນທ່າມກາງພາວະວິກິດຂອງຊີວິດ

ຈິດຕະແພດຈຳຮັມແຄບແສນໄດ້ແບ່ງວິກິດອອກເປັນ2ປະເພດໄດ້ແກ່ - ວິກິດທີ່ເກີດຈາກ**ພັດທະນາການຂ**ອງຊີວິດກັບວິກິດແບບ**ອຸບັດຕິເຫດ**

### 1. ວິກິດທີ່ເກີດຈາກພັດທະນາການຂອງຊີວິດ

ເປັນວິກິດທີ່ເກີດຈາກພັດທະນາຂອງຊີວິດ

ຕົວຢ່າງເຊັ່ນ
ໄວໜຸ່ມສາວ
ການຄັ້ງຄັນ
ການໝົດປະຈຳເດືອນ
ການປົດກະສຽນ
ການເປັນພໍ່ຄົນແມ່ຄົນ

### 2. ວິກິດແບບອຸບັດຕິເຫດ

ຕາມປົກກະຕິແລ້ວຈະເກີດຈາກການສູນເສັຽຊຶ່ງບໍ່ໄດ້ຄາດຄິດມາກ່ອນ ເຊັ່ນ
ການຕົກງານ
ການເສັຽເງິນທອງທີ່ສະສົມໄວ້
ການສູນເສັຽຕຳແໜ່ງ
ການສູນເສັຽບຸກຄົນອັນເປັນທີ່ຮັກ

GCI

ຕົວຢ່າງອື່ນໆ ຊຶ່ງເປັນສາເຫດຂອງວິກິດແບບອຸບັດຕິເຫດ

ປະສົບອຸບັດຕິເຫດ
ຄວາມເຈັບປ່ວຍ
ການນອກໃຈ ຫລືຢ່າຮ້າງ
ໄພພິບັດຕາມທຳມະຊາດ ເຊັ່ນ ນ້ຳຖ້ວມ ແຜ່ນດິນໄຫວ
ສົງຄາມ

3. **ສັນຍານໃສແງ່ລົບໃນການຕອບສະໜອງຕໍ່ວິກິດ**

ກ) **ການບໍ່ຍອມຮັ**ບວ່າກຳລັງປະສົບບັນຫານັ້ນ
ຂ) **ການໜີບັນຫາ** ເຊັ່ນ ກິນເຫລົ້າ ໃຊ້ຢາເສບຕິດ
ຄ) **ການປະຕິເສດ**ບໍ່ຍອມຮັບ ຫລືຊອກຫາຄວາມຊ່ວຍເຫລືອ
ງ) ການບໍ່ສາມາ**ສະແດງຄວາມຮູ້**ສຶກອອກມາ ຫລືບໍ່ສາມາດຄວບຄຸມຄວາມຮູ້ສຶກໃນແງ່ລົບ
ຈ) ການບໍ່**ສາມາດຄິດເຖິງທາງອອກ**ຕ່າງໆໄດ້ເລີຍ
ສ) **ການໂທດຄົນອື່**ນວ່າເປັນເປັນຕົ້ນເຫດຂອງບັນຫາ
ຊ) ການປຶກສາຈາກ**ເພື່ອນຝູງ** ຫລືສະມາຊິກໃນຄອບຄົວ

## ງ. *ການໃຫ້ຄຳປຶກສາແບບກຸ່ມ*

1. ຂໍ້ດີຂອງການໃຫ້ຄຳປຶກສາແບບກຸ່ມ

ກ) ບາງຄັ້ງການໃຫ້ຄຳປຶກສາຮ່ວມກັນເປັນກຸ່ມ**ຈະເກີດຜົນດີ**ກວ່າການໃຫ້ຄຳປຶກ ສາເປັນສ່ວນຕົວ

ຂ) ຊ່ວຍປະຫຍັດ**ເວລາ**

ຄ) ຄົນຊຶ່ງບໍ່ກ້າຮັບຄຳປຶກສາເປັນສ່ວນຕົວອາດຈະ**ຍອມມາຮັບຄຳປຶ**ກສາຮ່ວມ ກັບຄົນອື່ນໃນກຸ່ມ

ງ) ເປັນໂອກາດສ້າງ**ຄວາມສຳພັນ** ແລະຊ່ວຍແບກພາລະແກ່ກັນແລະກັນ **ຄາລາ ເຕັຽ 6:2**

2. ແນວທາງໃນການໃຫ້ຄຳປຶກສາແບບກຸ່ມ

ກ) ຢ່າຈັດກຸ່ມທີ່ໃຫຍ່ເກີຍໄປ ຕາມປົກກະຕິແລ້ວບໍ່ຄວນເກີນກຸ່ມລະ **15 ຄົນ**

ຂ) ຈົ່ງຈຳໄວ້ວ່າ ນີ້ບໍ່ແມ່ນຊ່ວງເວລາສອນ ຫລືບັນລະຍາຍເມື່ອແບ່ງປັນເປັນເວລາ15ນາທີແລ້ວຄວນໜູນໃຈໃຫ້ຜູ້ຮັບຄຳປຶກສາໄດ້ມີສ່ວນສະແດງຄວາມຄິດ **ເຫັນຕອບສະໜອງດ້**ວຍ

ຄ) ໜູນໃຈໃຫ້ຄົນ**ທີ່ງຽບທີ່ສຸດ** ໄດ້ເວົ້າຫລືແບ່ງປັນນຳ

## ຈ. *ການໃຫ້ຄຳປຶກສາລະຍະຍາວ ຫລືໃຫ້ຄຳປຶກສາແບບເລິກ*

ຄົນບາງຄົນຈຳເປັນຕ້ອງຮັບຄຳປຶກແບບໄລຍະຍາວຫລືແບບເລິກ ການໃຫ້ຄຳປຶກສາແບບນີ້ຈຳເປັນຕ້ອງໃຊ້ **ເວລາ** ແລະພະລັງ ງານດ້ານ**ອາລົມ**ຫລາຍ

## ສ. *ການໃຫ້ຄຳປຶກສາແບບປະເຊີນໜ້າ*

"ແຕ່ເມື່ອເຄຟາມາເຖິງອັນຕິໂອເຊັຽແລ້ວ ຂ້າພະເຈົ້າກໍໄດ້ຂັດຄ້ານທ່ານຊື່ໆໜ້າ ເພາະວ່າທ່ານເຮັດຜິດ" **ຄາລາເຕັຽ 2:11**

1. ການໃຫ້ຄຳປຶກສາແບບປະເຊີນໜ້າ ຄືການເຮັດໃຫ້ຜູ້ຮັບຄຳປຶກສາຍອມປະເຊີນໜ້າກັບ**ບັນຫາຂ**ອງຕົນເອງແບບກົງໄປກົງມາ

GCI

2. ເປົ້າໝາຍຄືການຊ່ວຍໃຫ້ຜູ້ຮັບຄຳປຶກສາເຂັ້ມແຂງຂຶ້ນໃນຈິດສຳນຶກທາງດ້ານສິນລະທຳ **<u>ເພື່ອບໍ່ໃຫ້</u>**ເກີດບັນຫາອີກໃນອານາຄົດ
3. ສະຖານະການທີ່ຈຳເປັນຕ້ອງໃຫ້ຄຳປຶກສາແບບປະເຊີນໜ້າ

    ກ) ພຶດຕິກຳທີ່**<u>ຜິດກົດໝາຍ</u>** ຫລື**<u>ຜິດສິນລະທຳ</u>**

    ເຊັ່ນນາທານຕ້ອງປະເຊີນໜ້າກັບດາວິດໃນເລື່ອງທີ່ທ່ານປະພຶດຜິດສິນລະທຳ
    **2ຊາມູເອນ 12:1-14**

    ຂ) ພຶດຕິກຳໃດໆ ທີ່ສັງຄົມ ຫລືຄຣິສຕະຈັກທ້ອງຖິ່ນ ຫລືພະຄຳພີຖືວ່າເປັນ**<u>ຄວາມຜິດ</u>**

    ຄ) ພຶດຕິກຳໃດໆທີ່ກໍ່ໃຫ້ເກີດຄວາມ**<u>ແຕກແຍກ</u>**ໃນຄຣິສຕະຈັກ

4. ການໃຫ້ຄຳປຶກສາແບບປະເຊີນໜ້າ ປະກອບໄປດ້ວຍຂັ້ນຕອນຕ່າງໆ ດັ່ງຕໍ່ໄປນີ້

    ກ) ເວົ້າກັບຜູ້ຮັບຄຳປຶກສາເຖິງ**<u>ບັນຫາ</u>**ຂອງເຂົາ ຢ່າງກົງໄປກົງມາ
    ຂ) ເຮັດໃຫ້ເຂົາຮູ້ສຶກວ່າເຮົາ**<u>ຍອມຮັບ</u>** ແລະພ້ອມຈະ**<u>ສະໜັບສະໜູນ</u>**ເຂົາ
    ຄ) ນຳຜູ້ຮັບຄຳປຶກສາ**<u>ໃຫ້ສາລະພາບ</u>**ຄວາມບາບຂອງເຂົາ
    ງ) ເຮັດໃຫ້ເຂົາຮູ້ສຶກໝັ້ນໃຈວ່າພະເຈົ້າຈະຊົງ**<u>ຍົກໂທດບາບ</u>**ຂອງເຂົາແລະເຂົາຕ້ອງຍົກໂທດ **<u>ໃຫ້ຕົວເອງ</u>**ດ້ວຍ
    ຈ) ຊ່ວຍໃຫ້ເຂົາຈັດການຊົດເຊີຍ ເພື່ອ**<u>ແກ້ໄຂຄວາມຜິດ</u>**
    ສ) ພັດທະນາຮູບແບບ**<u>ພຶດຕິກຳ</u>**ໃໝ່ໃຫ້ແກ່ເຂົາ
    ຊ) ເສີມສ້າງຄວາມ**<u>ຈະເລີນ</u>**ຝ່າຍວິນຍານດ້ວຍຄຳອະທິຖານ ການອ່ານພະຄຳພີ ແລະການສາມັກ ຄີທຳ

5. ລະມັດລະວັງໃຫ້ເຮັດທຸກສິ່ງດ້ວຍຄວາມຮັກ
    "ທຸກສິ່ງຊຶ່ງທ່ານເຮັດນັ້ນ ຈົ່ງເຮັດດ້ວຍຄວາມຮັກ" **1ໂກຣິນໂທ16:14**

## III. <u>ພຶດຕິກຳປ້ອງກັນຕົນເອງ</u>

ເຮົາແຕ່ລະຄົນຕ່າງກໍໃຊ້ວິທີການເຫລົ່ານີ້ໃນການປົກປ້ອງຕົນເອງເປັນຄັ້ງຄາວ ເຊັ່ນການປ້ອງກັນຕົນເອງທາງ ກາຍ ໃນໜັງສື"ການໃຫ້ຄຳປຶກສາ"

ດຣ. ເຟຣັດ ເຈ ກຣີຟ ກ່າວເຖິງວິທີການປ້ອງກັນຕົວເອງ 11 ປະການ ໄວ້ດັ່ງນີ້:

### *ກ. <u>ການຝັນກາງເວັນ</u>*

ເປັນຮູບແບບໜຶ່ງຂອງການໜີບັນຫາ

### *ຂ. <u>ການຫາຂໍ້ແກ້ຕົວ</u>*

ມາຈາກຄຳສັບໃນພາສາກຣີກທີ່ແປວ່າ ເຫດຜົນ

ບາງຄົນຖືວ່າວິທີນີ້ເປັນຂໍ້ອ້າງທີ່ສັງຄົມຍອມຮັບໄດ້ ເຂົານັກຍົກເຫດຜົນຕ່າງໆນານາມາແກ້ຕົວໃນພຶດຕິກຳຂອງ ຕົນເອງ ບາງຄັ້ງເຮົາເອີ້ນວິທີການນີ້ວ່າ "ອາງຸ່ນສົ້ມ"

### *ຄ. <u>ການໂທດຄົນອື່ນ</u>*

ຄືວິທີໂຍນຄວາມຜິດໃຫ້ຄົນອື່ນ

GCI

**ໃນປະຖົມມະການບົດທີ່ 3 ອາດາມໂທດເອວາ** ສ່ວນເອວາໂທດມານຊາຕານ

## *ຈ. ການສະແດງຕົວຢູ່ຝ່າຍດຽວກັນກັບຜູ້ທີ່ປະສົບຄວາມສຳເລັດ*

ຄືພຶດຕິກຳບ່າຍບ່ຽງບັນຫາ ໂດຍການພະຍາຍາມຢູ່ຕໍ່ໜ້າຄົນທີ່ບຸກຄະລິກດີຫລືມີຄວາມສາມານກວ່າຕົນເອງ

## *ສ. ການປະຕິເສດ*

ຄືການບໍ່ຍອມຮັບເລີຍວ່າຕົນເອງມີບັນຫາ ຫລືໄດ້ເຮັດຜິດ

## ຊ. ການຮຽກຮ້ອງຄວາມສົນໃຈ

ບາງຄົນມີຈຸດອ່ອນເລື່ອງຄວາມນັບຖືຕົນເອງແຕ່ແທນທີ່ຈະຍອມຮັບ ກັບພະຍາຍາມເວົ້າອວດຕົວຕະຫລອດ ເວລາ ເຂົາເປັນເໝືອນເດັກນ້ອຍທີ່ສົ່ງສຽງຮ້ອງໄຫ້ເພື່ອຮຽກຮ້ອງ ຄວາມສົນໃຈ

**ມາຣະໂກ 12:38-40** ກ່າວເຖິງພວກຟາລີຊາຍທີ່ມັກຮຽກຮ້ອງຄວາມສົນໃຈ

ກ) ໃສ່ເສື້ອຄຸມຍາວ
ຂ) ມັກໃຫ້ຄົນຄຳນັບໃນທີ່ສາທາລະນະ
ຄ) ເລືອກນັ່ງໃນຕຳແໜ່ງທີ່ສຳຄັນ
ງ) ອະທິຖານຍືດຍາວເພື່ອອວດຄົນອື່ນ

## *ຍ. ການຄິດໃນແງ່ລົບ*

ຄືຄົນຊຶ່ງຢາກໃຫ້ຄົນສົນໃຈຕົນເອງ ໂດຍການທຳຕົວໃນແງ່ລົບ ແລະມັກວິພາກວິຈານຄົນອື່ນ

## *ດ. ການຖອຍຫລັງ*

ແປຕາມຕົວອັກສອນ ຄືການກ້າວຖອຍຫລັງຄືສະຖານະການທີ່ຄົນຍ້ອນກັບໄປຢູ່ໃນເວລາທີ່ມີຄວາມສຸກຂອງຊີວິດ

## *ຕ. ການເກັບກົດ*

ເປັນການ "ກົດລົກລົງໄປ" ໝາຍຄວາມວ່າການພະຍາຍາມເຊື່ອງຄວາມຊົງຈຳທີ່ເຈັບປວດ ແລະຄວາມທຸກໃຈຕ່າງໆໄວ້ໃນຈິດໃຕ້ສຳນຶກ

## *ຖ. ການລະບາຍຄວາມກ້າວລ້າວ*

ຄືການລະບາຍຄວາມຮຸນແຮງໃສ່ຄົນອື່ນແທນຄົນທີ່ເຮັດໃຫ້ເຈັບໃຈເຊັ່ນ ຊາຍຄົນນຶ່ງຖືກເຈົ້ານາຍດ່າໃນບ່ອນເຮັດວຽກແຕ່ບໍ່ສາມາດດ່າຕອບໄດ້ເມື່ອກັບໄປເຖິງບ້ານຈຶ່ງລະບາຍອາລົມຮ້າຍໃສ່ເມັຽ ແລະລູກຂອງຕົນໂດຍບໍ່ມີເຫດຜົນ

# IV. ຂັ້ນຕອນພື້ນຖານໃນການໃຫ້ຄຳປຶກສາ

### *ກ. ການປະເມີນສະຖານະການ*

1. ປະເມີນລັກສະນະຂອງບັນຫາ

ຈາກພະທຳ **1 ເທຊະໂລນິກ 5:25** ເຮົາເຂົ້າໃຈວ່າພະເຈົ້າຊົງສ້າງມະນຸດຂຶ້ນໃຫ້ມີວິນຍານ ຈິດໃຈ ແລະຮ່າງກາຍ ດັ່ງນັ້ນການຈະຊ່ວຍຜູ້ຮັບຄຳປຶກສາໄດ້ ເຮົາຕ້ອງປະເມີນເບິ່ງລັກສະນະຂອງບັນຫາ

GCI

ເປັນບັນຫາ**ຝ່າຍວິນຍານ** ຊຶ່ງເກີດຈາກອົງປະກອບຝ່າຍວິນຍານຫລືບໍ່?
ຫລືເປັນບັນຫາທາງ**ດ້ານອາລົມ** ຊຶ່ງເກີດຈາກອົງປະກອບທາງດ້ານຈິດໃຈ?
ຫລືເປັນບັນຫາ**ທາງກາຍ** ຊຶ່ງເກີດຈາກອົງປະກອບຝ່າຍຮ່າງກາຍ?
ຫລືເປັນບັນຫາທີ່ເກີດຈາກ**ທັງສາມ**ດ້ານລວມກັນ?

ກ) **ອົງປະກອບຝ່າຍວິນຍານ**

ລອງຖາມຕົວເອງ ດ້ວຍຄຳຖາມຕໍ່ໄປນີ້

- ບັນຫາເກີດຈາກຄວາມບາບ ຫລືຄວາມຮູ້ສຶກຜິດຫລືບໍ່?
- ເ ປັນເພາະບໍ່ເຊື່ອຟັງພະວັດຈະນະຫລືບໍ່?
- ຜູ້ຮັບຄຳປຶກສາອ່ານພະຄຳພີເປັນປະຈຳວັນຫລືບໍ່?
- ຜູ້ຮັບຄຳປຶກສາອະທິຖານເປັນປະຈຳທຸກວັນຫລືບໍ່?
- ຜູ້ຮັບຄຳປຶກສາຮ່ວມສາມັກຄີທຳໃນຄຣິສຕະຈັກໃດເປັນປະຈຳຫລືບໍ່?

ຂ) **ອົງປະກອບທາງດ້ານຈິດໃຈ**

ລອງຖາມຕົວເອງເພີ້ມເຕີມ ດ້ວຍຄຳຖາມຕໍ່ໄປນີ້

- ຊີວິດໃນໄວເດັກຂອງຜູ້ຮັບຄຳປຶກສາເປັນຢ່າງໃດແດ່?
- ຜູ້ຮັບຄຳປຶກສາເປັນລູກຄົນທີ່ເທົ່າໃດໃນຄອບຄົວ?
- ບັນຫາເກີດຈາກຄວາມຕ້ອງການດ້ານຈິດໃຈທີ່ບໍ່ໄດ້ຮັບການຕອບສະໜອງຫລືບໍ່?
- ຄວາມຕ້ອງການທີ່ຈະມີເຈົ້າຂອງ ຫລືເປັນສ່ວນນຶ່ງຂອງສິ່ງນຶ່ງສິ່ງໃດ
- ຄວາມຕ້ອງການທີ່ຈະຮູ້ສຶກວ່າຕົວເອງມີຄຸນຄ່າ
- ຄວາມຕ້ອງການທີ່ຈະປະສົບຄວາມສຳເລັດ

ຄ) **ອົງປະກອບທາງດ້ານຮ່າງກາຍ**

ຜູ້ຮັບຄຳປຶກສາໄດ້ຮັບການກວດສຸກຂະພາບຢ່າງລະອຽດແລ້ວຫລືຍັງ?

2. ປະເມີນ**ລະດັບຂ**ອງບັນຫາ

ສາສະໜາຈານ ພອລ ເວລເທີ ແຫ່ງສະຫະລັດອະເມລິກາ ໄດ້ແບ່ງບັນຫາອອກເປັນ 5ດ້ານຄື

ກ) **ບັນຫາ** ປະເດັນຂອງເລື່ອງຊຶ່ງຍັງມີທາງແກ້ໄຂ
ຂ) **ຄວາມທຸກ** ປະເດັນຂອງເລື່ອງຊຶ່ງບໍ່ສາມາດແກ້ໄຂໄດ້ງ່າຍ ຫລືໜ້າພໍໃຈ
ຄ) **ວິກິດ** ສະພາວະຊຶ່ງກຳລັງລຸກລາມໄປຕາມປົກກະຕິຈະເປັນຊ່ວງເວລາສັ້ນໆແຕ່ຈຳເປັນຕ້ອງເຮັດອັນໃດລົງໄປໃນທັນທີທັນໃດເປັນສິ່ງທີ່ເຮັດໃຫ້ຜູ້ທີ່ມີບັນຫາບໍ່ສາມາດຮັບມືກັບສະຖານະການນັ້ນໆໄດ້
ງ) **ຕື່ນ** ເປັນພາວະແຫ່ງຄວາມຢ້ານ ຊຶ່ງຜູ້ທີ່ຕົກຢູ່ໃນບັນຫາຈະຮູ້ສຶກສັບສົນ ແລະໄຮ້ເຫດຜົນ
ຈ) **ຕົກຕະລຶງ** ອາການງຶນງົງຫລືໝົດຄວາມຮູ້ສຶກຊຶ່ງຈິດຂອງຄົນຈະຢຸດທຳງານໄປຊົ່ວຂະນະນຶ່ງຫລືຫລາຍຊົ່ວໂມງ

## ຂ. *ການຄົ້ນຫາຂໍ້ແທ້ຈິງ*

**ສຸພາສິດ 20:5** ຄວາມປະສົງໃນໃຈຂອງຄົນຄືນ້ຳເລິກ ແຕ່ຄົນທີ່ມີຄວາມເຂົ້າໃຈຈະສາມາດໂພງມັນອອກມາໄດ້

**1. ຄຳຖາມ**

GCI

ກ) ພະຍາຍາມຢ່າໃຊ້ຄຳຖາມປະເພດ "ເປັນຫຍັງ" ເພາະຄຳວ່າ "ເປັນຫຍັງ" ສື່ໄປທາງ**ແງ່ລົບ**ຊຶ່ງຈະເຮັດໃຫ້ຜູ້ຮັບຄຳປຶກສາຮູ້ສຶກວ່າຕົວເອງກຳລັງຖືກ**ຕັດສິນ**

ຂ) ຫລີກລ້ຽງຄຳຖາມທີ່ເຮັດໃຫ້ເຂົາຕອບເປັນ**ຄຳໆດຽວ**

ຄ) ຢ່າສະແດງທ່າທາງ **ປະຫລາດໃຈຫລືຕົກຕະລຶງ**ທີ່ໄດ້ຮັບຮູ້ຂໍ້ແທ້ຈິງ

ງ) ລວບລວມຂໍ້ແທ້ຈິງແບບຈັບຕ້ອງໄດ້ ດີກວ່າສະຫລຸບລາຍລະອຽດແບບນາມມະ ທຳ

- ໃຜແດ່ທີ່ກ່ຽວຂ້ອງກັບສະຖານະການນີ້?
- ພວກເຂົາກ່ຽວຂ້ອງກັນຢ່າງໃດແດ່?

**2. ການເບິ່ງ**

ບາງຄັ້ງຜູ້ຮັບຄຳປຶກສາຮູ້ສຶກວ່າມຸມມອງຕໍ່ສະຖານະການຂອງເຂົາຖືກຕ້ອງ ທັ້ງໆທີ່ມຸມ ມອງຂອງເຂົາຜິດ

## *ຄ. ການແນະແນວທາງ*

1. ການແນະແນວທາງຕ້ອງຕັ້ງຢູ່ເທິງພື້ນຖານຂອງພະຄຳພີ ພະວັດຈະນະປະກອບດ້ວຍສິດທິອຳນາດຂອງພະເຈົ້າ

**ເພງສັນລະເສີນ 119**

**ຂໍ້ 35** ຂໍໃຫ້ຂ້າພະອົງໄປໃນທາງພະບັນຍັດຂອງພະອົງ ເພາະຂ້າພະອົງຍິນດີໃນທາງນັ້ນ
**ຂໍ້105** ພະວັດຈະນະຂອງພະອົງເປັນໂຄມສຳລັບເທົ້າຂອງຂ້າພະອົງ
ແລະເປັນຄວາມສະຫວ່າງແກ່ທາງຂອງຂ້າພະອົງ
**ຂໍ້130**ການຄລີ່ຄາຍພະວັດຈະນະຂອງພະອົງໃຫ້ຄວາມສະຫວ່າງທັງໃຫ້ຄວາມເຂົ້າໃຈແກ່ຄົນ ຮູ້ນ້ອຍ
**ຂໍ້ 133**ຂໍຊົງໃຫ້ຕີນຂອງຂ້າພະອົງໝັ້ນຄົງຢູ່ໃນພະດຳລັດຂອງພະອົງ ຂໍຢ່າຊົງໃຫ້ຄວາມບາບ ຜິດໃດໆມີອຳນາດເໜືອຂ້າພະອົງ

2. ໜູນໃຈໃຫ້ຜູ້ຮັບຄຳປຶກສາ ປ່ຽນແປງວິທີຄິດເສັຽໃໝ່

"ເມື່ອຄົນຄິດໃນໃຈຢ່າງໃດ ຕົວເຂົາກໍເປັນຢ່າງນັ້ນ" **ສຸພາສິດ 23:7**

3. ໃຫ້ການແນະແນວທາງແບບຊັດເຈນ ຈັບຕ້ອງໄດ້

ຜູ້ຮັບຄຳປຶກສາ ຕ້ອງການຮູ້ຈັກວິທີປະຕິບັດແບບຊັດເຈນເຈາະຈົງບໍ່ແມ່ນຄຳແນະນຳທີ່ເປັນນາມ ມະທຳແບບກ້ວາງໆ

4. ຢ່າສະໜັບສະໜູນການຕັດສິນໃຈແບບເຮັ່ງຮ້ອນ

**ສຸພາສິດ 19:2** ຄົນທີ່ບໍ່ມີຄວາມຮູ້ກໍບໍ່ດີ ແລະບຸກຄົນທີ່ກ້າວຕີນໝັກກໍມັກພາດຜິດ

**ຢາໂກໂບ 1:8** ເຂົາເປັນຄົນສອງໃຈບໍ່ໝັ້ນຄົງໃນບັນດາທາງທີ່ຕົນປະພຶດນັ້ນ

5. ວາງແນວທາງປະຕິບັດທີ່ສົມເຫດສົມຜົນ
6. ປະຍຸກໃຊ້ ຫລັກການບຳບັດໂດຍການກະທຳ
7. ໃຫ້ຜູ້ຮັບຄຳປຶກສາຍອມສັນຍາທີ່ຈະປະຕິບັດຕາມຄຳແນະນຳ

ກະລຸນາຈື່ໄວ້ວ່າພະວິນຍານບໍລິສຸດ ຄືອົງທີ່ປຶກສາຈິ່ງເພິ່ງພາພະອົງໃນການຊ່ວຍເຫລືອຜູ້ຮັບຄຳ ປຶກສາ
**ໂຢຮັນ 16:7** ຖ້າເຮົາບໍ່ໄປ ອົງພະຜູ້ຊ່ວຍກໍຈະບໍ່ສະເດັດມາຫາທ່ານ ແຕ່ຖ້າເຮົາໄປແລ້ວເຮົາກໍຈະໃຊ້ ພະອົງມາຫາທ່ານ

GCI

8. ໃຫ້ຈື່ວ່າການອະທິຖານມີລິດເດດ

**ໂຢຮັນ 14:13** ສິ່ງໃດທີ່ທ່ານທັງຫລາຍຈະຂໍໃນນາມຂອງເຮົາ ເຮົາຈະເຮັດສິ່ງນັ້ນເພື່ອວ່າພະບິດາຈະຊົງໄດ້ຮັບກຽດອັນຍິ່ງໃຫຍ່ທາງພະບຸດ

## V. ທັກສະພື້ນຖານໃນການໃຫ້ຄຳປຶກສາ

ກ. ສ້າງຄວາມສະໜິດສະໜົມ

**ໂຢຮັນ 4:7** ມີຍິງຊາວສະມາເລັຽຄົນນຶ່ງມາຕັກນ້ຳ ພະເຢຊູຕັດກັບນາງວ່າ "ຂໍນ້ຳໃຫ້ເຮົາດື່ມແດ່" ພະເຢຊູຊົງສ້າງຄວາມຄຸ້ນເຄີຍກັບຍິງຊາວສະມາເລັຽ ໂດຍການຂໍນ້ຳດື່ມຊຶ່ງຕໍ່ມາໄດ້ນຳໄປສູ່ການແບ່ງປັນພະກິດຕິຄຸນ ແລະພາຍຫລັງພະເຢຊູໄດ້ປະເຊີນໜ້າກັບນາງໃນເລື່ອງຄວາມບາບແຫ່ງການລ່ວງປະເວນີ

ຂ. ຟັງຢ່າງຕັ້ງໃຈ

**ຢາໂກໂບ 1:19** ເບິ່ງກ່ອນພີ່ນ້ອງທີ່ຮັກຂອງຂ້າພະເຈົ້າ ຈົ່ງຮູ້ຂໍ້ນີ້ຈົ່ງໃຫ້ທຸກຄົນໄວໃນການຟັງ ຊ້າໃນການເວົ້າ ຊ້າໃນການຮ້າຍ

ເຮົາຕ້ອງຝຶກຈິດໃຈຂອງເຮົາບໍ່ໃຫ້ຟຸ້ງຊ່ານ ແຕ່ມີສະມາທິ
ສຸພາສິດ 18:2 ຄົນໂງ່ບໍ່ເພີດເພີນໃນຄວາມເຂົ້າໃຈ ແຕ່ເພີດເພີນໃນການສະແດງຄວາມຄິດເຫັນຂອງຕົນເທົ່ານັ້ນ

ຄ. ຢ່າດ່ວນສະຫລຸບເລື່ອງໄວເກີນໄປ

**ສຸພາສິດ 18:13** ຖ້າຄົນນຶ່ງຄົນໃດຕອບກ່ອນທີ່ເຂົາໄດ້ຍິນ ກໍເປັນຄວາມໂງ່ ແລະຄວາມອັບອາຍຂອງເຂົາ ເຮົາຕ້ອງໃຊ້ຄວາມລະມັດລະວັງເປັນພິເສດ ໂດຍສະເພາະຢ່າງຍິ່ງຖ້າຕ້ອງກ່ຽວຂ້ອງກັບຄົນຫລາຍຝ່າຍ

**ສຸພາສິດ 18:17** ບຸກຄົນຜູ້ທຸະແຫລງຄະດີຂອງຕົນກ່ອນກໍເບິ່ງຄືເປັນຝ່າຍຖືກ ຈົນກວ່າຝ່າຍກົງກັນຂ້າມຈະມາສອບສວນເຂົາ

ງ. ການແນະນຳໄປຍັງຜູ້ໃຫ້ຄຳປຶກສາຄົນອື່ນ ຖ້າມັນເກີນຄວາມສາມາດຂອງທ່ານ ບໍ່ແມ່ນເລື່ອງໂງ່ເຂົາອັນໃດທີ່ຈະແນະນຳໃຫ້ຜູ້ຮັບຄຳປຶກສາໄປປຶກສາກັບຄົນອື່ນເປັນເລື່ອງສະຫລາດ ແລະເປັນປະໂຫຍດເສັຽອີກທີ່ຈະເຮັດຢ່າງນັ້ນຖ້າມີຄວາມຈຳເປັນ

## VI. ພັນທະກິດກັບຜູ້ນຳທີ່ລົ້ມລົງໃນຄວາມບາບ

### *ກ. ທັກສະຕໍ່ຜູ້ນຳແບບສົມເຫດສົມຜົນ*

"ສົມເຫດສົມຜົນ" ເພາະຈິດໃຕ້ສຳນຶກຂອງເຮົາມັກຈະສ້າງພາບທີ່ບໍ່ສົມເຫດສົມຜົນໄວ້ຫລາຍ

1. ເຂົາບໍ່ແມ່ນຄົນສົມບູນແບບ

**ຟີລິບບອຍ 3:12** ບໍ່ແມ່ນວ່າຂ້າພະເຈົ້າໄດ້ແລ້ວ ຫລືສຳເລັດແລ້ວແຕ່ຂ້າພະເຈົ້າກຳລັງບາກບັ່ນມຸ້ງໄປເພື່ອຂ້າພະເຈົ້າຈະໄດ້ສວຍເອົາໄວ້ເປັນຂອງຕົນ ຢ່າງທີ່ພະເຢຊູຄຣິດໄດ້ຊົງສວຍຂ້າພະເຈົ້າໄວ້ເປັນຂອງພະອົງແລ້ວ

2. ເຂົາເປັນແຕ່ມະນຸດທຳມະດາ

**ຢາໂກໂບ 5:17** ທ່ານເອລີຢາກໍເປັນມະນຸດທີ່ມີສະພາບຄືກັບເຮົາທັງຫລາຍ ສິ່ງທີ່ພະຄຳພີເນັ້ນ

GCI

ໃນຕອນນີ້ຄື ໃນຖານະທີ່ເປັນມະນຸດທຳມະດາຄົນນຶ່ງ ທ່ານເອລີຢາກໍຕ້ອງປະເຊີນກັບການທົດລອງໃຈ ເຊັ່ນດຽວກັບເຮົາທັງຫລາຍ ເຂົາອາດພ່າຍແພ້ຕໍ່ການທົດລອງໄດ້

3. ເຂົາມີຈຸດອ່ອນ

ສິ່ງທີ່ເນັ້ນໃນຕອນນີ້ຄື ຜູ້ນຳບາງຄົນອາດຈະມີປະສົບການຊົ່ວຮ້າຍໃນອາດີດຊຶ່ງອາດມີສ່ວນໃນການ ເຮັດໃຫ້ເຂົາລົ້ມລົງໄດ້ແຕ່ໂດຍພະຄຸນຂອງພະເຈົ້າບໍ່ວ່າເຂົາຈະມີຈຸດອ່ອນພຽງໃດ ພະເຈົ້າກໍຍັງສາມາດ ໃຊ້ຊີວິດເຂົາໄດ້

ກ) ໂມເຊ ໂມເຊ ເປັນຄົນຫຸນຫັນພັນແລ່ນ ຈຸດອ່ອນຂໍ້ນີ້ຄືງເປັນເຫດທີ່ເຮັດໃຫ້ເຂົາລົງ ມືຂ້າ ຄົນ **ອົບພະຍົບ 2:12**

ຂ) ແຊມຊັນ ເພາະຕັນຫາຂອງເນື້ອໜັງໃນຕົວແຊມຊັນ ເຮັດໃຫ້ເຂົາຕ້ອງພົບຄວາມລະອາຍ ແລະກາຍເປັນຂະເລີຍ

**ຜູ້ວິນິໄສ 14:1-2** ເຫັນຍິງຊາວຟີລິດສະເຕັຽ..
ຈົ່ງນຳຍິງນັ້ນມາໃຫ້ເຮົາ...

**ຜູ້ວິນິໄສ 16:1** .. ແຊມຊັນ..ຍິງໂສເພນີ...

## *ຂ. ອົງປະກອບທີ່ເຮັດໃຫ້ຜູ້ນຳລົ້ມລົງ*

ເຮົາຕົກຕະລຶງເມື່ອໄດ້ຍິນຂ່າວວ່າຜູ້ນຳລົ້ມລົງໃນບາບ ຫລືເປັນຄົນໜ້າຊື່ໃຈຄົດແຕ່ບໍ່ມີອັນໃດເຮັດໃຫ້ພະ ເຈົ້າປະຫລາດໃນໄດ້

**ເຮັບເລີ 4:13** ບໍ່ມີສິ່ງນຶ່ງສິ່ງໃດເຊື່ອງໄວ້ພົ້ນພະເນດພະເຈົ້າ ແຕ່ກົງກັນຂ້າມທຸກສິ່ງປາກົດແຈ້ງຕໍ່ພະອົງ ຜູ້ຊຶ່ງເຮົາຕ້ອງສຳພັນດ້ວຍ

1. ບໍ່ເຂົ້າ**ສະໜິດ** ຫລື**ດຳເນີນ**ຊີວິດກັບພະເຈົ້າ

**ຄາລາເຕັຽ 5:16** ແຕ່ຂ້າພະເຈົ້າບອກວ່າ ຈົ່ງດຳເນີນຊີວິດຕາມພະວິນຍານ ຢ່າສະໜອງຄວາມຕ້ອງການຂອງເນື້ອໜັງ

ກ) ຮັກສາຊີວິດໃຫ້ເຕັມໄປດ້ວຍ**<u>ການນະມັດສະການ</u>**

**ເພງສັນລະເສີນ 95:6** ມາເຖີດໃຫ້ເຮົາມານະມັດສະການແລະກາບລົງໃຫ້ເຮົາຄຸເຂົ່າລົງຕໍ່ພະເຈົ້າຜູ້ຊົງສ້າງພວກເຮົາ

ຂ) ພາວັນນາແລະເຊື່ອຟັງພະວັດຈະນະ

**ເພງສັນລະເສີນ 1:2** ແຕ່ຄວາມປິຕິຍິນດີຂອງຜູ້ນັ້ນຢູ່ໃນພະທຳຂອງພະເຈົ້າເຂົາພາວັນນາພະທຳຂອງພະອົງທັງກາງເວັນແລະກາງຄືນ

**ເພງສັນລະເສີນ119:11** ຂ້າພະອົງໄດ້ສະສົມພະດຳລັດຂອງພະອົງໄວ້ໃນໃຈຂອງຂ້າພະອົງ ເພື່ອຂ້າພະອົງຈະບໍ່ເຮັດບາບຕໍ່ພະອົງ

ຄ) ຮັກສາໄວ້ຊຶ່ງຊີວິດທີ່ເຕັມໄປດ້ວຍການອະທິຖານ

**ມັດທາຍ 26:41** ທ່ານທັງຫລາຍຈົ່ງເຝົ້າລະວັງ ແລະອະທິຖານເພື່ອທ່ານຈະບໍ່ຕ້ອງຖືກທົດລອງ ຈິດວິນຍານພ້ອມແລ້ວກໍຈິງແຕ່ກາຍຍັງອ່ອນກຳລັງ

GCI

2. **ຂາດການສາມັກຄີທຳ**ກັບພີ່ນ້ອງຄຣິສຕຽນ

"ແລະຂໍໃຫ້ເຮົາພິຈາລະນາເບິ່ງວ່າຈະເຮັດຢ່າງໃດ ຈຶ່ງຈະປຸກໃຈຊຶ່ງກັນ ແລະກັນໃຫ້ມີຄວາມຮັກ ແລະເຮັດຄວາມດີ ຢ່າຂາດການປະຊຸມເໝືອນຢ່າງລາງຄົນເຄີຍຂາດຢູ່ນັ້ນ ແຕ່ຈົ່ງເວົ້າໜູນໃຈ ກັນໃຫ້ ຫລາຍຂຶ້ນ ເພາະທ່ານທັງຫລາຍກໍຮູ້ຢູ່ວ່າວັນນັ້ນໃກ້ເຂົ້າມາແລ້ວ" **ເຮັບເລີ 10:24–25**

ບາງຄັ້ງຜູ້ນຳຕ້ອງຕົກຢູ່ໃນສະພາບເຊັ່ນນັ້ນ ເພາະເຂົາເຮັດໃຫ້ມັນເປັນໄປຢ່າງນັ້ນເອງ ແຕ່ບາງຄັ້ງ ເພາະຕຳແໜ່ງຂອງເຂົາຈຶ່ງເຮັດໃຫ້ເຂົາຮູ້ສຶກເຫງົາ

ຜູ້ນຳຫລາຍຄົນເປັນພະຍານຢືນຢັນວ່າການຢູ່ໃນຕຳແໜ່ງສູງສຸດນັ້ນອາດເຮັດໃຫ້ເຫງົາ

"ສອງຄົນດີກວ່າຄົນດຽວ ເພາະວ່າເຂົາທັງສອງໄດ້ຮັບຜົນຂອງງານດີ ດ້ວຍວ່າຖ້າຄົນນຶ່ງລົ້ມລົງອີກຄົນນຶ່ງຈະໄດ້ພະຍຸງເພື່ອນຂອງຕົນໃຫ້ລຸກຂຶ້ນ ແຕ່ວິບັດແກ່ຄົນນັ້ນທີ່ຢູ່ຄົນດຽວເມື່ອເຂົາລົ້ມລົງ ແລະບໍ່ມີຜູ້ອື່ນພະຍຸງຍົກເຂົາໃຫ້ລຸກຂຶ້ນ" **ປັນຍາຈານ 4:9–10**

3. **<u>ຄວາມຍິ່ງ</u>**

**ສຸພາສິດ 16:18** ຄວາມເຍີ່ຍິ່ງເດີນໜ້າການຖືກທຳລາຍ ແລະຈິດໃຈທີ່ຍະໂສນຳໜ້າການລົ້ມ

**ສຸພາສິດ 11:14** ບ່ອນໃດທີ່ບໍ່ມີການນຳ ປະຊາຊົນກໍລົ້ມລົງ ແຕ່ໃນທີ່ຊຶ່ງມີທີ່ປຶກສາຫລາຍຍ່ອມມີຄວາມປອດໄພ

4. ຊີວິດຄອບຄົວທີ່**<u>ຂາດຄວາມສຸກ</u>**

ສຸພາສິດ 21:9 ຢູ່ທີ່ມຸມເທິງຫລັງຄາເຮືອນ ດີກວ່າຢູ່ໃນເຮືອນຮ່ວມກັບຍິງຂີ້ທະເລາະ

**ສຸພາສິດ 12:4** ພັນລະຍາດີເປັນມຸງກຸດຂອງສາມີຕົນ ແຕ່ນາງຜູ້ທີ່ນຳຄວາມອັບອາຍມາກໍເໝືອນຄວາມເນົ່າເປື່ອຍໃນກະດູກສາມີ

5. **<u>ໃຊ້ອຳນາດ</u>**ໃນທາງທີ່ຜິດ

**1ເປໂຕ 5:3** ແລະບໍ່ແມ່ນເໝືອນເປັນເຈົ້ານາຍທີ່ຂົ່ມຂີ່ຜູ້ທີ່ຢູ່ໃຕ້ອຳນາດ ແຕ່ເປັນແບບຢ່າງແກ່ຝູງແກະ ນັ້ນ

6. **<u>ການປານີປານອມ</u>**ຢ່າງຍຶດຍິ່ນ

**ໂຣມ 12:2** ຢ່າປະພຶດຕາມຢ່າງຄົນໃນຍຸກນີ້ແຕ່ຈົ່ງຮັບການປ່ຽນແປງຈິດໃຈແລ້ວອຸປະນິໄສຂອງທ່ານຈຶ່ງຈະປ່ຽນໃໝ່ ເພື່ອທ່ານຈະໄດ້ຮູ້ນ້ຳພະໄທຂອງພະເຈົ້າຈະໄດ້ຮູ້ວ່າອັນໃດດີອັນໃດ ເປັນທີ່ຊອບພະໄທ ແລະອັນໃດດີທີ່ສຸດ

**1ເປໂຕ 5:8** ທ່ານທັງຫລາຍຈົ່ງສະຫງົບໃຈລະມັດລະວັງໃຫ້ດີ ດ້ວຍວ່າສັດຕູຂອງທ່ານຄື ມານຫຽວວົນວຽນໄປມາດັ່ງ ໂຕສິງແຜດສຽງຊອກຫາຄົນທີ່ມັນຈະກັດກິນໄດ້

7. ບັນຫາທາງ**<u>ດ້ານຈິດໃຈ</u>**

**3ໂຢຮັນ2** ທ່ານທີ່ຮັກຂ້າພະເຈົ້າອະທິຖານຂໍໃຫ້ທ່ານມີພະລານາມັຍສົມບູນ ແລະຈະເລີນສຸກທຸກປະ ການຢ່າງຈິດວິນຍານຂອງທ່ານຈຳເລີນຂຶ້ນ

**1ເທຊະໂລນິກ5:23** ຂໍໃຫ້ອົງພະເຈົ້າແຫ່ງສັນຕິສຸກຊົງໃຫ້ທ່ານເປັນຄົນບໍລິສຸດໝົດຈິດ ແລະຊົງຮັກສາທັ້ງວິນຍານຈິດໃຈ ແລະຮ່າງກາຍຂອງທ່ານໄວ້ໃຫ້ປັດສະຈາກການຕິຕຽນຈົນເຖິງວັນທີ່ພະເຢຊູຄຣິດເຈົ້າຂອງເຮົາສະເດັດມາ

8. **ບັນຫາໃນອາດີດທີ່ບໍ່ໄດ້ຮັບການແກ້ໄຂ**

**ລູກາ 3:9** ບັດນີ້ຂວານວາງໄວ້ທີ່ຕົ້ນໄມ້ແລ້ວ ແລະທຸກຕົ້ນທີ່ບໍ່ເກີດຜົນດີຈະຕ້ອງຕັດຖິ້ມ ແລ້ວໂຍນຖິ້ມໃນກອງໄຟ

GCI

9. **ຊາຕານ**ມຸ້ງເປົ້າໂຈມຕີຜູ້ນຳ

**1ພົງກະສັດ 22:31** ຝ່າຍພະຣາຊາປະເທດຊີເລັຽ ຊົງບັນຊາແມ່ທັບລົດຮົບທັງສາມສິບສອງຄົນວ່າ "ຢ່າຮົບກັບທະຫານໃຫຍ່ນ້ອຍ ແຕ່ມຸ້ງສະເພາະພະຣາຊາແຫ່ງອິດສະຣາເອນ"

**ເສຄາລີຢາ 13:7** ພະເຈົ້າຈອມໂຍທາຕັດວ່າ "ດາບເອີຍ" ຈົ່ງຕື່ນຂຶ້ນຕໍ່ສູ້ເມກບານຂອງເຮົາ ຈົ່ງຕໍ່ສູ້ຜູ້ທີ່ສະໜິດກັບເຮົາ ຈົ່ງຕີເມກບານ ແລະຝູງແກະນັ້ນຈະກະຈັດກະຈາຍໄປ ເຮົາຈະກັບມືຂອງເຮົາຕໍ່ສູ້ກັນຕົວເລັກຕົວນ້ອຍ

10. ພັດທະນາການຂອງອົງການ**<u>ຈິດຕະເພດ</u>**

ປະການສຸດທ້າຍຍົກມາຈາກຂໍ້ຂຽນຂອງດຣ.ໄຄແນໂຣມໃນໜັງສື "ເປັນຫຍັງຜູ້ນຳຄຣິສຕຽນຈຶ່ງລົ້ມລົງ ເຂົາອະທິບາຍໄວ້ວ່າ ມັນເປັນເລື່ອງຂອງ "ຈິດຕະເພດ" ຫລືຣໍໂມເຊັກຊໍ ຊຶ່ງກ່ຽວຂ້ອງລະຫວ່າງ ຄວາມຄິດກັບທັດສະນະຄະຕິໃນອາລົມ ຊຶ່ງຄົນໆນັ້ນມີຕໍ່ຕົວເອງ ໃນຖານະທີ່ເປັນສິ່ງມີຊີວິດທາງເພດ ແລະຕໍ່ຄົນອື່ນໃນຖານະສິ່ງມີຊີວິດທາງເພດເຊັ່ນກັນ

## *ຄ. ວິທີການຊ່ວຍເຫລືອເມື່ອປະເຊີນສະຖານະການດັ່ງກ່າວ*

**ຄາລາເຕັຽ 6:1** ເບິ່ງກ່ອນພີ່ນ້ອງທັງຫລາຍ ແມ່ນຈັບຜູ້ໃດທີ່ລະເມີດປະການໃດໄດ້ ທ່ານຊຶ່ງຢູ່ຝ່າຍ ພະວິນຍານຈົ່ງຊ່ວຍຜູ້ນັ້ນດ້ວຍໃຈອ່ອນສຸພາບໃຫ້ເຂົາກັບຕັ້ງຕົວໃໝ່ໂດຍຄິດເຖິງຕົວເອງ ຢ້ານວ່າທ່ານຈະຖືກຊັກຈູງໃຫ້ຫລົງໄປດ້ວຍ

1. ແຍກຂໍ້ແທ້ຈິງກັບ**<u>ຄຳນິນທາ</u>**ອອກຈາກກັນ

**1ຕີໂມທຽວ 5:19** ຢ່າຍອມຮັບຄຳກ່າວຫາຜູ້ປົກຄອງຄົນໃດ ເວັ້ນເສັຽແຕ່ຈະມີພະຍານສອງ ສາມຄົນ

2. **ເປັນ<u>ເພື່ອນ</u>ກັບເຂົາ**

**ສຸພາສິດ 17:17** ມິດສະຫາຍກໍມີຄວາມຮັກຢູ່ທຸກເວລາ ແລະພີ່ນ້ອງກໍເກີດມາເພື່ອຊ່ວຍກັນຍາມທຸກຍາກ

**ສຸພາສິດ 18:24** ມີເພື່ອນທີ່ເສແສ້ງເຮັດເປັນເພື່ອນ ແຕ່ມີມິດບາງຄົນທີ່ໃກ້ຊິດຍິ່ງກວ່າພີ່ນ້ອງ

ພະວັດຈະນະ ແລະແບບຢ່າງຂອງພະເຢຊູ

**ໂຢຮັນ 15:14** ຖ້າທ່ານທັງຫລາຍປະພຶດຕາມທີ່ເຮົາສັ່ງທ່ານ ທ່ານກໍຈະເປັນມິດສະຫາຍຂອງເຮົາ

3. ສະແດງຄວາມ**<u>ເຫັນອົກເຫັນໃຈ</u>**ເຂົາ

**1ໂກຣິນໂທ12:12** ເຖິງກາຍນັ້ນເປັນກາຍດຽວ ກໍຍັງມີອະໄວຍະວະຫລາຍສ່ວນ ແລະອະໄວຍະ ວະເຫລົ່ານັ້ນແມ່ນຈະມີຫລາຍສ່ວນກໍຍັງເປັນກາຍດຽວກັນສັນໃດ ພະຄຣິດກໍຊົງເປັນສັນນັ້ນ
ຂໍ້ 26 ຖ້າອະໄວຍະວະສ່ວນໃດເຈັບປ່ວຍ ອະໄວຍະວະທັງໝົດກໍເຈັບປ່ວຍໄປດ້ວຍ

4. **<u>ຍົກໂທດ</u>**ໃຫ້ເຂົາ

**ລູກາ 6:37** "ຢ່າກ່າວໂທດເຂົາ ແລະທ່ານທັງຫລາຍຈະບໍ່ໄດ້ຖືກກ່າວໂທດ ຢ່າກ່າວໂທດເຂົາ ແລະທ່ານທັງຫລາຍຈະບໍ່ຖືກກ່າວໂທດ ຈົ່ງຍົກໂທດໃຫ້ເຂົາ ແລະເຂົາຈະຍົກໂທດໃຫ້ ທ່ານ

5. ຈັດການກັບຄວາມບາບໃນລະດັບທີ່**<u>ເໝາະສົມ</u>**

GCI

**ມັດທາຍ18:16-17**ໃນຖານະທີ່ເປັນພີ່ນ້ອງຊີ້ໃຫ້ເຫັນເຖິງຄວາມຜິດ ຂອງເຂົາ ແລະໃນຖານະທີ່ເປັນ ກາຍອັນດຽວກັນ ໃຫ້ຈັດການແກ້ໄຂໃນລະດັບຂອງຜູ້ນຳ

6. ຊ່ວຍໃຫ້ເຂົາກັບ**ຕັ້ງຕົວໃຫມ່**

**ໂຢຮັນ 21:15-17**

ການກັບຕັ້ງຕົວໃຫມ່ໃນແນວປະຕິບັດ ເຊັ່ນ

- ກ) ຈັດການນັດພົບກັບເຂົາເປັນປະຈຳ ເພື່ອໜູນໃຈແລະໃຫ້ຄຳປຶກສາ
- ຂ) ສົ່ງເຂົາໄປໃຫ້ຜູ້ຊ່ຽວຊານຊ່ວຍເຫລືອ
- ຄ) ຊ່ວຍເຫລືອໃນຄວາມຕ້ອງການດ້ານວັດຖຸ ຈົນເຂົາສາມາດຢືນເທິງລຳແຂ່ງຂອງຕົວເອງໄດ້

7. **ອະທິຖານ**ເພື່ອເຂົາ
**ມາຣະໂກ 9:23** ພະເຢຊູຈຶ່ງກ່າວແກ່ບິດານັ້ນວ່າ "ຖ້າຊ່ວຍໄດ້" ຊັ້ນບໍ່ ໃຜເຊື່ອກໍເຮັດໃຫ້ໄດ້ທຸກສິ່ງ"

# VII. ພັນທະກິດກັບຜູ້ທີ່ຊຶມເສົ້າ

## *ກ. ນິຍາມຂອງຄຳວ່າ ຊຶມເສົ້າ*

ເປັນສະພາບປ່ຽນແປງຂອງອາລົມ ຊຶ່ງເຮັດໃຫ້ຄວາມຮູ້ສຶກຂອງເຂົາຕົກຕ່ຳລົງ ເຂົາຈະເລີ່ມຮູ້ສຶກ..

- ເສົ້າໃຈ
- ການແຍກຕົວອອກຈາກຄົນອື່ນ
- ການໝົດຫວັງ
- ຄວາມເຢັນຊາ

## *ຂ. ໃຜແດ່ທີ່ໄດ້ຮັບຜົນກະທົບຈາກຄວາມຊຶມເສົ້າ*

ເກືອບທຸກຄົນເຄີຍມີປະສົບການກັບຄວາມຊຶມເສົ້າມາແລ້ວບໍ່ວ່າຈະຮັ່ງມີຫລືຍາກຈົນ ມີການສຶກສາຫລາຍ ຫລື ການສຶກສານ້ອຍ ຈາກການສຶກສາພົບວ່າ ພາວະຊຶມເສົ້າເກີດຂຶ້ນກັບຜູ້ຍິງໄດ້ຫລາຍກວ່າຜູ້ຊາຍ

ເຊັ່ນ ແມ່ນແຕ່ຄຣິສຕະຈັກ ຫລືຜູ້ຮັບໃຊ້ທີ່ຍິ່ງໃຫຍ່ຂອງພະເຈົ້າຕ່າງໆກໍຕ້ອງປະເຊີນກັບຄວາມຊຶມເສົ້າ

1. **ໂຢບ**
**ໂຢບ 6:1-2** ແລ້ວໂຢບຕອບວ່າ "ໂອ ຂ້າຢາກໃຫ້ຊັ່ງເບິ່ງຄວາມຮ້ອນໃຈຂອງຂ້າ ແລະເອົາຄວາມລຳບາກຍາກເຂັນຂອງຂ້າໃສ່ໄວ້ໃນຕາຊັ່ງ"
**ຂໍ້ 11** ຂ້າມີກຳລັງອັນໃດທີ່ຂ້າຈະຄອຍ ແລະອັນໃດເປັນອາວະສານຂອງ ຂ້າທີ່ຂ້າຈະຕ້ອງອົດທົນ

2. **ດາວິດ**
**ເພງສັນລະເສີນ 42:6** ຈິດໃຈຂອງຂ້າພະອົງຝໍ່ຟູ່ພາຍໃນຂ້າພະອົງ ເພາະສະນັ້ນຂ້າພະອົງຈຶ່ງລະລຶກເຖິງພະອົງຕັ້ງແຕ່ແຜ່ນດິນແຫ້ງແມ່ນ້ຳຈໍແດນ ແລະແຫ່ງພູເຂົາເຮີໂມນຕ້ອງແຕ່ເນີນມີຊາ

3. **ເຢເລມີ**
**ເຢເລມີ15:10** ແມ່ເອີຍ ວິບັດແກ່ຂ້ອຍ ທີ່ແມ່ເກີດຂ້ອຍມາ ເປັນຄົນທີ່ໃຫ້ເກີດການແກ່ງແຍ່ງ ແລະການຊິງດີແກ່ແຜ່ນດິນທັງສິ້ນ ຂ້ອຍກໍບໍ່ໄດ້ໃຫ້ຢືມຫລືຂ້ອຍກໍບໍ່ໄດ້ຢືມເຂົາ ແຕ່ເຂົາທຸກຄົນແຊ່ງຂ້າ

GCI

## *ຄ. ອັນໃດຄືສາເຫດຂອງຄວາມຊຶມເສົ້າ*

ເກືອບຈະທຸກສິ່ງສາມາດກໍ່ໃຫ້ເກີດພາວະຊຶມເສົ້າໄດ້ ເຫດການທີ່ເກີດຂຶ້ນກັບເຮົາ ເຊັ່ນ ຄວາມເຈັບປ່ວຍ ເສັຽຊັບ ຄວາມສົງສານຕົວເອງ ການອິດສາ ຄວາມຂົມຂື່ນ ຄວາມກັງວົນ

ເຫດການຕ່າງໆ ດັ່ງກ່າວຄວາມຈິງບໍ່ໄດ້ເປັນສາເຫດຂອງຄວາມຊຶ່ເສົ້າ ແຕ່ວິທີການທີ່ເຮົາປະເມີນສະຖາ ນະການ ຫລືຕອບສະໜອງຕໍ່ເຫດການຕ່າງຫາກທີ່ເປັນຕົວກຳໜົດອາລົມຂອງເຮົາ

ດຣ.ອັດເຍີດ ເອລລິສ ໄດ້ອະທິບາຍເຖິງຄວາມສຳພັນລະຫວ່າງເຫດເກນ ກັບການຕອບສະໜອງທີ່ນຳໄປສູ່ອາລົມທີ່ຕາມມາ

| | | |
|---|---|---|
| ກ | = | ເຫດການທີ່ເກີດຂຶ້ນ |
| ຂ | = | ການປະເມີນສະຖານະການຂອງເຮົາ |
| ຄ | = | ອາລົມຕອບສະໜອງ |

ບໍ່ມີໃຜທີ່ກ້າວຈາກ ກ ໄປສູ່ ຄ ໄດ້ໂດຍບໍ່ຜ່ານ ຂ ຕາມກະຕິກາດັ່ງນີ້ບໍ່ມີເຫດການໃດຊຶ່ງເກີດຂຶ້ນທີ່ ສາມາດກໍ່ໃຫ້ເກີດອາລົມໃນທາງລົບໄດ້

ສາເຫດພື້ນຖານຂອງຄວາມຊຶມເສົ້າ

1. ສາເຫດຝ່າຍຮ່າງກາຍ
2. ສາເຫດທາງດ້ານຈິດໃຈ
3. ສາເຫດຝ່າຍວິນຍານ

## *ງ. ສາເຫດຝ່າຍຮ່າງກາຍ*

ແພດບາງທ່ານວິນິໄສສາເຫດຂອງພາວະຊຶມເສົ້າໄວ້ວ່າເປັນ "ເອັນໂດຈີເນັຽ" ຊຶ່ງໝາຍຄວາມວ່າເປັນ "ອາການທີ່ເກີດຈາກພາຍໃນຕົວເອງ"

ຕໍ່ໄປນີ້ເປັນຕົວຢ່າງຂອງອາການຊຶມເສົ້າທີ່ມີສາເຫດມາຈາກບັນຫາທາງດ້ານຮ່າງກາຍ

1. ໄລຍະກ່ອນມີປະຈຳເດືອນ
   ຜູ້ຍິງບາງຄົນ ຈະມີຄວາມຊຶມເສົ້າເດືອນລະຄັ້ງ ເພາະການປ່ຽນແປງຂອງຮໍໂມນໃນຮ່າງກາຍ

2. ໄວໝົດປະຈຳເດືອນ ຫລືໄວທອງ
   ເນື່ອງຈາກມີການປ່ຽນແປງທາງເຄມີໃນຮ່າງກາຍ ເຮັດໃຫ້ຄົນໃນໄວນີ້ຮູ້ສຶກຊຶມເສົ້າ ຜູ້ຍິງຈະປະສົບກັບພາວະນີ້ໃນຊ່ວງອາຍຸ 45-55 ປີ ສ່ວນຜູ້ຊາຍຈະເປັນຊ່ວງອາຍຸ 60-65 ປີ

3. ໄລຍະຫລັງຄອດ
   ຫລັງການຄອດລູກ ຮ່າງກາຍຂອງຜູ້ຍິງຈະມີການປ່ຽນແປງທາງເຄມີຊຶ່ງອາດ ກໍ່ໃຫ້ເກີດອາການຊຶມເສົ້າໄດ້

4. ຄວາມເຈັບປ່ວຍທາງກາຍ
   ເມື່ອຄົນເຮົາເຈັບປ່ວຍ ຈະມີສານພິດເກີດຂຶ້ນໃນປະລິມານສູງ (ຈາກເຊື້ອໄວຣັສ ເປັນຕົ້ນ) ໃນບໍລິເວນສະໜອງ ແລະລະບົບເສັ້ນປະສາດຊຶ່ງສະພາບດັ່ງກ່າວຈະເຮັດໃຫ້ເຮົາເກີດອາການຊຶມ ເສົ້າ

5. ຕ່ອມບົກຜ່ອງ
   ເຊັ່ນຕ່ອມໄທລອຍຜິດປົກກະຕິ ສາມາດເຮັດໃຫ້ເກີດອາການຊຶມເສົ້າໄດ້

GCI

6. ການຂາດສິ່ງຈຳເປັນຂັ້ນພື້ນຖານ
ການນອນບໍ່ພຽງພໍ ຫລືການຂາດອາຫານທີ່ເໝາະສົມ ເປັນສ່ວນນຶ່ງທີ່ເຮັດໃຫ້ເກີດອາການຊຶມເສົ້າ ເອລີຢາຮູ້ສຶກເມື່ອຍ ແລະໝົດເຫື່ອແຮງ ພະເຈົ້າຈຶ່ງເຮັດໃຫ້ເຂົານອນຫລັບ ແລະປະທານອາຫານແກ່ເຂົາ **1ພົງກະສັດ 19:4-6**

## ຈ. *ສາເຫດທາງດ້ານຈິດໃຈ*

ພຶດຕິກຳແລະທັດສະນະຄະຕິຂອງຜູ້ໃຫຍ່ສ່ວນໃຫຍ່ມີສາເຫດມາຈາກສະພາບຊີວິດ ແລະການລ້ຽງດູໃນໄວ ເດັກ ໄລຍະທີ່ມີຄວາມສຳຄັນຍິ່ງຄືຊ່ວງເວລາແຫ່ງຄວາມປະທັບໃຈໃນຊ່ວງອາຍຸ 6ປີ ທຳອິດ ປະສົບການໃນ ຊ່ວງດັ່ງກ່າວອາດເຮັດໃຫ້ຄົນເຮົາຮູ້ສຶກຂາດຄວາມນັບຖືຕົນເອງຫລືການຮູ້ສຶກຖືກປະຕິເສດ ຊຶ່ງປະສົບການເຫລົ່ານີ້ອາດເປັນອົງປະກອບນຶ່ງທີ່ເຮັດໃຫ້ຄົນເຮົາເກີດຄວາມຮູ້ສຶກຊຶມເສົ້າ

ສາເຫດບາງປະການທີ່ມີສ່ວນເຮັດໃຫ້ເກີດອາການຊຶມເສົ້າ

1. ຄວາມສຳພັນທີ່<u>**ຫລົ້ມເຫລວ**</u> ຊຶ່ງໃນທີ່ສຸດຈະນຳໄປສູ່ຄວາມຮູ້ສຶກຖືກປະຕິເສດ
2. ຄວາມໂກດທີ່ເກັບກົດໄວ້
3. <u>**ການຮູ້ສຶກຜິດ**</u>ໂດຍບໍ່ຈຳເປັນ
ເປັນຄວາມຮູ້ສຶກຜິດໃນບາງເລື່ອງຊຶ່ງພະເຈົ້າບໍ່ໄດ້ຖືວ່າເປັນຄວາມຜິດເລີຍ ພໍ່ແມ່ທີ່ເຂັ້ມງວດແລະເອົາໃຈຍາກອາດເຮັດໃຫ້ລູກເກີດຄວາມຮູ້ສຶກຜິດຢ່າງນີ້ ແລະອາດຕິດຕໍ່ໄປເມື່ອເຂົາໂຕຂຶ້ນເປັນຜູ້ໃຫຍ່
4. ການມີຄວາມຄິດທີ່ຜິດ
ດຣ.ເດວິດ ດີ ເບີນ ໄດ້ເຮັດການທົດສອບພົບວ່າ ຮູບແບບການຄິດຂອງຄົນເຮົາມີຄວາມເຊື່ອມໂຍງກັບອາລົມ ແລະການຢຽວຢາໃຫ້ຫາຍຈາກພາວະຊຶມເສົ້າໄດ້
- ຄົນທີ່ມີອາການຊຶມເສົ້າ 40 ຄົນ ຖືກແບ່ງອອກເປັນ 2 ກຸ່ມ ໂດຍການສຸ່ມ
- ກຸ່ມທຳອິດ ໄດ້ຮັບການບຳບັດທາງຄວາມຄິດ ພ້ອມກັບໃຫ້ຢາ
- ກຸ່ມທີ່ສອງ ໄດ້ຮັບຢາເທົ່ານັ້ນ ບໍ່ມີການບຳບັດທາງຄວາມຜິດ

ຜົນຂອງການທົດສອບ ກຸ່ມທຳອິດໄດ້ຜົນດີຫລາຍໃນການຕ້ານຄວາມຊຶມເສົ້າໃນທຸກໆດ້ານ ຫລັງຈາກເຮັດການບຳບັດເປັນໄລຍະເວລາ 12 ອາທິດ

## ສ. *ສາເຫດຝ່າຍວິນຍານ*

1. ບາງຄັ້ງຄົນຮູ້ສຶກຊຶມເສົ້າເພາະມີຄວາມບາບຊ່ອນຢູ່ໃນຊີວິດ

ກ) ດາວິດ

**ເພັງສັນລະເສີນ 32:3-5** ເມື່ອຂ້າພະອົງບໍ່ແຈ້ງບາບຂອງຂ້າພະອົງ ຮ່າງກາຍຂອງຂ້າພະອົງກໍ່ລ່ວງໂລຍໄປໂດຍການຄ່ຳຄວນອັນຍັງຄ່ຳຂອງຂ້າພະອົງ ພະຫັດຂອງ ພະອົງໜັກຢູ່ເທິງຂ້າພະອົງທັງວັນທັງຄືນກຳລັງຂອງຂ້າພະອົງກໍ່ຫ່ຽວແຫ້ງໄປຢ່າງຄວາມຮ້ອນໃນໜ້າແລ້ງ ຂ້າພະອົງສາລະພາບບາບຂອງຂ້າພະອົງຕໍ່ພະອົງ ແລະຂ້າພະອົງບໍ່ໄດ້ເຊື່ອງບາບຜິດຂອງຂ້າພະອົງໄວ້ ຂ້າພະອົງທູນວ່າ “ຂ້າພະອົງຈະສາລະພາບການລະເມີດຂອງຂ້າພະອົງຕໍ່ພະເຈົ້າ” ແລ້ວພະອົງຊົງຍົກໂທດບາບຂອງຂ້າພະອົງ

ຂ) ອາສາ ຮູ້ສຶກຊຶມເສົ້າເພາະຄວາມອິດສາ **ເພັງສັນລະເສີນ 73:3** ເພາະຂ້າພະເຈົ້າ ອິດສາຄົນຈອງຫອງ ເມື່ອຂ້າພະເຈົ້າເຫັນຄວາມຈະເລີນຮຸ່ງເຮືອງຂອງຄົນອະທຳ
**ເພັງສັນລະເສີນ 73:16** ແຕ່ເມື່ອຂ້າພະອົງຕຶກຕອງວ່າ ຈະເຂົ້າໃຈເລື່ອງນີ້ໄດ້ຢ່າງໃດ ຂ້າພະອົງຮູ້ສຶກວ່າເປັນງານທີ່ອິດເມື່ອຍ

GCI

2. ການບຽດບຽນຂອງ**ຊາຕານ**

**1ເປໂຕ 5:8** ທ່ານທັງຫລາຍສະຫງົບໃຈຈົ່ງລະວັງໄວ້ໃຫ້ດີ ດ້ວຍວ່າສັດຕູຂອງທ່ານ ຄືມານ ວົນວຽນຢູ່ຮອບໆ ດັ່ງສິງຄຳລາມຫຽວໄປຊອກຫາຄົນທີ່ມັນຈະກັດກິນໄດ້

## *ຂ. ວິທີເຮັດພັນທະກິດກັບຜູ້ທີ່ຊຶມເສົ້າ*

1. ໜູນໃຈໃຫ້ຜູ້ຮັບຄຳປຶກສາເວົ້າບັນຫາຂອງເຂົາ

**1ພົງກະສັດ 19:9** ເບິ່ງແຖິດ ພະວັດຈະນະຂອງພະເຈົ້າມາເຖິງທ່ານ ແລະພະອົງຕັດກັບທ່ານວ່າ "ເອລີຢາເອີຍ ເຈົ້າເຮັດອັນໃດຢູ່ທີ່ນີ້"

2. ໜູນໃຈຜູ້ຮັບຄຳປຶກສາໃຫ້ໄປກວດສຸຂະພາບຢ່າງລະອຽດຖີ່ຖ້ວນ

3. ລອງສັງເກດເບິ່ງວ່າມີຮາກຂອງການບໍ່ໃຫ້ອະໄພ ຫລືຄວາມຂົມຂື່ນຊ້ອນຢູ່ຫລືບໍ່

ກ) ການບໍ່ໃຫ້ອະໄພຄົນອື່ນ **ມາຣະໂກ 11:25**
ຂ) ການບໍ່ໃຫ້ອະໄພຕົວເອງ **ມັດທາຍ 22:39**

4. ຮັບການປ່ຽນແປງຈິດໃຈເສັຽໃໝ່ໂດຍພະວັດຈະນະຂອງພະເຈົ້າ **ໂຢຮັນ 8:32,17:17**

5. ໃຫ້ຜູ້ຮັບຄຳປຶກສາປ່ຽນແປງຄຳເວົ້າເສັຽໃໝ່

**ມັດທາຍ 12:34** ດ້ວຍວ່າປາກນັ້ນເວົ້າຈາກສິ່ງທີ່ມາຈາກໃຈ
**ເຮັບເລີ 13:5-6** ເພາະວ່າພະອົງໄດ້ກ່າວວ່າ..
ເຫດສະນັ້ນເຮົາທັງຫລາຍອາດກ່າວດ້ວຍໃຈເຊື່ອໝັ້ນວ່າ...

6. ໃຫ້ຜູ້ຮັບຄຳປຶກສາປ່ຽນແປງຮູບແບບພຶດຕິກຳເສັຽໃໝ່

**2ໂກຣິນໂທ 5:7** ເພາະເຮົາດຳເນີນໂດຍຄວາມເຊື່ອ ບໍ່ແມ່ນຕາມທີ່ຕາເບິ່ງເຫັນ

7. ໜູນໃຈໃຫ້ເຂົາເອົາໃຈໃສ່ດູແລຮ່າງກາຍໃຫ້ດີ

ກ) ນອນຫລັບໃຫ້ພຽງພໍ **1ພົງກະສັດ 19:5** "ນອນຫລັບໄປ"
ຂ) ຮັບປະທານອາຫານໃຫ້ພໍເໝາະ **1ພົງກະສັດ 19:6** "ທ່ານລຸກຂຶ້ນຮັບປະທານແລ້ວກໍລົ້ມຕົວລົງນອນຕໍ່"
ຄ) ອອກກຳລັງກາຍໃຫ້ພຽງພໍ **1ພົງກະສັດ 19:8** "ທ່ານຢ່າງຕໍ່ໄປອີກ 40 ວັນ 40 ຄືນ"

8. ເຮັດບາງສິ່ງບາງຢ່າງເພື່ອຊ່ວຍເຫລືອຄົນອື່ນ

**ໂຢບ 42:10** ແລະພະເຈົ້າຊົງໃຫ້ໂຢບກັບສູ່ສະພາບດີເມື່ອທ່ານອະທິຖານເພື່ອສະຫາຍຂອງທ່ານ ແລະພະເຈົ້າປະທານໃຫ້ໂຢບມີຫລາຍເປັນສອງເທົ່າຂອງທີ່ມີຢູ່ກ່ອນ

9. ອະທິຖານເພື່ອຜູ້ຮັບຄຳປຶກສາ

**ເອຢາຊາ 6:11** ພະວິນຍານແຫ່ງພະເຈົ້າຊົງຢູ່ເໜືອຂ້າພະເຈົ້າເພາະວ່າພະເຈົ້າໄດ້ຊົງເຈີມຂ້າພະເຈົ້າໄວ້ເພື່ອນຳຂ່າວດີມາຍັງຜູ້ທີ່ທຸກໃຈ ພະອົງຊົງໃຊ້ຂ້າພະເຈົ້າມາໃຫ້ເລົ້າໂລມຄົນທີ່ຊອກຊ້ຳລະກຳໃຈ ແລະຮ້ອງປະກາດອິດສະລະພາບແກ່ບັນດາຊະເລີຍ ແລະບອກການເປີດເຮືອນຈຳອອກ ໃຫ້ແກ່ຜູ້ທີ່ຖືກຈຳຈອງ

GCI

# VIII. ພັນທະກິດກັບຄົນທີ່ຢາກຂ້າຕົວຕາຍ

## *ກ. ຕົວຢ່າງຄົນທີ່ຂ້າຕົວຕາຍໃນພະຄໍາພີ*

1. **ຊາອູນ 1ຊາມູເອນ 31:4**
ແລ້ວຊາອູນຮັບສັ່ງຄົນຖືອາວຸດຂອງພະອົງວ່າ "ຈົ່ງຊັກດາບອອກແທງເຮົາເສັຽໃຫ້ທະລຸ ເຖີດຢ້ານວ່າຄົນທີ່ບໍ່ໄດ້ເຂົ້າພິທີຕັດເຫລົ່ານີ້ຈະເຂົ້າມາແທງເຮົາ ເປັນການຫລິ້ນລຸ່ເຮົາແຕ່ຜູ້ຖືອາວຸດບໍ່ຍອມເຮັດຕາມເພາະເຂົາຢ້ານຫລາຍ ຊາອູນຈຶ່ງຊົງຊັກດາບຂອງພະອົງອອກ ຊົງລົ້ມທັບດາບນັ້ນ

(ເຫດຜົນຂອງຊາອູນ ຄືຄວາມຢ້ານ ແລະຄວາມຮູ້ສຶກສິ້ນຫວັງ)

2. **ເອທິໂທເຟລ 2ຊາມູເອນ 17:23**

ເມື່ອອາຫິໂທເຟລເຫັນວ່າເຂົາບໍ່ເຮັດຕາມຄໍາປຶກສາຂອງທ່ານ ກໍຜູກອານລາຂຶ້ນຂີ່ກັບ ໄປເຮືອນຂອງຕົນທີ່ຢູ່ໃນເມືອງຂອງຕົນເມື່ອສັ່ງເສັຽແລ້ວກໍຜູກຄໍຕາຍ ເຂົາຈຶ່ງເອົາສົບຝັງໄວ້ທີ່ອຸໂມງບິດາຂອງທ່ານ

(ເຫດຜົນຂອງເອທິໂທເຟລ ຄື ຄວາມຍິ່ງ)

3. **ສິມຣີ 1ພົງກະສັດ 16:18**

ແລະຢູ່ມາເມື່ອສິມຣີຊົງເຫັນວ່າເມືອງນັ້ນຕົກແລ້ວ ກໍສະເດັດເຂົ້າໄປໃນປ້ອມຂອງພະຣາຊວັງ ແລະຊົງເຜົາພະຣາຊວັງເສັຽ ແລະຊົງສິ້ນພະຊົນໃນກອງໄຟດ້ວຍ

(ເຫດຜົນຂອງຢູດາ ຄືຄວາມຮູ້ສຶກຜິດຢ່າງຮຸນແຮງ ແລະຄວາມທໍ້ແທ້)

4. ຢູດາ ມັດທາຍ 27:5

ຢູດາຈຶ່ງຖິ້ມເງິນນັ້ນໄວ້ໃນພະວິຫານ ແລະຈາກໄປ ແລ້ວເຂົາກໍອອກໄປຜູກຄໍຕາຍ

## *ຂ. ວິທີສັງເກດອາການຂອງຄົນທີ່ຢາກຂ້າຕົວຕາຍ*

1. **<u>ເວົ້າຂູ່</u>**
ຄົນທີ່ຂ້າຕົວຕາຍ ແປດໃນສິບຄົນ ຈະບອກໄວ້ລ່ວງໜ້າດັ່ງ ນັ້ນເຮົາຈຶ່ງຈໍາເປັນຕ້ອງ ຖືວ່າເປັນເລື່ອງຈິງຈັງຖ້າໄດ້ຍິນຄົນເວົ້າຢ່າງນີ້ ເຖິງແມ່ນວ່າມັນອາດຈະບໍ່ເກີດຂຶ້ນກໍຕາມ ບາງຄົນຂູ່ວ່າຈະຂ້າຕົວຕາຍເພື່ອບີບບັງຄັບໃຫ້ຄົນອື່ນເຮັດຕາມຄວາມຕ້ອງການຂອງເຂົາ

ຄົນທີ່ມັກຈະເວົ້າຂູ່ວ່າຈະຂ້າຕົວຕາຍໄດ້ແກ່

ກ) ຄົນມີບັນຫາທາງດ້ານອາລົມ
ຂ) ຄົນຊຶ່ງໝົດຄວາມນັບຖືກຕົວເອງແລ້ວ
ຄ) ຄົນຊຶ່ງຕ້ອງການຄໍາປຶກສາຢ່າງເຮັ່ງດ່ວນ

2. ການສະແດງອາການຂູ່

ກ) ອາດບໍ່ໄດ້ຂູ່ວ່າຈະຂ້າຕົວຕາຍ ແຕ່ສະແດງຄວາມຮູ້ສຶກດັ່ງຕໍ່ໄປນີ້ອອກມາ
- ໄຮ້ຄວາມຫວັງ
- ຊີວິດຢູ່ຢ່າງໄຮ້ຄວາມໝາຍ

GCI

- ຢາກຕາຍ
- ຖືກປະຕິເສດ ເຊັ່ນ “ ບໍ່ມີໃຜຕ້ອງການຂ້ອຍແລ້ວ “ ບໍ່ມີໃຜຮັກຂ້ອຍເລີຍ”
- ທໍ້ແທ້ສິ້ນຫວັງ
- ຮູ້ສຶກຜິດ

ຂ) ອາການຜິດປົກກະຕິຢ່າງອື່ນໆ
- ຫຍຸ້ງເຫຍີງ
- ສັບສົນ
- ໝົດທາງແກ້
- ກະວົນກະວາຍ
- ເຫງົາ
- ຕໍ່ຕ້ານ
- ແຍກຕົວຈາກສັງຄົມ
- ສູນເສັຽຄວາມສົນໃຈໃນກິດຈະກຳທີ່ເຄີຍມັກມາກ່ອນ

3. ໂດຍທົ່ວໄປເປັນຄົນທີ່ພົບກັບຄວາມສູນເສັຽຢ່າງໃຫຍ່ຫລວງ
   - ບຸກຄົນອັນເປັນທີ່ຮັກຕາຍໄປ
   - ສູນເສັຽຄູ່ຄອງ ເພາະການຢ່າຮ້າງ
   - ຕົກງານ
   - ສຸຂະພາບເສື່ອມ
   - ສູນເສັຽຄວາມລໍ່າລວຍ

4. ອາການຊຶມເສົ້າ ຈິດຕະແພດ ດາ ເອ ເມນນິເຈີ ສະແດງຂໍ້ຄິດເຫັນໄວ້ວ່າ “ທຸກຄົນທີ່ມີອາການຊຶມເສົ້າຢ່າງໜັກມີໂອກາດທີ່ຈະຂ້າຕົວຕາຍສູງ”
5. ອາການເຈັບປ່ວຍດົນນານ ຜູ້ທີ່ເຈັບປ່ວຍດ້ອຍໂລກທີ່ຕ້ອງຕາຍ ອາດຈະຮູ້ສຶກສິ້ນຫວັງ ແລະ ຂ້າຕົວຕາຍ
6. ໂລກທາງຈິດ ບາງຄັ້ງຜູ້ປ່ວຍໂລກຈິດອາດເຮັດໃນສິ່ງທີ່ບໍ່ມີເຫດຜົນ ເຊັ່ນ ການຂ້າຕົວຕາຍ
7. ຕົກເປັນທາດຂອງນິໄສບາງຢ່າງ ຄົນຕິດເຫລົ້າ ແລະຢາເສບຕິດ ບາງຄັ້ງອາດພະຍາຍາມຂ້າຕົວຕາຍ ເພາະຄວາມຮູ້ສຶກວ່າສະຖານະການຂອງຕົນເອງນັ້ນ ສິ້ນຫວັງ ແລະໝົດທາງແກ້ໄຂແລ້ວ

## *ຄ. ວິທີສັງເກດຄົນທີ່ມີຄວາມສ່ຽງສູງທີ່ຈະຂ້າຕົວຕາຍ*

ຕໍ່ໄປຄືອົງປະກອບທີ່ໃຊ້ໃນການປະເມີນຄວາມຮຸນແຮງຂອງການຂູ່ຂ້າຕົວຕາຍ ຊຶ່ງຈັດທຳໂດຍສູນປ້ອງກັນ ການຂ້າຕົວຕາຍແຫ່ງລອດ ແອນເຈລີສ

1. **ຜູ້ຊາຍ** ໂດຍທົ່ວໄປຜູ້ຊາຍພະຍາຍາມຂ້າຕົວຕາຍນ້ອຍກວ່າຜູ້ຍິງ ແຕ່ຖ້າຜູ້ຊາຍຕັດສິນໃຈຂ້າຕົວ ຕາຍຈະເຮັດໄດ້ສຳເລັດຫລາຍກວ່າຜູ້ຍິງ
2. ກຸ່ມຄົນທີ່ມີອາຍຸສູງກວ່າ ນີ້ບໍ່ໄດ້ໝາຍຄວາມວ່າຄົນອາຍຸນ້ອຍກວ່າບໍ່ໄດ້ມີຄວາມສ່ຽງສູງທີ່ຈະ ຂ້າຕົວ ຕາຍ
3. ແຕ່ຄົນທີ່ອາຍຸຫລາຍກວ່າ ມັກຈະບໍ່ຄ່ອຍມີອັນໃດທີ່ຕ້ອງຄິດເຖິງຫລາຍໃນອານາຄົດ
4. ແຜນການ ແລະວິທີການທີ່ເຈາະຈົງ ຖ້າທ່ານພົບວ່າຄົນທີ່ຕິດຂ້າຕົວຕາຍໄດ້ຕັດສິນໃຈເຖິງວິທີການ ແລະກຳນົດເວລາແນ່ນອນໄວ້ແລ້ວ ສະແດງວ່າເຂົາຕັ້ງໃຈທີ່ຈະເຮັດແທ້ ແລະອາດຮູ້ສຶກຈຳເປັນທີ່ຕ້ອງເຮັດຕາມນັ້ນ

GCI

5. ປະຫວັດຄວາມພະຍາຍາມຂ້າຕົວຕາຍ ເຖິງແມ່ນຈະມີສະຖິຕິວ່າ ຮ້ອຍລະ 65 ຂອງຄົນທີ່ເຄີຍຂ້າຕົວຕາຍຈະບໍ່ກັບໄປເຮັດຊ້ຳອີກ ແຕ່ເຮົາຕ້ອງລະມັດລະວັງຢ່າງຍິ່ງສຳລັບຄົນທີ່ເຄີຍພະຍາຍາມ ຂ້າຕົວຕາຍມາຫລາຍຄັ້ງ

6. ຄວາມສູນເສັຽໃຫຍ່ຫລວງ ຊຶ່ງຫາກໍ່ເກີດຂຶ້ນເມື່ອບໍ່ນານມານີ້ເຊັ່ນ ສູນເສັຽຄວາມຮັ່ງມີ ຫລືຄວາມສຳພັນ ອາດເປັນແນວໂນ້ມໃຫ້ຄົນຂ້າຕົວຕາຍ

7. ຄວາມຊຶມເສົ້າ ຄົນທີ່ມີຄວາມຊຶມເສົ້າຢ່າງຮຸນແຮງຈະບໍ່ຢາກມີຊີວິດຢູ່ຕໍ່ໄປອີກ

8. ການເສບຕິດ ສຳລັບຄົນທີ່ຍາກຫລຸດພົ້ນຈາກການເສບຕິດແຕ່ເຮັດບໍ່ໄດ້ອາດເກີດຄວາມຮູ້ສຶກສິ້ນຫວັງຢ່າງຮຸນແຮງ ເຊັ່ນຄົນທີ່ຕິດເຫລົ້າ ຫລືຢາເສບຕິດ

9. ບົກພ່ອງໃນການສື່ຄວາມກັບຄົນທີ່ມີຄວາມສຳຄັນໃນຊີວິດ ເຊັ່ນ ພໍ່ ແມ່ ຈິດຕະແພດ ສິດຍາພິບານ ອ້າຍ..

10. ການທີ່ຄອບຄົວປົກປ້ອງຕົນເອງ ໂດຍການກ່າວຕຳນິວ່າເປັນຄວາມຜິດຂອງຄົນທີ່ຄິດຂ້າຕົວຕາຍຝ່າຍດຽວ ຊຶ່ງຈະເຮັດໃຫ້ເຂົາຕັດສິນໃຈຂ້າຕົວຕາຍຂຶ້ນມາແທ້ໆ

11. ອາການປ່ວຍທາງຈິດ ຖ້າມີຄົນຊຶ່ງມີອົງປະກອບດັ່ງກ່າວຂ້າງເທິງ ແລະມີອາການປ່ວຍທາງຈິດດ້ວຍຈະເຮັດໃຫ້ເປັນໄປໄດ້ສູ່ທີ່ຈະຂ້າຕົວຕາຍ

## ງ. *ວິທີເຮັດພັນທະກິດກັບຄົນທີ່ຢາກຂ້າຕົວຕາຍ*

1. ສ້າງຄວາມ**<u>ສະໜິດສະໜົມ</u>**ກັບເຂົາ
   - ສະແດງຄວາມຫວ່ງໃຍ
   - ຕັ້ງໃຈຟັງ
   - ຕອບສະໜອງຕໍ່ຄວາມຮູ້ສຶກຂອງເຂົາ

2. ລວມລວມ**<u>ຂໍ້ມູນ</u>**
   - ຊື່ ແລະທີ່ຢູ່ຂອງເພື່ອນ ຫລືຍາດ
   - ປະຫວັດການຂ້າຕົວຕາຍ ເກີດຂຶ້ນເມື່ອໃດ? ເກີດຂຶ້ນໄດ້ຢ່າງໃດ?
   - ແຜນການປະຈຸບັນ ເປັນແຜນການຢ່າງໃດ?
   - ແຜນການໃນອານາຄົດ ເມື່ອໃດ? ຢ່າງໃດ?

3. ຖ້າຄົນທີ່ຢາກຂ້າຕົວຕາຍຕິດຕໍ່ທ່ານທາງໂທລະສັບ ພະຍາຍາມຂັດຂວາງພຶດຕິກຳດັ່ງກ່າວ ໂດຍ : - ພະຍາຍາມຊວນລົມ ໃນຂະນະທີ່ເກັບຂໍ້ມູນໄປນຳ
   - ໂທແຈ້ງຄອບຄົວ ເພື່ອນ ຫລືຕຳຫລວດ ໂດຍໃຊ້ໂທລະສັບອີກສາຍນຶ່ງ
   - ຊັກຊວນໃຫ້ຄົນທີ່ຮັບສາຍມາພົບປະກັບເຂົາ

4. ພະຍາຍາມຊັກຈູງເຂົາບໍ່ໃຫ້ເຮັດຕາມແຜນນັ້ນ
   ຄົນຊຶ່ງຢູ່ໃນອາການຢາກຂ້າຕົວຕາຍ ຫລາຍຄັ້ງຈະຮູ້ສຶກສັບສົນ ແລະບໍ່ມີເຫດຜົນ ໃຫ້ເວົ້າໃນທຳນອງທີ່ວ່າ"ສຳລັບເຈົ້າອາດເບິ່ງຄືວ່ານີ້ເປັນທາງອອກພຽງທາງດຽວ ແຕ່ເຈົ້າກຳລັງທຳລາຍໂອກາດຂອງຕົວເອງຂໍໃຫ້ຂ້ອຍຊ່ວຍເຈົ້າໂດຍການສະເໜີທາງອອກຢ່າງນີ້.."ຊີ້ໃຫ້ເຂົາເຫັນວ່າ "ຢ່າຂ້າຄົນ" ຊຶ່ງລວມເຖິງການຂ້າຕົວຕາຍນຳ

5. ໃຫ້ຄວາມຫວັງແກ່ເຂົາ
   ເມື່ອເຂົາກ່າວວ່າ "ຂ້ອຍຢາກຂ້າຕົວຕາຍ" ສະແດງວ່າຍັງມີຄວາມຫວັງຢູ່ ມັນສິ່ງສັນຍານວ່າເຂົາກຳລັງຕ້ອງການຄວາມຊ່ວຍເຫລືອ ຄົນທີ່ຄິດຈະຂ້າຕົວຕາຍຕ້ອງການ "ກອບ ອ້າງອີງຫລືສິ່ງຍຶດໜຽວໃນໃຈ" ຊຶ່ງໃນເວລາເຊັ່ນນັ້ນອາດເປັນການດີທີ່ຈະແນະນຳໃຫ້ເຂົາຮູ້ຈັກກັບ ອົງພະເຢຊູ

   "ພະເຈົ້າກ່າວວ່າ ເພາະເຮົາຮູ້ແຜນງານທີ່ເຮົາມີໄວ້ສຳລັບເຈົ້າ ເປັນແຜນງານເພື່ອສະຫວັດດີພາບ ບໍ່ແມ່ນເພື່ອທຸກຂະພາບ ເພື່ອຈະໃຫ້ອານາຄົດ ແລະຄວາມຫວັງໃຈແກ່ເຈົ້າແລ້ວເຈົ້າຈະທູນຂໍຕໍ່ເຮົາ ແລະມາ

GCI

ອະທິຖານຕໍ່ເຮົາ ແລະເຮົາຈະຟັງເຈົ້າ ເຈົ້າຈະສະແຫວງຫາເຮົາ ແລະພົບເຮົາເມື່ອເຈົ້າສະແຫວງຫາເຮົາດ້ວຍສິ້ນສຸດໃຈຂອງເຈົ້າ" **ເຢເລມີ 29:11-13**

ອັນທີ່ຈິງແລ້ວ ຄວາມວ່າງເປົ່າໃນໃຈຂອງເຂົາຈຳເປັນຕ້ອງຮັບການເຕີມເຕັມດ້ວຍພະຄຣິດ ພະຄຳພີຕອນອື່ນໆໄດ້ແກ່ **ເພງສັນລະເສີນ 34:6, 2ໂກຣິນໂທ4:8-9, 1ໂກຣິນໂທ10:13, ເຮັບເລີ 4:16 ແລະ 2ຕີໂມທຽວ 2:13**

6. ຢ່າເຮັດໃຫ້ເຂົາຮູ້ສຶກຜິດໜັກເຂົ້າໄປອີກຢ່າຕັດສິນ ຫລືວິຈານເຂົາແຕ່ພະຍາຍາມເຮັດໃຫ້ເຂົາເກີດ ຄວາມຮູ້ສຶກຍອມຮັບນັບຖືກຕົວເອງເພີ້ມຂຶ້ນ

ຂໍ້ພະຄຳພີກ່ຽວກັບການຮູ້ສຶກຜິດ

ໂຣມ 8:1
1ໂຢຮັນ 1:9
ເພງສັນລະເສີນ 103:12

ຂໍ້ພະຄຳພີກ່ຽວກັບການນັບຖືຕົນເອງ
ເພງສັນລະເສີນ 139:13-14
ໂຢຮັນ 3:16
ເອເຟໂຊ 2:10

7. ສົ່ງຕົວເຂົາໄປຫາຈິດຕະແພດທີ່ດີ ອາດເປັນປະໂຫຍດໃນການໃຫ້ມືອາຊີບໃນເລື່ອງນີ້ເຂົ້າມາຊ່ວຍ ເຫລືອ

8. ລົນນະລົງກຳລັງສະໜັບສະໜູນຈາກຄອບຄົວ ໃນສະຖານະການເຊັ່ນນີ້ຈຳເປັນຢ່າງຍິ່ງທີ່ທຸກຄົນໃນຄອບຄົວຕ້ອງຊ່ວຍກັນໃຫ້ກຳລັງໃຈ ແລະຄວາມຊ່ວຍເຫລືອຕ່າງໆ

9. ລົນນະລົງໃຫ້ເກີດການເບິ່ງແຍງຝ່າຍວິນຍານຢ່າງຕໍ່ເນື່ອງ ພະກາຍຂອງພະຄຣິດຄວນ ເຂົ້າມາກ່ຽວຂ້ອງໃນຕອນນີ້ **ເຮັບເລີ 10:24-25** ກ່າວເຖິງຄວາມສຳຄັນຂອງການສາມັກຄີທຳ

10. ອະທິຖານເພື່ອເຂົາ

## IX. ພັນທະກິດກັບຜູ້ທີ່ມີບັນຫາຄວບຄຸມອາລົມຮ້າຍບໍ່ໄດ້

### *ກ. ລາຍລະອຽດຈາກພະຄຳພີກ່ຽວກັບເລື່ອງຄວາມຮ້າຍ*

1. ພະເຈົ້າ **ເພງສັນລະເສີນ 78:49** ພະອົງຊົງປ່ອຍຄວາມຮ້າຍຂອງພະອົງມາເໜືອເຂົາ ທັງພະພິ ໂລດ ຄວາມກິ້ວ ແລະຄວາມທຸກລຳບາກ ຄືຄະນະທູດສະຫວັນຜູ້ທຳລາຍ

2. ໂມເຊ ອົບພະຍົບ 32:19 ພໍໂມເຊເຂົ້າມາໃກ້ຄ້າຍ ໄດ້ເຫັນຮູບງົວໜຸ່ມ ແລະຄົນເຕັ້ນລຳຄວາມໂມໂຫຂອງໂມເຊກໍເດືອດພຸ່ງຂຶ້ນ ທ່ານໂຍນແຜ່ນສີລາຖິ້ມແຕກເສັຽຢູ່ພູເຂົານັ້ນ

3. ເນເຫມີ **ເນເຫມີ 5:6** ເມື່ອຂ້າພະເຈົ້າໄດ້ຍິນສຽງຮ້ອງຂອງເຂົາ ແລະຖ້ອຍຄຳຂອງເຂົາ ຂ້າພະເຈົ້າກໍໃຈຮ້າຍຫລາຍ

### *ຂ. ຄວາມໃຈຮ້າຍບໍ່ໄດ້ເປັນຄວາມບາບສະເໝີໄປ*

1. **<u>ພະເຈົ້າ</u>**ຊົງສຳແດງຄວາມຮ້າຍ **ເພງສັນລະເສີນ7:11** ພະເຈົ້າຊົງເປັນຜູ້ພິພາກສາທີ່ຊອບທຳ ແລະເປັນຜູ້ປະທານຄຳພິພາກສາທຸກວັນ

ພະເຈົ້າບໍ່ມີບາບເລີຍ ແຕ່ພະອົງຊົງສຳແດງຄວາມຮ້າຍ ຄວາມຮ້າຍຄືສ່ວນນຶ່ງໃນລັກສະນະຂອງ ພະເຈົ້າ ດັ່ງນັ້ນໂດຍຕົວຂອງມັນເອງຈຶ່ງບໍ່ໄດ້ເປັນບາບ ຄວາມຮ້າຍຢ່າງພະເຈົ້າຄື ຄວາມຂຸ່ນເຄືອງຕໍ່ບາບ ແລະຄວາມອະທຳທັງສິ້ນ

GCI

2. ພະເຢຊູ ຊົງສຳແດງຄວາມຮ້າຍ **ມາຣະໂກ 3:5** ພະອົງມີພະໄທເປັນທຸກ ເພາະໃຈເຂົາແຂງກະດ້າງຫລາຍ ແລະໄດ້ທອດພະເນດເບິ່ງຮອບດ້ວຍພະພິໂລດ ແລະພະອົງຕຣັດແກ່ຄົນມືລີບນັ້ນວ່າ "ຈົ່ງຢຽດມືອອກເຖີດ" ເຂົາກໍຢຽດມືອອກ ແລະມືຂອງເຂົາກໍຫາຍເປັນປົກກະຕິ
   ພະເຢຊູຊົງຊຳລະພະວິຫານ **ໂຢຮັນ 2:14 – 16**

3. ຄຳແນະນຳຂອງໂປໂລ **ເອເຟໂຊ 4:26** ຈະຮ້າຍກໍຮ້າຍໄດ້ ແຕ່ຢ່າເຮັດບາບຢ່າໃຫ້ເຖິງຕາເວັນຕົກທ່ານຍັງຮ້າຍຢູ່

   ຂໍ້ພະຄຳພີຕອນນີ້ສະແດງໃຫ້ເຫັນວ່າ ມີຄວາມຮ້າຍບາງຢ່າງຊຶ່ງບໍ່ເປັນບາບ

## *ຄ. ຄວາມຮ້າຍທີ່ເປັນຄວາມບາບ*

ຄວາມຮ້າຍທີ່ເປັນຄວາມບາບ ຄືຄວາມຮ້າຍທີ່ປັດສະຈາກການຄວບຄຸມ ແລະກໍ່ຄວາມເສັຽຫາຍຂຶ້ນ ຊຶ່ງເປັນ ຜົນເສັຽຕໍ່

- ສຸຂະພາບຮ່າງກາຍ (ຂອງຕົນເອງ ແລະຂອງຄົນອື່ນ)
- ດ້ານຈິດໃຈ
- ຝ່າຍວິນຍານ
- ດ້ານສັງຄົມ

1. **<u>ຄວາມຮ້າຍ</u>**ທີ່ສະແດງອອກ ຫລື "ການລະເບີດ" ຖືເປັນຄວາມບາບ

   ສະຖານະການແບບນີ້ ເຮັດໃຫ້ເກີດຄວາມເສັຽຫາຍ ເພາະເປັນການພຸ່ງເປົ້າໄປຍັງພະລັງທາງອາລົມ ແລະມຸ້ງທຳລາຍຄົນອື່ນ

   ກ) ກາອິນ ປະຖົມການ 4:5 ກາອິນກໍຮ້າຍ ໜ້າບູດບຶ້ງ
   ຂໍ້ 8..ກາອິນກໍໂດດເຂົ້າຂ້າອາເບນນ້ອງຊາຍຂອງຕົນເສັຽ"
   ຂ) ອາສາ **2ພົງສາວະດານ 16:10** ອາສາຮ້າຍຜູ້ທຳນວາຍ ທ່ານຈຶ່ງຮ້າຍຢ່າງແຮງ ແລະຂັງເຂົາໄວ້ໃນຄຸກ
   ຄ) ຮາມານ **ເອສເທີ 3:15** ເມື່ອຮາມານເຫັນວ່າໂມລາເດໄຄ ບໍ່ຍອມຄຸກເຂົ່າ ຫລືສະແດງຄວາມຄຳນັບເຂົາ ເຂົາຈຶ່ງຮູ້ສຶກຮ້າຍ

   ຂໍ້ 6.. ເກີດຄວາມຄິດທີ່ຈະກຳຈັດໂມລາເດໄຄ ແລະບັນດາຊາວຢິວທັງປວງ..

   **ສຸພາສິດ 25:28** ຄົນທີ່ປັດສະຈາກການປົກຄອງຕົນເອງກໍເໝືອນເມືອງທີ່ປັກຫັກພັງ ແລະບໍ່ມີກຳແພງ

   ຕົວຢ່າງ ການສະແດງຄວາມຮ້າຍຊຶ່ງເຮັດໃຫ້ເກີດຄວາມເສັຽຫາຍ
   - ການກ້າວຮ້າວທາງວາຈາ ຫລືທາງກາຍ
   - ການດື່ມເຫລົ້າ
   - ເຮັດສິ່ງປະຊົດປະຊັນ ເຊັ່ນ ແກ້ງເສັງບໍ່ໄດ້ ຫລືລ່ວງປະເວນີ

2. ຄວາມຮ້າຍທີ່ກັ້ນໄວ້ ຫລື "ຄວາມຮ້າຍງຽບ" ຄືຄວາມບາບ

   ການເຮັດດັ່ງກ່າວນີ້ກໍ່ໃຫ້ເກີດຄວາມເສັຽຫາຍດ້ວຍ ເພາະມັນເຮັດໃຫ້ຕົວເອງເຈັບປວດຊຶ່ງຈະສົ່ງຜົນໃຫ້ເຂົາໄປສ້າງຄວາມເຈັບປວດແກ່ຄົນອື່ນນຳ ການກັ້ນພະລັງອາລົມໄວ້ຈະກໍ່ໃຫ້ເກີດ ຄວາມຄຽດພາຍໃນໃຈ ຊຶ່ງນຳໄປສູ່ຄວາມຮູ້ສຶກຂົມຂື່ນໃຈ

   ຜົນກະທົບຈາກຄວາມຮ້າຍມີດັ່ງນີ້
   ດ້ານຮ່າງກາຍ – ປວດຫົວ, ຄວາມດັນເລືອດສູງ, ໂລກຫົວໃຈ

ດ້ານຈິດໃຈ – ກັງວົນ, ຢ້ານ, ຄຽດ, ຊຶມເສົ້າ

GCI

## ງ. ການຈັດການກັບຄວາມຮ້າຍ

ກ່ອນທີ່ຈະໃຫ້ຄຳປຶກສາ ຜູ້ຮັບຄຳປຶກສາຈະຕ້ອງເຕັມໃຈຮັບຄວາມຊ່ອຍເຫລືອ ຈະຕ້ອງຈັດການກັບທັດສະນະຄະຕິປະເພດ "ໃຜຈະສົນ" "ຈະມີປະໂຫຍດອັນໃດ" ເສັຽກ່ອນ

1. ໜູນໃຈໃຫ້ຜູ້ຮັບຄຳປຶກສາປະເຊີນໜ້າກັບ**<u>ບັນຫາ</u>** ບໍ່ແມ່ນກັບຄົນ

ການໜີບັນຫາຄືວິທີທີ່ງ່າຍທີ່ສຸດ ແຕ່ມີປະໂຫຍດນ້ອຍທີ່ສຸດ
- ການຍ່າງອອກຈາກຫ້ອງ ຫລືໄປພັກຮ້ອນ
- ນັ່ງເຮັດວຽກ ຫລືບໍ່ກໍເອົາແຕ່ເບິ່ງທໍລະທັດ
- ກິນເຫລົ້າ ຫລືໃຊ້ຢາເສບຕິດ
- ປະຕິເສດວ່າ ບໍ່ມີຄວາມຮ້າຍ

ໃນການປະເຊີນໜ້າກັບບັນຫາ ຜູ້ຮັບຄຳປຶກສາຕ້ອງລົງເຮັດດ້ວຍທ່າທີທີ່ຢາກແກ້ບັນຫາ ບໍ່ແມ່ນທຳຮ້າຍໃຜໃນການແກ້ບັນຫານັ້ນຕ້ອງໃຊ້ຂໍ້ພະຄຳພີ **ເອເຟໂຊ 4:29** ຕໍ່ໄປນີ້ເປັນແນວທາງໃນ ການສື່ສານ

"ຢ່າໃຫ້ຄຳຫຍາບຄາຍອອກຈາກປາກທ່ານເລີຍ ແຕ່ຈົ່ງກ່າວຄຳທີ່ດີ ແລະເປັນປະໂຫຍດໃຫ້ເໝາະສົມກັບຄວາມຕ້ອງການ ເພື່ອຈະໄດ້ເປັນຄຸນແກ່ຄົນທີ່ໄດ້ຍິນໄດ້ຟັງ"

**ເອເຟໂຊ 4:15** ແຕ່ໃຫ້ເຮົາຍຶດຄວາມຈິງດ້ວຍໃຈຮັກ..(ເວົ້າຄວາມຈິງດ້ວຍໃຈຮັກ)

2. ໜູນໃຈໃຫ້ເຂົາຄວບຄຸມຄວາມຮ້າຍ

ຂໍ້ແກ້ຕົວປະເພດ "ຂ້ອຍຄວບຄຸມອາລົມບໍ່ໄດ້" ເປັນການຕົວະ ເພາະ **ສຸພາສິດ 16:32** ກ່າວວ່າຄວາມຮ້າຍເປັນສິ່ງທີ່ເຮົາຄວບຄຸມໄດ້

ຄຳແນະນຳໃຫ້ເຮົານັບ 1–10 ນັ້ນລ້ອນຂ້າງສອດຄ້ອງກັບພະຄຳພີ ເພາະເປັນການໜູນໃຈໃຫ້ເຮົາເກີດຄວາມຄິດທີ່ຈະຄວບຄຸມຕົວເອງ

ຕົວຢ່າງ ບໍ່ມີໃຜລະເບີດອາລົມໃສ່ໜ້າເຈົ້ານາຍ ເພາະເຮົາເຫັນວ່າເຂົາເປັນຄົນສຳຄັນສະແດງໃຫ້ເຫັນວ່າຄົນເຮົາສາມາຄວຍຄຸມຄວາມຮ້າຍໄດ້

3. ໃຫ້ຜູ້ຮັບຄຳປຶກສາ**<u>ກັບໃຈໃໝ່</u>** ຄວາມບາບທຸກຢ່າງຕ້ອງມີການກັບໃຈໃໝ່ ແລະສາລະພາບ **1ໂຢຮັນ1:9** ເຫດຜົນຫລັກຄື ເພາະເຂົາຂາດຄວາມຢັ້ງຄິດຕໍ່ຄົນໃນຄອບຄົວ ແລະຖືວ່າພວກເຂົາບໍ່ສຳຄັນພໍທີ່ຈະຕ້ອງຄວບຄຸມຄວາມຮ້າຍໄວ້

4. ປະຍຸກໃຊ້ຈາກພະຄຳພີໃ**<u>ນການຢັບຢັ້ງ</u>**ຄວາມຮ້າຍ

**ສຸພາສິດ 15:1** ຄຳຕອບອ່ອນຫວານ (ບໍ່ແມ່ນເກັບກົດອາລົມຮ້າຍ)
**ສຸພາສິດ 17:14** ຢ່າຍອມໃຫ້ການທະເລາະເລີ້ມຂຶ້ນ ຫລີກລ້ຽງການໃຊ້ຄຳຫຍາບ
**ສຸພາສິດ 15:28** ຄິດກ່ອນເວົ້າ
**ເອເຟໂຊ 4:27** ຈັດການແກ້ໄຂບັນຫາໃຫ້ໄດ້ກ່ອນຕາເວັນຕົກດິນ ບໍ່ແມ່ນນັ້ນມັນຈະສະສົມກາຍເປັນຄວາມຂົມຂື່ນ ແລະລະເບີດອອກມາ

GCI

5. ເຮັດໃຫ້ຜູ້ຮັບຄຳປຶກສາເບິ່ງເຫັນຄວາມຜິດຂອງເຂົາກ່ອນທີ່ຈະເບິ່ງຄວາມຜິດຂອງຄົນອື່ນ **ມັດທາຍ7:3-5**
6. ເຮັດໃຫ້ຜູ້ຮັບຄຳປຶກສາຖ່ອມໃຈຍອມຂໍໂທກ **ຢາໂກໂບ 5:16**
7. ເລີກກິດຈະກຳໃດໆທີ່ສະໜັບສະໜູນ ຫລືເລົ້າໃຫ້ເກີດຄວາມຮຸນແຮງ ເຊັ່ນລາຍການທໍທະທັດທີ່ມີຄວາມຮຸນແຮງ
8. ຖ້າເຂົາຮູ້ສຶກເປັນປົມດ້ອຍ ຫລືຖືກປະຕິເສດ ໃຫ້ເຮັດການບຳບັດຮັກສາໃຈເຂົານຳ **ເອຊາຢາ 53:3-5** ສ່ວນໃຫຍ່ ຄົນຊຶ່ງໂມໂຫ ຫລືຮ້າຍເກີດອາການເພາະເຂົາຄິດວ່າຄົນອື່ນເປັນຕົ້ນເຫດທີ່ເຮັດໃຫ້ເຂົາມີປົມດ້ອຍ ກ່າວໂດຍທົ່ວໄປຄົນທີ່ຮູ້ສຶກໝັ້ນຄົງຍ່ອມບໍ່ຫວັ່ນໄຫວເພາະຄຳເວົ້າຢຽບຢາມຂອງຄົນອື່ນ

9. **ອະທິຖານ**ໃນຂະນະທີ່ກຳລັງຮ້າຍ

   **ກັນດານວິຖີ 16:15** ໂມເຊຮ້າຍຫລາຍ ແລະກາບທູນພະເຈົ້າວ່າ "ຂໍຢ່າຊົງໂປດປານເຄື່ອງບູຊາຂອງເຂົາເລີຍ ຂ້າພະອົງບໍ່ໄດ້ເອົາລາຂອງເຂົາມາຈັກຕົວນຶ່ງ ແລະຂ້າພະອົງບໍ່ໄດ້ເຮັດອັນຕະລາຍເຂົາຈັກຄົນດຽວ"

   ໃນຂະນະທີ່ໂມເຊກຳລັງຮ້າຍທ່ານຍັງສາມາດອະທິຖານໄດ້

10. ຖ້າກຳລັງເຮັດພັນທະກິດຢູ່ ແລ້ວທັງສອງຝ່າຍເລີ້ມກ່າວໂຈມຕີຊຶ່ງກັນແລະກັນ ກໍໃຫ້ຢຸດເຮັດພັນທະກິດນັ້ນເສັຽກ່ອນ ບອກກັບຜູ້ຮັບຄຳປຶກສາວ່າ ທ່ານບໍ່ສະໜັບສະໜູນໃຫ້ເກີດການກະທຳເຊັ່ນນັ້ນເພາະມັນຂັດກັບ **ເອເຟໂຊ 4:29**

# X. ພັນທະກິດກັບຜູ້ທີ່ໂສກເສົ້າ

ກ. ຄວາມຕາຍ ຄື**<u>ການສູນເສັຽ</u>**ທີ່ເຈັບປວດ

1. ດາວິດ ຄ່ຳຄວນເຖິງການຕາຍຂອງໂຢນາທານ **2ຊາມູເອນ 1:23-26**
2. ພະເຢຊູເສົ້າໂສກໃນຄວາມຕາຍຂອງລາຊາໂລ **ໂຢຮັນ 11:1- 44**

ຂ. ຂັ້ນຕອນຂອງການເສົ້າໃຈ

1. **ສຽບພັນ** ອາການຊາ ປະຕິເສດຄວາມຈິງ
2. **ຫົວລ້ຽວຫົວຕໍ່** ຮ້າຍ, ຕໍ່ລອງກັບພະເຈົ້າ "ພະອົງເຈົ້າຂ້າ ຖ້າພະອົງຊົງເຮັດຢ່າງນີ້.. ຂ້າພະອົງຈະເຮັດຢ່າງນັ້ນ"
3. **ການຍອມຮັບ** ຊຶມເສົ້າ, ມີສັນຕິສຸກ, ຫາຍເປັນປົກະຕິ

ຄ. ອາການສະແດງອອກທົ່ວໄປຂອງຄວາມເສົ້າ

1. **<u>ບໍ່ຫິວອາຫານ</u>** (ຫລື ກົງກັນຂ້າມຄື ການກິນຢ່າງບໍ່ຢັບຢັ້ງ)
2. ບໍ່ເຊື່ອ ຫລືຕົ**<u>ກຕະລຶງ</u>** (ຍອມຮັບຄວາມສູນເສັຽບໍ່ໄດ້)
3. **<u>ພຶດຕິກຳປະມ່າ</u>** (ກັດເລັບ, ເບິ່ງທໍລະທັດຫລາຍເກີນໄປ)
4. ຂາດຄວາມສົນໃຈໃນເລື່ອງ**<u>ທາງເພດ</u>**
5. ບໍ່ສາມາດ**<u>ຕັດສິນໃຈ</u>**ໄດ້
6. **<u>ຄວາມຮ້າຍ</u>**
7. ມີບັນຫາໃນການຮັກສາ**<u>ຄວາມສຳພັນກັ</u>**ບຄົນໃກ້ຊິດ
8. **<u>ເສັຍຊາ</u>**
9. ສະມາທິສັ້ນ
10. ເບິ່ງຄືສູນເສັຽ**<u>ຄວາມຊົງຈຳ</u>**ໄປຊົ່ວຂະນະ
11. ຂາດຄວາມສົນໃຈໃນເລື່ອງ**<u>ຝ່າຍວິນຍານ</u>**________(ຫລືໃນທາງກົບກັນເກີດຄວາມສົນໃຈໃນເລື່ອງຝ່າຍວິນຍານຂຶ້ນມາກະທັນຫັນ)
12. ຕ້ອງ**<u>ການເວົ້າ</u>**ເຖິງຄວາມສູນເສັຽ

GCI

13. ບໍ່ສົນໃຈດູແລ**<u>ຕົນເອງ</u>**
14. **<u>ນອນບໍ່າຫລັບ</u>** (ຫລືກົງກັນຂ້າມ ນອນຫລັບຫລາຍເກີດຂະໜາດ)
15. ຮູ້ສຶກ**<u>ສິ້ນຫວັງ</u>**
16. **<u>ຢ້ານ</u>**
17. ຮູ້ສຶກວ່າຖືກພະເຈົ້າ**<u>ທອດຖິ້ມ</u>**
18.

## ງ. ວິທີການຊ່ວຍເຫລືອຜູ້ທີ່ໂສກເສົ້າ

1. ໄປຢູ່**<u>ຄຽງຂ້າງ</u>**ເຂົາ
   ພະເຢຊູປະທັບຢູ່ທີ່ງານສົບຂອງລາຊາໂລ **ໂຢຮັນ 11**

2. **<u>ຟັງ</u>**
   ພະເຢຊູຊົງຟັງສິ່ງທີ່ຄົນເວົ້າ

3. ໜູນໃຈໃຫ້ມີການສະແດງອອກທາງອາລົມ
   ພະເຢຊູຮ້ອງໄຫ້ **<u>ໂຢຮັນ 11:35</u>**

4. **<u>ອະທິຖານຮ່</u>**ວມກັບສະມາຊິກທີ່ກໍາລັງໄວ້ທຸກ
5. ຕິດຕາມຜົນໂດຍການ**<u>ຢ້ຽມຢາມດູ</u>**ແລ
6. ສະເໜີໃຫ້ຄວາມຊ່ວຍເຫລືອໃນ**<u>ທາງປະຕິບັດ</u>**

ຖາມສະມາຊິກຄົນອື່ນໃນຄອບຄົວຂອງເຂົາວ່າ ມີງານອັນໃດແດ່ທີ່ເຮົາສາມາດຊ່ວຍໄດ້ເຊັ່ນ

ຊ່ວຍເຮັດອາຫານ, ຊ່ວຍດູແລເດັກນ້ອຍ..

## ຈ. ສິ່ງທີ່ຕ້ອງຫລີກລ້ຽງ

1. ຫ້າມເວົ້າຄໍາວ່າ “ຢ່າຮ້ອງໄຫ້”
2. ຢ່າເດົານໍ້າພະໄທພະເຈົ້າ ຫລືພະຍາຍາມ**<u>ອະທິບາຍ</u>**ເຖິງສາເຫດຂອງຄວາມຕາຍ ເຊັ່ນການບອກເຂົາວ່າອຸບັດຕິເຫດຮ້າຍແຮງທີ່ເກີດຂຶ້ນນັ້ນເປັນນໍ້າພະໄທຂອງພະເຈົ້າ ເຮັດໃຫ້ເຂົາຮູ້ສຶກວ່າພະເຈົ້າທາລຸນໂຫດຮ້າຍ ຊຶ່ງບໍ່ເປັນຄວາມຈິງ
3. ຢ່າເວົ້າວ່າ “ຂ້ອຍຮູ້ວ່າເຈົ້**<u>າຮູ້ສຶກ</u>**ຈັ່ງໃດ” ຍົກເວັ້ນ ທ່ານເຄີຍມີປະສົບການແບບດຽວກັນມາກ່ອນ
4. ຢ່າມອບໝາຍ**<u>ໜ້າທີ່ຜູ້</u>**ລ່ວງລັບໃຫ້ແກ່ລູກຜູ້ກົກ ໂດຍເວົ້າທໍານອງວ່າ “ເອົາລະໃນຖານະທີ່ເຈົ້າເປັນລູກຜູ້ໃຫຍ່..” ຊຶ່ງມີແຕ່ຈະເພີ້ມຄວາມໜັກໃຈໃຫ້ແກ່ເດັກ
5. ຢ່າແນະນໍາໃຫ້**<u>ແຕ່ງງານ</u>**ໃຫມ່ໃນທໍານອງທີ່ວ່າ “ເຈົ້າຍັງໜຸ່ມອາຍຸຍັງນ້ອຍເຈົ້າຍັງມີໂອກາດແຕ່ງງານໄດ້ອີກ”
6. ຢ່າຕໍານິ**<u>ພໍ່ຮ້າງ</u>** ຫລືແມ່ຮ້າງ ຖ້າເຂົາເລີ້ມຄົບກັບຄົນອື່ນໄວເກີນໄປ (ຕາມມາດຕະຖານຂອງທ່ານ) ບາງຄັ້ງຄວາມເຫງົາ ເປັນຄວາມຮູ້ສຶກທີ່ຮ້າຍແຮງ

## ສ. ຄໍາແນະນໍາສໍາລັບພໍ່ຮ້າງຫລືແມ່ຮ້າງ

1. ຢ່າຟ້າວຕັດ**<u>ສິນໃຈວ່</u>**າເຮັດອັນໃດລົງໄປ ໃນປີທໍາອິດ ນອກຈາກມີຄວາມຈໍາເປັນຢ່າງແທ້ຈິງ
2. ຂຽນລາຍການສິ່ງທີ່ສ້າງສັນທີ່ຫາກໍເຮັດ ພະຍາຍາມຫາອັນໃດໃຫ້ຕົວເອງເຮັດ
3. ເຂົ້າຮ່ວມສາມັກຄີທໍາກັບພີ່ນ້ອງ **<u>ເຮັບເລີ 10:24–25</u>**

# XI. ບົດສະຫລຸບ

## ກ. ການແນະນຳໄປຫາທີ່ປຶກສາຄົນອື່ນ

ມີບາງຄັ້ງ ທີ່ບັນຫານັ້ນໆຈຳເປັນຕ້ອງໄດ້ຮັບຄວາມຊ່ວຍເຫລືອເປັນພິເສດ ຊຶ່ງທ່ານຈຳເປັນຕ້ອງແນະນຳຜູ້ຮັບຄຳປຶກສາໃຫ້ໄປທີ່ປຶກສາຄົນອື່ນທີ່ເໝາະສົມ ຊຶ່ງເຮົາເອີ້ນການໃຫ້ຄຳປຶກສາແບບສົ່ງຕໍ່

ການແນະນຳຜູ້ຮັບຄຳປຶກສາໃຫ້ໄປຫາຄົນອື່ນທີ່ມີຄວາມຊຳນານຫລາຍກວ່າ ບໍ່ຖືວ່າເປັນຄວາມຫລົ້ມເຫລວແຕ່ຢ່າງໃດ

ຈະຕ້ອງສົ່ງຕໍ່ຜູ້ຮັບຄຳປຶກສາແບບໃດ?

1. ຄົນທີ່ຄິດວ່າຖ້າສົ່ງຕໍ່ແລ້ວ ຈະ**<u>ໄດ້ຮັບ</u>**ການຊ່ວຍເຫລືອໄດ້ດີກວ່າຢູ່ກັບເຮົາ
2. ຄົນຊຶ່ງບໍ່ສະແດງອາການຕອບສະໜອງໃດໆຫລັງຈາກທີ່ນັດພົບກັນມາຫລາຍກວ່າ 6ຄັ້ງແລ້ວໃນການໃຫ້ຄຳປຶກສາໄລຍະຍາວປົກກະຕິຈະໃຊ້ເວລາຫລາຍກວ່າ 5ຄັ້ງ ຂໍ້ແຕກຕ່າງຄື ຜູ້ຮັບຄຳປຶກສາຕ້ອງມີການຕອບສະໜອງຕໍ່ຄຳແນະນຳ
3. ຄົນຊຶ່ງມີຄວາມຕ້ອງການ ເກີນກວ່າເວລາ ແລະຄວາມຮູ້ຄວາມສາມາດທີ່ເຮົາຈະໃຫ້ໄດ້

## ຂ. ຄຳເຕືອນໃນທາງປະຕິບັດ

1. ຢ່າໃຫ້ຄຳປຶກສາແກ່ເພດກົງກັນຂ້າມ**<u>ຕາມລຳພັງ</u>**
2. ໃຫ້ຄຳແນະນຳໃນສະຖານທີ່ງຽບສະຫງົບ ປັດສະຈາກສິ່ງທີ່ອາດຂັດຈັງຫວະ ຫລືທັນເຫຄວາມສົນໃຈ
3. ຈົດບັນທຶກການໃຫ້ຄຳປຶກສາໄວ້ຢ່າງລະອຽດ,

## ຄ. ຂໍ້ພະຄຳພີທີ່ກ່ຽວຂ້ອງ

**<u>ການລ່ວງປະເວນີ</u>**

**ອົບພະຍົບ 20:24**
ຂໍ້ 14 "ຢ່າລ່ວງປະເວນີຜົວເມັຽເຂົາ"

**ສຸພາສິດ 6:24-29,32-33**
24 ເພື່ອສະຫງວນເຈົ້າໄວ້ຈາກຍິງຊົ່ວຮ້າຍ ຈາກລີ້ນພະເນົ້າພະນໍຂອງຍິງສົມຈອນ
25 ຢ່າປາດຖະໜາຄວາມງາມຂອງນາງຢູ່ໃນໃຈຂອງເຈົ້າ ຢ່າໃຫ້ນາງຈັບເຈົ້າດ້ວຍຂົນຕາຂອງນາງ
26 ເພາະຈະຈ້າງຍິງແພດສະຫຍາດ້ວຍຂະໜົມປັງກ້ອນດຽວກໍຍັງໄດ້ ແຕ່ຍິງຫລິ້ນຊູ້ລ່າຊີວິດປະເສີດຂອງຊາຍ
27 ຜູ້ຊາຍຈະຫອບໄຟໄວ້ທີ່ອົກຂອງເຂົາ ໂດຍບໍ່ໃຫ້ເສື້ອຜ້າຂອງເຂົາໄໝ້ໄດ້ຫລື
28 ຫລືຜູ້ໃດຈະຍ່າງເທິງຖ່ານທີ່ລຸກໂພງ ໂດຍບໍ່ໃຫ້ຕີນຂອງເຂົາຖືກໄຟລວກໄດ້ຫລື
29ບຸກຄົນຜູ້ເຂົ້າຫາພັນລະຍາຂອງເພື່ອນບ້ານກໍເປັນຢ່າງນັ້ນແຫລະ ບໍ່ມີຜູ້ໃດທີ່ແຕະຕ້ອງນາງແລ້ວຈະບໍ່ຖືກປັບໂທດ
32 ຊາຍໃດທີ່ລ່ວງປະເວນີຜົວເມັຽ ຍ່ອມບໍ່ມີສາມັນສຳນຶກ ຜູ້ໃດທີ່ກະທຳຢ່າງນັ້ນກໍທຳລາຍຕົນເອງ
33 ເຂົາໄດ້ຮັບບາດແຜ ແລະຄວາມອັບປະຍົດ ແລະຈະລ້າງຄວາມຂາຍໜ້າຂອງຕົນກໍບໍ່ໄດ້

**ມັດທາຍ 5:27-28**
27 "ທ່ານທັງຫລາຍໄດ້ຍິນຄຳຊຶ່ງກ່າວໄວ້ວ່າ ຢ່າລ່ວງປະເວນີຜົວເມັຽເຂົາ
28 ຝ່າຍເຮົາບອກທ່ານທັງຫລາຍວ່າ ຜູ້ໃດເບິ່ງຜູ້ຍິງເພື່ອໃຫ້ເກີດໃຈກຳນັດໃນຍິງນັ້ນ ຜູ້ນັ້ນໄດ້ລ່ວງປະເວນີໃນໃຈກັບຍິງ ນັ້ນແລ້ວ

GCI

**ຄວາມທຸກຍາກ**

**ໂຢບ 5:6-7**

6 ເພາະຄວາມທຸກໃຈບໍ່ໄດ້ມາຈາກຜົງຂີ້ດິນ ຫລືຄວາມຍາກລຳບາກງອກອອກມາຈາກດິນ

7 ແຕ່ມະນຸດເກີດມາເພື່ອແກ່ຄວາມຍາກລຳບາກ ຢ່າງປະກາຍໄຟຍ່ອມປິວຂຶ້ນເທິງ

**ໂຢບ 5:17-18**

17"ເບິ່ງເຖີດ ມະນຸດຄົນໃດທີ່ພະເຈົ້າຊົງຕິເຕືອນກໍເປັນສຸກເພາະສະນັ້ນຢ່າດູມິ່ນການຕີສອນຂອງອົງຜູ້ຊົງມະ ຫິດທິລິດ

18ເພາະພະອົງຊົງໃຫ້ບາດເຈັບແຕ່ພະອົງຊົງພັນບາດແຜໃຫ້ພະອົງຊົງໂບຍຕີ ແຕ່ພະຫັດຂອງພະອົງຊົງຮັກ ສາ

ເພງສັນລະເສີນ 50:15 ແລະຈົ່ງຮ້ອງທູນເຮົາໃນວັນທຸກຍາກລຳບາກເຮົາຈະຊ່ວຍກູ້ເຈົ້າ ແລະເຈົ້າຈະຖວາຍພະສິລິແກ່ເຮົາ"

ມັດທາຍ11:28ບັນດາຜູ້ທຳງານອິດເມື່ອຍແລະແບກພາລະໜັກຈົ່ງມາຫາເຮົາ
ແລະເຮົາຈະໃຫ້ທ່ານທັງຫລາຍຫາຍເມື່ອຍ ເປັນສຸກ

ໂຣມ 5:3-4

3 ຍິ່ງກວ່ານັ້ນ ເຮົາຊື່ນຊົມຍິນດີໃນຄວາມທຸກຍາກຂອງເຮົາດ້ວຍ ເພາະເຮົາຮູ້ວ່າຄວາມທຸກຍາກນັ້ນ ເຮັດໃຫ້ເກີດຄວາມອົດທົນ

4 ແລະຄວາມອົດທົນເຮັດໃຫ້ເຫັນວ່າເຮົາເປັນຄົນທີ່ພະເຈົ້າຊົງໃຊ້ໄດ້ ແລະການທີ່ເຮົາເຫັນເຊັ່ນນັ້ນເຮັດໃຫ້ເກີດມີຄວາມຫວັງໃຈ

**ການຕິດເຫລົ້າ**

ສຸພາສິດ 20:1

1 ເຫລົ້າອາງຸ່ນໃຫ້ເກີດການເຍາະເຍີ້ຍ ແລະເຫລົ້າກໍ່ໃຫ້ເກີດເປັນພານເກເລ ຜູ້ໃດຍອມໃຫ້ມັນພາເຈີ່ນໄປກໍບໍ່ເປັນຄົນສະຫລາດ

**ສຸພາສິດ 23:29-33**

29 ໃຜທີ່ຮ້ອງໂອຍ ໃຜທີ່ຮ້ອງອຸຍ ໃຜທີ່ມີການວິວາດ ໃຜທີ່ມີການຮ້ອງຄາງ ໃຜທີ່ມີບາດແຜປັດສະຈາກເຫດ ໃຜທີ່ມີຕາແດງ

30 ຄືບັນດາຜູ້ທີ່ນັ່ງແຊ່ຢູ່ກັບເຫລົ້າອະງຸ່ນ ບັນດາຜູ້ທີ່ໄປທົດລອງເຫລົ້າປະສົມ

31 ຢ່າເບິ່ງເຫລົ້າອາງຸ່ນເມື່ອມັນມີສີແດງ ເມື່ອເປັນປະກາຍໃນຖ້ວຍ ແລະລົງໄປຄ່ອງໆ

32 ນະທີ່ສຸດມັນກັດເໝືອນງູ ແລະມັນສິກເອົາເໝືອນງູທັບທາງ

33 ຕາຂອງເຈົ້າຈະເຫັນສິ່ງແປກໆ ແລະໃຈຂອງເຈົ້າຈະເວົ້າຕະຫລົບຕະແລງ

**ເອຊາຢາ 5:11-12**

11 ວິບັດແກ່ຄົນເຫລົ່ານັ້ນທີ່ລຸກຂຶ້ນແຕ່ເຊົ້າມືດ ເພື່ອແລ່ນໄປຕາມສຸລາຜູ້ເສື່ອຍແລະຢູ່ຈົນເດິກຈົນເຫລົ້າອາງຸ່ນເຮັດໃຫ້ເຂົາເມົາຫຍຳເປ

12 ເຂົາມີພິນເຂົາຄູ່ ແລະພິນໃຫຍ່ ລຳມະນາ ຄຸ່ຍ ແລະເຫລົ້າອະງຸ່ນ ແລະເປັນຄົນແກ້ວກ້າໃນການປະສົມເຫລົ້າ

**ເອເຟໂຊ 5:18**

18 ແລະຢ່າເມົາເຫລົ້າອະງຸ່ນຊຶ່ງຈະເຮັດໃຫ້ເສັຽຄົນ ແຕ່ຈົ່ງປະກອບດ້ວຍພະວິນຍານ

**ຄວາມຮ້າຍ**

**ເພງສັນລະເສີນ 37:8-9**

8 ຈົ່ງລະງັບຄວາມຮ້າຍ ແລະຖິ້ມຄວາມພິໂລດ ຢ່າໃຫ້ໃຈຂອງທ່ານເດືອດຮ້ອນ ມີແຕ່ຈະຊົ່ວໄປ

9 ເພາະຄົນທີ່ເຮັດຊົ່ວຈະຖືກຕັດອອກໄປ ແຕ່ບັນດາຜູ້ທີ່ລໍຄອຍພະເຈົ້າຈະໄດ້ແຜ່ນດິນໄປເປັນມໍລະດົກ

GCI

**ສຸພາສິດ 14:17**

17 ຄົນໂມໂຫຮ້າຍປະພຶດໂງ່ ແຕ່ຄົນສະຫລາດສະຫລຽວນັ້ນອົດທົນ

**ເອເຟໂຊ 4:26-27**

26 ຈະຮ້າຍກໍຮ້າຍໄດ້ ແຕ່ຢ່າງເຮັດບາບ ຢ່າໃຫ້ເຖິງຕາເວັນຕົກທ່ານຍັງຮ້າຍຢູ່
27 ແລະຢ່າໃຫ້ໂອກາດແກ່ມານ

ໂກໂລຊາຍ 3:8

8 ແຕ່ບັດນີ້ ສາລະພັດສິ່ງເຫລົ່ານີ້ທ່ານຈົ່ງລະຖິ້ມເສັຽ ຄື ຄວາມຮ້າຍ ຄວາມຂັດເຄືອງໃຈ ການຄິດປອງຮ້າຍ ການເວົ້າສຽດສີ ຄຳເວົ້າຫຍາບຊ້າ

**ຢາໂກໂບ 1:19-20**

19 ເບິ່ງກ່ອນພີ່ນ້ອງທີ່ຮັກຂອງຂ້າພະເຈົ້າ ຈົ່ງຮູ້ຂໍ້ນີ້ ຈົ່ງໃຫ້ທຸກຄົນໄວໃນການຟັງ ຊ້າໃນການເວົ້າ ຊ້າໃນການຮ້າຍ
20 ເພາະວ່າຄວາມຮ້າຍຂອງມະນຸດບໍ່ໄດ້ເຮັດໃຫ້ເກີດຄວາມຊອບທຳແຫ່ງພະເຈົ້າ

**<u>ຄວາມກະວົນກະວາຍ</u>**

**ເພງສັນລະເສີນ 37:5**

5 ຈົ່ງມອບທາງຂອງທ່ານໄວ້ກັບພະເຈົ້າ ວາງໃຈໃນພະອົງ ແລະພະອົງຈະຊົງກະທຳໃຫ້ສຳເລັດ

**ມັດທາຍ 6:25-34**

25 ເຫດສັນນັ້ນເຮົາບອກທ່ານທັງຫລາຍວ່າ ຢ່າກະວົນກະວາຍເຖິງຊີວິດຂອງຕົນວ່າຈະເອົາອັນໃດກິນ ຫລືຈະເອົາອັນ ໃດດື່ມ ແລະຢ່າກະວົນກະວາຍເຖິງຮ່າງກາຍຂອງຕົນວ່າຈະເອົາອັນໃດນຸ່ງຫົ່ມ ຊີວິດສຳຄັນຍິ່ງກວ່າອາຫານບໍ່ແມ່ນ ຫລືແລະ ຮ່າງກາຍສຳຄັນກວ່າເຄື່ອງນຸ່ງຫົ່ມບໍ່ແມ່ນຫລື

26 ຈົ່ງເບິ່ງນົກໃນອາກາດ ມັນບໍ່ໄດ້ຫວ່ານ ບໍ່ໄດ້ກ່ຽວບໍ່ໄດ້ສະສົມໄວ້ໃນສາງ ແຕ່ພະບິດາຂອງທ່ານທັງຫລາຍ ຜູ້ຊົງສະຖິດຢູ່ໃນສະຫວັນຊົງລ້ຽງນົກໄວ້ ທ່ານທັງຫລາຍປະເສີດກວ່ານົກບໍ່ແມ່ນຫລື

27 ແມ່ນໃຜໃນພວກທ່ານໂດຍຄວາມກະວົນກະວາຍ ອາດຕໍ່ຊີວິດໃຫ້ຍືນຍາວອອກໄປອີກຈັກສອກນຶ່ງໄດ້ຫລື

28 ທ່ານກະວົນກະວາຍເຖິງເຄື່ອງນຸ່ງຫົ່ມເຮັດຫຍັງ ຈົ່ງພິຈາລະນາດອກໄມ້ໃນທົ່ງນາວ່າມັນງອກງາມຈະເລີນຂຶ້ນໄດ້ຢ່າງໃດ ມັນບໍ່ໄດ້ເຮັດວຽກ ແລະບໍ່ໄດ້ປັ່ນຝ້າຍ

29 ແຕ່ເຮົາບອກທ່ານທັງຫລາຍວ່າກະສັດຊາໂລມອນເມື່ອບໍລິບູນດ້ວຍສະຫງ່າລາສີ
ກໍບໍ່ໄດ້ຊົງເຄື່ອງງາມເທົ່າດອກໄມ້ນີ້ດອກນຶ່ງ

30 ແມ່ນວ່າພະເຈົ້າຊົງຕົກແຕ່ງຫຍ້າທີ່ທົ່ງນາຢ່າງນັ້ນ ຊຶ່ງເປັນຢູ່ໃນວັນນີ້ແລະມື້ໜ້າຖິ້ມໃນເຕົາໄຟ ໂອຜູ້ມີຄວາມເຊື່ອນ້ອຍ ພະອົງຈະບໍ່ຊົງຕົກແຕ່ງທ່ານຫລາຍກວ່ານັ້ນຫລື

31 ເຫດສັນນັ້ນຢ່າກະວົນກະວາຍວ່າ ຈະເອົາອັນໃດກິນ ຫລືຈະເອົາອັນໃດດື່ມ ຫລືຈະເອົາອັນໃດນຸ່ງຫົ່ມ

32 ເພາະວ່າພວກຕ່າງຊາດສະແຫວງຫາຂອງທັງປວງນີ້ ແຕ່ວ່າພະບິດາຂອງທ່ານຜູ້ຊົງສະຖິດໃນສະຫວັນຊົງຮູ້ແລ້ວວ່າ ທ່ານຕ້ອງການສິ່ງທັງປວງເຫລົ່ານີ້

33 ເຫດສັນນັ້ນຢ່າກະວົນກະວາຍເຖິງມື້ອື່ນ ເພາະວ່າມື້ອື່ນຄົງມີຄວາມກະວົນກະວາຍສຳລັບມື້ອື່ນເອງ ແຕ່ລະວັນກໍມີ ທຸກ ພໍຢູ່ແລ້ວ

**ລູກາ 21:34**

34 "ແຕ່ຈົ່ງລະວັງໃຫ້ດີ ຢ້ານວ່າໃຈຂອງທ່ານຈະລົ້ມໄປດ້ວຍອາການດື່ມເຫລົ້າຫລາຍ ແລະດ້ວຍການເມົາ ແລະດ້ວຍຄິດ ກັງວົນເຖິງຊີວິດນີ້ ແລ້ວເວລານັ້ນຈະມາເຖິງທ່ານດັ່ງບ້ວງແຮ້ວຢ່າງກະທັນຫັນ

**ຟີລິບບອຍ 4:6-7**

6.ຢ່າທຸກຮ້ອນໃຈດ້ວຍສິ່ງໃດເລີຍ ແຕ່ຈົ່ງທູນເລື່ອງຄວາມປາດຖະໜາຂອງເຈົ້າທຸກຢ່າງຕໍ່ພະເຈົ້າ ດ້ວຍການອະທິຖານ ການວິງວອນ ກັບການຂອບພະຄຸນ

7. ແລ້ວສັນຕິສຸກຊຶ່ງເກີນຄວາມເຂົ້າໃຈ ຈະຄູ້ມຄອງຈິດໃຈ ແລະຄວາມຄິດຂອງທ່ານໄວ້ໃນພະເຢຊູຄຣິດ

GCI

1ເປໂຕ 5:6-7
6. ເຫດສັນນັ້ນທ່ານທັງຫລາຍ ຈົ່ງຖ່ອມໃຈລົງພາຍໃຕ້ພະຫັດອັນຊົງລິດຂອງພະເຈົ້າ ເພື່ອວ່າພະອົງຈະໄດ້ຊົງຍົກທ່ານຂຶ້ນເມື່ອເຖິງເວລາອັນຄວນ
7. ຈົ່ງລະຄວາມກະວົນກະວາຍຂອງທ່ານໄວ້ກັບພະອົງ ເພາະວ່າພະອົງຊົງຫ່ວງໃຍທ່ານທັງຫລາຍ

**ຄວາມໂສກເສົ້າ**

ໂຢຮັນ 11:25-26
25. ພະເຢຊູຕັດກັບນາງວ່າ "ເຮົາເປັນເຫດໃຫ້ຄົນທັງເປັນຂຶ້ນ ແລະມີຊີວິດຜູ້ທີ່ວາງໃຈໃນເຮົານັ້ນເຖິງແມ່ນວ່າຕາຍໄປແລ້ວກໍຍັງຈະມີຊີວິດອີກ
26 ແລະທຸກຄົນທີ່ມີຊີວິດ ແລະວາງໃຈໃນເຮົາຈະບໍ່ຕາຍເລີຍ ເຈົ້າເຊື່ອຢ່າງນີ້ບໍ່"

ໂຢຮັນ 14:1-6
1. "ຢ່າໃຫ້ໃຈທ່ານທັງຫລາຍວິຕົກເລີຍ ທ່ານວາງໃຈໃນພະເຈົ້າ ຈົ່ງວາງໃຈໃນເຮົາດ້ວຍ
2. ໃນພະນິເວດຂອງພະບິດາເຮົາມີທີ່ຢູ່ຫລາຍບ່ອນ ຖ້າບໍ່ມີເຮົາຄົງໄດ້ບອກທ່ານແລ້ວ ເພາະເຮົາໄປຈັດຕຽມທີ່ໄວ້ສຳລັບທ່ານທັງຫລາຍ
3. ເມື່ອເຮົາໄປຈັດຕຽມທີ່ໄວ້ສຳລັບທ່ານແລ້ວ ເຮົາຈະກັບມາອີກຮັບທ່ານໄປຢູ່ກັບເຮົາ ເພື່ອວ່າເຮົາຢູ່ທີ່ໃດທ່ານທັງຫລາຈະໄດ້ຢູ່ທີ່ນັ້ນດ້ວຍ
4. ແລະທ່ານຮູ້ຈັກທາງທີ່ເຮົາຈະໄປນັ້ນ"
5. ໂທມາທູນພະອົງວ່າ "ພະອົງເຈົ້າຂາ ພວກຂ້າພະອົງບໍ່ຮູ້ວ່າພະອົງຈະສະເດັດໄປບ່ອນໃດພວກຂ້າພະອົງຈະຮູ້ຈັກທາງນັ້ນໄດ້ຢ່າງໃດ
6. ພະເຢຊູຕັດກັບເຂົາວ່າ "ເຮົາເປັນທາງນັ້ນ ເປັນຄວາມຈິງ ແລະເປັນຊີວິດບໍ່ມີຜູ້ໃດມາ ເຖິງພະບິດາໄດ້ນອກ ຈາກ ຈະມາທາງເຮົາ

1ໂກຣິນໂທ 15:55-57
55 ໂອ ມັດຈະລາດເອີຍ ໄຊຊະນະຂອງເຈົ້າຢູ່ໃສ ໂອມັດຈະລາດເອີຍ ເຫລັກໃນຂອງເຈົ້າຢູ່ບ່ອນໃດ
56 ເຫລັກໃນຂອງຄວາມຕາຍນັ້ນຄືບາບ ແລະລິດເດດຂອງບາບຄືທຳບັນຍັດ
57 ສາທຸການແດ່ພະເຈົ້າຜູ້ຊົງປະທານໄຊຊະນະແກ່ເຮົາທັງຫລາຍໂດຍພະເຢຊູຄຣິດເຈົ້າຂອງເຮົາ

2ໂກຣິນໂທ 5:1
1. ເພາະເຮົາຮູ້ວ່າ ຖ້າເຮືອນດິນຄືກາຍຂອງເຮົານີ້ຈະພັງທຳລາຍເສັຽ ເຮົາກໍຍັງມີບ່ອນອາໄສຊຶ່ງພະເຈົ້າຊົງໂປດປະທານໃຫ້ທີ່ບໍ່ໄດ້ສ້າງດ້ວຍມືມະນຸດ ແລະຕັ້ງຢູ່ເປັນນິດໃນສະຫວັນ

ພະນິມິດ 21:2-4
2. ຂ້າພະເຈົ້າໄດ້ເຫັນນະຄອນສັກສິດ ຄືກຸງເຢລູຊາເລັມໃໝ່ກຳລັງລົງມາຈາກສະຫວັນ ແລະຈາກພະເຈົ້ານະຄອນນີ້ໄດ້ຈັດຕຽມໄວ້ແລ້ວ ເໝືອນຢ່າງເຈົ້າສາວແຕ່ງຕົວໄວ້ສຳລັບເຈົ້າບ່າວ
3. ຂ້າພະເຈົ້າໄດ້ຍິນສຽງດັງມາຈາກພະຣາຊບັນລັງວ່າ ເບິ່ງແມ໋ທີ່ສະຖິດຂອງພະເຈົ້າກໍຢູ່ກັບມະນຸດແລ້ວ ພະອົງຈະຊົງສະຖິດຢູ່ກັບເຂົາ ເຂົາພວກນັ້ນແຫລະ, ຈະເປັນໄພ່ພົນຂອງພະອົງ ແລະພະເຈົ້າເອງຈະປະທັບຢູ່ກັບເຂົາ
4. ພະເຈົ້າຈະຊົງເຊັດນ້ຳຕາທຸກໆຢົດຈາກຕາຂອງເຂົາ ຄວາມຕາຍຈະບໍ່ມີອີກຕໍ່ໄປ ຄວາມໂສກເສົ້າ,ການຮ້ອງໄຫ້, ແລະຄວາມເຈັບປວດຈະບໍ່ມີອີກຕໍ່ໄປ ເພາະວ່າສິ່ງທີ່ມີຢູ່ຄາວກ່ອນນັ້ນກໍລ່ວງໄປແລ້ວ

**<u>ຄວາມຂົມຂື່ນແລະກຽດຊັງ</u>**

ເພັງສັນລະເສີນ 66:18 ຖ້າຂ້າພະເຈົ້າໄດ້ບົ່ມຄວາມຊົ່ວໄວ້ໃນໃຈຂ້າພະເຈົ້າ ອົງພະຜູ້ເປັນເຈົ້າບໍ່ຊົງຟັງ

ມັດທາຍ 5:43-44
43 "ທ່ານທັງຫລາຍໄດ້ຍິນຄຳຊຶ່ງກ່າວໄວ້ວ່າ ຈົ່ງຮັກຄົນສະໜິດ ແລະກຽດຊັງສັດຕູ
44 ຝ່າຍເຮົາບອກທ່ານວ່າ ຈົ່ງຮັກສັດຕູຂອງທ່ານ ແລະຈົ່ງອະທິຖານເພື່ອຜູ້ທີ່ຂົ່ມເຫງທ່ານ

GCI

ເອເຟໂຊ 4:31–32
31 ຈົ່ງໃຫ້ໃຈຂົມຂື່ນ ແລະໃຈຂັດເຄືອງ ແລະໃຈໂມໂຫ ແລະການທະເລາະຖຽງກັນ ແລະການເວົ້າສຽດສີກັບກາຄິດປອງ
ຮ້ອາຍທຸກຢ່າງຢູ່ຫ່າງໄກຈາກທ່ານເຖີດ
32 ແລະທ່ານຈົ່ງເມດຕາຕໍ່ກັນ ແລະອະໄພໂທດໃຫ້ກັນ ເໝືອນດັ່ງທີ່ພະເຈົ້າໄດ້ຊົງໂປດອະໄພໂທດໃຫ້ແກ່ທ່ານໃນພະຄຣິດນັ້ນ

ເຮັບເລີ 12:14–15
14 ຈົ່ງອົດສາທີ່ຈະຢູ່ຢ່າງສະຫງົບກັບຄົນທັງຫລາຍ ແລະອົດສາທີ່ຈະໄດ້ໃຈບໍລິສຸດຊຶ່ງຖ້າໃຈບໍ່ບໍລິສຸດກໍຈະບໍ່ມີຜູ້ໃດໄດ້ ເຫັນ
ອົງພະຜູ້ເປັນເຈົ້າເລີຍ
15 ຈົ່ງລະວັງໃຫ້ດີຢ່າໃຫ້ໃຜເພີກເສີຍຕໍ່ພະຄຸນຂອງພະເຈົ້າ ແລະຢ່າໃຫ້ມີຮາກຂົມຂື່ນງອກຂຶ້ນມາ ເຮັດຄວາມຫຍຸ້ງຍາກໃຫ້
ຊຶ່ງຈະເປັນເຫດໃຫ້ຄົນເປັນອັນມາກເສັຽໄປ

1ໂຢຮັນ 3:15
15 ຜູ້ໃດທີ່ກຽດຊັງພີ່ນ້ອງຂອງຕົນຜູ້ນັ້ນກໍເປັນຜູ້ຂ້າຄົນ ແລະທ່ານທັງຫລາຍກໍຮູ້ແລ້ວວ່າຜູ້ຂ້າຄົນນັ້ນບໍ່ມີຊີວິດອັນຕະ
ຫລອດໄປເປັນນິດດຳລົງຢູ່ໃນເຂົາເລີຍ

**<u>ວິນຍານຊົ່ວລົບກວນ</u>**

ຢາໂກໂບ 4:7
7 ເຫດສະນັ້ນທ່ານທັງຫລາຍຈົ່ງນ້ອມໃຈຍອມຟັງພະເຈົ້າ ຈົ່ງຕໍ່ສູ້ກັບມານ ແລະມັນຈະໜີທ່ານໄປ

1ເປໂຕ 5:8–9
8 ທ່ານທັງຫລາຍຈົ່ງສະຫງົບໃຈຈົ່ງລະວັງໄວ້ໃຫ້ດີ ດ້ວຍວ່າສັດຕູຂອງທ່ານຄືມານທຽວວົນວຽນຢູ່ຮອບໆ ດັ່ງໂຕສິງຮ້ອງ
ແຜດສຽງຊອກຫາຄົນທີ່ມັນຈະກັດກິນໄດ້
9 ຈົ່ງຕໍ່ສູ້ກັບສັດຕູນັ້ນດ້ວຍໃຈໝັ້ນຄົງໃນຄວາມເຊື່ອ ເພາະວ່າພວກພີ່ນ້ອງທັງຫລາຍ ຂອງທ່ານທົ່ວໂລກໍປະສົບ ຄວາມທຸກ
ລຳບາກຢ່າງດຽວກັນ

1ໂຢຮັນ 4:1–4
1 ທ່ານທີ່ຮັກທັງຫລາຍ ຢ່າເຊື່ອວິນຍານເສັຽທຸກໆວິນຍານ ແຕ່ຈົ່ງພິສູດວິນວານນັ້ນໆ ວ່າມາຈາກພະເຈົ້າຫລືບໍ່ ເພາະ
ວ່າມີຜູ້ພະຍາກອນຫລອງຫລາຍໄປທົ່ວໂລກ
2 ໂດຍຂໍ້ນີ້ທ່ານທັງຫລາຍກໍຈະຮູ້ຈັກພະວິນຍານຂອງພະເຈົ້າຄືວິນຍານທັງປວງທີ່ຍອມຮັບວ່າພະເຢຊູຄຣິດໄດ້ສະເດັດມາ
ເປັນມະນຸດວິນຍານນັ້ນກໍມາຈາກພະເຈົ້າ
3 ແລະວິນຍານທັງປວງທີ່ບໍ່ຍອມຮັບເຊື່ອພະເຢຊູ ວິນຍານນັ້ນກໍບໍ່ໄດ້ມາຈາກພະເຈົ້າ ວິນຍານນັ້ນແຫລະເປັນປໍລະປັກ ຂອງ
ພະຄຣິດ ຊຶ່ງທ່ານທັງຫລາຍໄດ້ຍິນວ່າຈະມາ ແລະບັດນີ້ກໍຢູ່ໃນໂລກ
4 ລູກທັງຫລາຍເອີຍ ທ່ານເປັນຝ່າຍພະເຈົ້າ ແລະໄດ້ຊະນະເຂົາເຫລົ່ານັ້ນເພາະວ່າພະອົງຜູ້ຊົງຢູ່ໃນທ່ານທັງຫລາຍເປັນ
ໃຫຍ່ກວ່າຜູ້ນັ້ນທີ່ຢູ່ໃນໂລກ

**<u>ຄວາມຮູ້ສຶກຊຶມເສົ້າ</u>**

ໂຢຮັນ 14:27
27 ເຮົາມອບສັນຕິສຸກໄວ້ໃຫ້ແກ່ທ່ານທັ*ຫລາຍ ສັນຕິສຸກຂອງເຮົາທີ່ໃຫ້ແກ່ທ່ານນັ້ນ ເຮົາໃຫ້ທ່ານບໍ່ຄືໂລກໃຫ້ຢ່າໃຫ້ໃຈ
ຂອ*ທ່ານວິຕົກ ແລະຢ່າຢ້ານເລີຍ

**<u>ການຢ່າຮ້າງ</u>**

ມັດທາຍ 5:31–32
31 "ຍັງມີຄຳກ່າວໄວ້ວ່າ ຖ້າຜູ້ໃດຈະຢ່າພັນລະຍາກໍໃຫ້ເຮັດໜັງສືຢ່າໃຫ້ແກ່ພັນລະຍານັ້ນ
32 ຝ່າຍເຮົາບອກທ່ານທັງຫລາຍວ່າ ຖ້າຜູ້ໃດຈະຢ່າພັນລະຍາເພາະເຫດອື່ນນອກຈາກການຫລິ້ນຊູ້ ກໍເທົ່າກັບວ່າຜູ້ນັ້ນເຮັດ
ໃຫ້ຍິງນັ້ນຜິດສິນລ່ວງປະເວນີ ແລະຖ້າຜູ້ໃດ ຈະຮັບຍິງຊຶ່ງຢ່າແລ້ວເຊັ່ນນັ້ນມາເປັນພັນລະຍາ ຜູ້ນັ້ນກໍຜິດສິນລ່ວງປະເວນີດ້ວຍ

GCI

ມັດທາຍ19:9
9 ຝ່າຍເຮົາບອກທ່ານທັງຫລາຍວ່າ ຜູ້ໃດຢ່າພັນລະຍາຂອງຕົນເພາະເຫດຕ່າງໆ ເວັ້ນແຕ່ເປັນຊູ້ກັບຊາຍອື່ນ ແລ້ວໄປມີພັນລະຍາໃຫມ່ກໍຜິດປະເວນີ ແລະຜູ້ໃດຮັບຍິງທີ່ຢ່າແລ້ວນັ້ນມາເປັນພັນລະຍາ ກໍຜິດປະເວນີດ້ວຍ

**<u>ຄວາມອິດສາ</u>**

ເພງສັນລະເສີນ 37:1
1 ຢ່າໃຫ້ເຈົ້າເດືອດຮ້ອນເພາະເຫດຄົນທີ່ເຮັດຊົ່ວຢ່າອິດສາຄົນທີ່ປະພຶດຜິດ

ສຸພາສິດ 23:17
17 ຢ່າໃຫ້ໃຈຂອງເຈົ້າລິດສະຍາຄົນບາບ ແຕ່ຈົ່ງດໍາເນີນໃນຄວາມຢໍາເກງພະເຈົ້າຕັ້ງແຕ່ເຊົ້າຈົນຄໍ່າ

ຄາລາເຕັຽ 5:19-21
19 ການງານຂອງເນື້ອໜັງນັ້ນເຫັນໄດ້ແຈ້ງ ຄືການລ່ວງປະເວນີ ການໂສໂຄກການລາມົກ
20 ການນັບຖືຮູບເຄົາລົບ ການຖືວິທະຍາຄົມ ການເປັນສັດຕູກັນ ການວິວາດກັນ ການຮ້າຍກັນ ການໃຝ່ສູງ ການຫຸ້ມຖຽງກັນ ການແຕກແຍກກັນ
21 ການອິດສາກັນ ການເມົາເຫລົ້າ ການຫລິ້ນເປັນອັນຕະພານເກເລ ແລະການອື່ນໆໃນທໍານອງນີ້ອີກຄືທີ່ຂ້າພະເຈົ້າໄດ້ເຕືອນທ່ານມາກ່ອນ ບັດນີ້ຂ້າພະເຈົ້າຂໍເຕືອນທ່ານຄືກັບທີ່ເຄີຍເຕືອນມາແລ້ວວ່າຄົນທີ່ປະພຶດເຊັ່ນນັ້ນຈະບໍ່ມີສ່ວນໃນແຜ່ນດິນ ຂອງພະເຈົ້າ

**<u>ຄວາມຊື່ສັດ (ທ່ຽງຕົງ)</u>**

ສຸພາສິດ 5:18-21
18 ຈົ່ງໃຫ້ນໍ້າພຸຂອງເຈົ້າໄດ້ຮັບພອນ ແລະເປມປີຢູ່ກັບພັນລະຍາຄົນທີ່ເຈົ້າໄດ້ເມື່ອໜຸ່ມນັ້ນ
19 ເໝືອນກວາງທີ່ໜ້າຮັກ ເຍືອງທີ່ງາມສະຫງ່າຈົ່ງໃຫ້ຖັນຂອງພັນລະຍາເຈົ້າເປັນທີ່ໜໍາໃຈເຈົ້າຢູ່ທຸກເວລາຈົ່ງດື່ມດໍ່າ ຢູ່ກັບຄວາມຮັກຂອງນາງສະເໝີ

20 ບຸດຊາຍຂອງເຮົາເອີຍ ເຈົ້າຈະເຄີບເຄີ້ມຢູ່ກັບຍິງຊົ່ວເຮັດຫຍັງ ແລະໂອບກອດອົກຂອງນາງສັນຈອນຢູ່ເຮັດຫຍັງ

21 ເພາະວ່າທາງຂອງຄົນກໍຢູ່ໃນສາຍພະເນດພະເຈົ້າ ແລະພະອົງຊົງເຝົ້າເບິ່ງວິຖີທັງສິ້ນຂອງເຂົາ

**<u>ຄວາມຢ້ານ</u>**

ເພງສັນລະເສີນ 27:1
1 ພະເຈົ້າຊົງເປັນຄວາມສະຫວ່າງ ແລະຄວາມພົ້ນຂອງຂ້າພະເຈົ້າ ຂ້າພະເຈົ້າຈະຢ້ານຜູ້ໃດ ພະເຈົ້າຊົງເປັນທີ່ກໍາບັງ ເຂັ້ມແຂງແຫ່ງຊີວິດຂ້າພະເຈົ້າຈະຕ້ອງເກງໃຜ

ເພງສັນລະເສີນ 55:4-6
4 ຈິດໃຈຂອງຂ້າພະອົງລະທົມຢູ່ໃນຂ້າພະອົງ ຄວາມສະຍົດສະຫຍອງຂອງມັດຈຸລາດຕົກເໜືອຂ້າພະອົງ
5 ຄວາມຢ້ານ ແລະຄວາມສະທົກສະທ້ານມາເໜືອຂ້າພະອົງຄວາມຫວາດສຽວຖ້ວມຂ້າພະອົງ
6 ແລະຂ້າພະອົງວ່າ "ໂອ ຂ້າຢາກມີປີກຢ່າງນົກເຂົາຈະໄດ້ບິນໜີໄປ ແລະຢູ່ສະຫງົບ

ເອຊາຢາ 41:10-13
10 ຢ່າຢ້ານເລີຍ ເພາະເຮົາຢູ່ກັບເຈົ້າ ຢ່າຢ້ານ ເພາະເຮົາເປັນພະເຈົ້າຂອງເຈົ້າ ເຮົາຈະໜູນກໍາລັງເຈົ້າເອີເຮົາຈະຊ່ວຍເຈົ້າ ເອີເຮົາຈະຊູເຈົ້າດ້ວຍມືຂວາອັນມີໄຊຂອງເຮົາ
11 ເບິ່ງເຖີ ບັນດາຜູ້ທີ່ຂັດເຄືອງກັບເຈົ້າ ຈະຕ້ອງໄດ້ຄວາມອາຍແລະອົດສູ ຄົນເຫລົ່ານັ້ນທີ່ຝືນສູ້ເຈົ້າຈະສູນ ແລະພິນາດໄປ
12 ເຈົ້າຈະສະແຫວງຜູ້ທີ່ຕໍ່ສູ້ກັບເຈົ້າ ແຕ່ເຈົ້າຈະບໍ່ພົບເຂົາ ຜູ້ທີ່ເຮັດສົງຄາມກັບເຈົ້າ ຈະເປັນສູນ ແລະສູນຍະພາບ
13 ເພາະເຮົາຄືພະເຢໂຮວາ ພະເຈົ້າຂອງເຈົ້າ ຢູດມືຂວາຂອງເຈົ້າໄວ້ ຄືເຮົາເອງເວົ້າກັບເຈົ້າວ່າ "ຢ່າຢ້ານເລີຍເຮົາຈະຊ່ວຍເຈົ້າ"

GCI

ໂຣມ 8:15

15 ເຫດວ່າທ່ານບໍ່ໄດ້ຮັບນ້ຳໃຈທາດຊຶ່ງເຮັດໃຫ້ຕົກໃນຄວາມຢ້ານອີກ ແຕ່ທ່ານໄດ້ຮັບພະວິນຍານຜູ້ຊົງ ໃຫ້ເປັນບຸດຂອງພະເຈົ້າ ໃຫ້ເຮົາທັງຫລາຍຮ້ອງຮຽກພະເຈົ້າວ່າ "ອັບບາ" ຄືພະບິດາ

2ຕີໂມທຽວ1:7

7 ເພາະວ່າພະເຈົ້າບໍ່ໄດ້ຊົງປະທານຈິດທີ່ຂີ້ຢ້ານໃຫ້ເຮົາ ແຕ່ໄດ້ຊົງປະທານຈິດທີ່ປະກອບດ້ວຍຄວາມຮັກ ແລະການບັງຄັບຕົນເອງໃຫ້ແກ່ເຮົາ

1ໂຢຮັນ 4:18

18 ໃນຄວາມຮັກນັ້ນບໍ່ມີຄວາມຢ້ານ ແຕ່ຄວາມຮັກທີ່ສົມບູນນັ້ນກໍໄດ້ຈັດຄວາມຢ້ານເສັຽ ເພາະຄວາມຢ້ານເຂົ້າກັບການລົງໂທດ ແລະຜູ້ທີ່ມີຄວາມຢ້ານກໍຍັງບໍ່ມີຄວາມຮັກທີ່ສົມບູນ

**<u>ຄວາມຮູ້ສຶກຜິດ</u>**

ໂຢຮັນ8:36

36 ເຫດສະນັ້ນຖ້າພະບຸດຊົງເຮັດໃຫ້ທ່ານທັງຫລາຍເປັນອິດສະຫລະ ທ່ານກໍເປັນອິດສະຫລະແທ້ໆ

2ໂກຣິນໂທ 5:17

17 ເຫດສັນນັ້ນຖ້າຜູ້ໃດຢູ່ໃນພະຄຣິດ ຜູ້ນັ້ນກໍເປັນຄົນທີ່ຖືກສ້າງໃຫມ່ແລ້ວ ສິ່ງສາລະພັດທີ່ເກົ່າໆກໍລ່ວງໄປ ນີ້ແນະກາຍ ເປັນສິ່ງໃຫມ່ທັງນັ້ນ

ເອຊາຢາ 43:25

25 ເຮົາ ເຮົາຄືພະອົງນັ້ນ ຜູ້ລົບລ້າງຄວາມທໍລະຍົດຂອງເຈົ້າດ້ວຍເຫັນແກ່ເຮົາເອງ ແລະເຮົາຈະບໍ່ຈົດຈຳບັນດາບາບຂອງເຈົ້າໄວ້

**<u>ການຮັກສາໂລກ</u>**

ເພັງສັນລະເສີນ 147:3

3 ພະອົງຊົງຮັກສາຄົນທີ່ຊອກຊ້ຳລະກຳໃຈ ແລະຊົງພັນຜູກບາດແຜຂອງເຂົາ

ເຢເລມີ 17:14

14 ຂ້າແດ່ພະເຈົ້າຂໍຊົງຮັກສາຂ້າພະອົງ ຂ້າພະອົງຈະໄດ້ຫາຍຂໍຊົງຊ່ວຍຂ້າພະອົງ ຂ້າພະອົງຈຶ່ງຈະພົ້ນເພາະພະອົງເປັນທີ່ສັນລະເສີນຂອງຂ້າພະອົ

ມັດທາຍ 10:1

1 ພະອົງຊົງເອີ້ນສາວົກສິບສອງຄົນຂອງພະອົງມາ ແລ້ວກໍປະທານອຳນາດໃຫ້ເຂົາຂັບຜີອອກໄດ້ ແລະໃຫ້ຮັກສາໂລກ ແລະຄວາມເຈັບໄຂ້ທຸກຢ່າງໃຫ້ຫາຍໄດ້

ຢາໂກໂບ 5:14–15

14 ມີຜູ້ໃດໃນພວກທ່ານເຈັບປ່ວຍຫລື ຈົ່ງໃຫ້ຜູ້ນັ້ນເຊີນບັນດາຜູ້ປົກຄອງຂອງຄຣິສຕະຈັກມາ ແລະໃຫ້ທ່ານເຫລົ່ານັ້ນອະທິຖານເພື່ອເຂົາ ແລະເຈີມເຂົາດ້ວຍນ້ຳມັນໃນພະນາມຂອງອົງພະຜູ້ເປັນເຈົ້າ

**<u>ຊາຍຮັກຮ່ວມເພດ</u>**

1ໂກຣິນໂທ 6:9 –10

9 ທ່ານບໍ່ຮູ້ຫລືວ່າ ຄົນອະທຳຈະບໍ່ມີສ່ວນໃນແຜ່ນດິນຂອງພະເຈົ້າ ຢ່າຫລົງເລີຍ ຄົນລ່ວງປະເວນີ ຄົນຖືຮູບເຄົາລົບ ຄົນຜິດຜົວເມັຽເຂົາ ລູກສະຫວາດ ຊາຍຫລີ້ນກັບຊາຍ

10 ຄົນຂະໂມຍ ຄົນໂລບ ຄົນຂີ້ເມົາ ຄົນປາກຮ້າຍ ຄົນສໍ້ໂກງ ຈະບໍ່ໄດ້ຮັບສ່ວນໃນແຜ່ນດິນຂອງພະເຈົ້າ

GCI

1ຕີໂມທຽວ 1:9-10
9 ຄືໂດຍຮູ້ວ່າທໍາບັນຍັດນັ້ນ ບໍ່ໄດ້ຊົງບັນຍັດໄວ້ສໍາລັບຄົນຊອບທໍາ ແຕ່ຊົງບັນຍັດໄວ້ສໍາລັບຄົນອະທໍາ ແລະຄົນດື້ດ້ານ ຄົນຜິດ
ແລະຄົນບາບ ຄົນບໍ່ນັບຖືພະເຈົ້າ ແລະຄົນໝິ່ນປະໝາດ ຄົນຂ້າພໍ່ ຄົນຂ້າແມ່ ຄົນຂ້າຄົນ
10 ຄົນລ່ວງປະເວນີ ຊາຍຫລີ້ນກັບຊາຍ ຜູ້ຮ້າຍລັກຄົນ ຄົນຂີ້ຕົວະ ຄົນກະບົດ ແລະອັນໃດໆ ທີ່ຂັດກັບຄໍາສອນອັນມີຫລັກ

**<u>ຄວາມຫວັງ</u>**

ເພງສັນລະເສີນ71:5
5 ຂ້າແດ່ອົ*ພະຜູ້ເປັນເຈົ້າເພາະພະອົງຊົງເປັນຄວາມຫວັງຂອງຂ້າພະອົງ ຂ້າແດ່ພະເຈົ້າເປັນທີ່ວາງໃຈຂອງຂ້າພະອົງຕັ້ງແຕ່ນ້ອຍໆມາ

ໂຣມ8:24-25
24 ເຫດວ່າເຮົາທັງຫລາຍພົ້ນແມ່ນເປັນພຽງຄວາມຫວັງໃຈ ແຕ່ຄວາມຫວັງໃຈໃນສິ່ງທີ່ເຮົາເຫັນໄດ້ ບໍ່ເປັນຄວາມຫວັງໃຈ ດ້ວຍວ່າໃຜນໍຈະຍັງຫວັງໃນສິ່ງທີ່ເຂົາເຫັນ

**<u>ຄວາມຮູ້ສຶກບໍ່ໝັ້ນໃຈ</u>**

ໂຣມ8:38-39
38 ເພາະຂ້າພະເຈົ້າເຊື່ອໝັ້ນວ່າແມ່ນຄວາມຕາຍ ຫລືຊີວິດຫລືບັນດາທູດສະຫວັນ ຫລືເທບພະເຈົ້າຫລືສິ່ງຊຶ່ງມີຢູ່ໃນ ປະຈຸ ບັນນີ້ ຫລືສິ່ງຊຶ່ງຈະມີໃນພາຍໜ້າ ຫລືລິດເດດທັງຫລາຍ

39 ຫລືຊຶ່ງສູງ ຫລືຊຶ່ງເລິກ ຫລືສິ່ງໃດໆ ອື່ນທີ່ໄດ້ຊົງສ້າງແລ້ວນັ້ນຈະບໍ່ສາມາດເຮັດໃຫ້ເຮົາທັງຫລາຍຈາກຄວາມຮັກ ຂອງພະເຈົ້າຊຶ່ງມີຢູ່ໃນພະເຢຊູຄຣິດອົງພະຜູ້ເປັນເຈົ້າຂອງເຮົາໄດ້

1ຕີໂມທຽວ 6:17-19
17 ສໍາລັບຄົນເຫລົ່ານັ້ນທີ່ຮັ່ງມີຝ່າຍໂລກຈົ່ງກໍາຊັບເຂົາຢ່າໃຫ້ມີມານະທິດທິ ຫລືໃຫ້ເຂົາມຸ້ງຫວັງໃນຊັບທີ່ບໍ່ທຽງແຕ່ຫວັງ ໃນພະເຈົ້າຜູ້ຊົງປະທານທຸກສິ່ງເພື່ອຄວາມສະດວກສະບາຍຂອງເຮົາ
18 ຈົ່ງກໍາຊັບໃຫ້ເຂົາເຮັດດີ ໃຫ້ເຮັດດີຫລາຍໆ ໃຫ້ເອື້ອເຟື້ອເຜື່ອແຜ່ ແລະບໍ່ເຫັນແກ່ຕົວ
19 ຢ່າງນີ້ ຈຶ່ງຈະເປັນການວາງຮາກຖານອັນດີໄວ້ສໍາລັບຕົນເອງໃນພາຍໜ້າເພື່ອວ່າເຂົາຈະໄດ້ຮັບເອົາຊີວິດຊຶ່ເປັນຊີວິດອັນ ແທ້ຈິງ

ເຮັບເລີ 13:5-6
5 ທ່ານຈົ່ງຢ່າເປັນຄົນເຫັນແກ່ເງິນຈົ່ງພໍໃຈໃນສິ່ງທີ່ທ່ານມີຢູ່ເພາະວ່າພະອົງໄດ້ຕັດວ່າເຮົາຈະບໍ່ປະຖິ້ມທ່ານ ຫລືທອດຖິ້ມ ທ່ານເລີຍ
6 ເຫດສະນັ້ນເຮົາທັງຫລາຍອາດກ່າວດ້ວຍໃຈເຊື່ອໝັ້ນວ່າ ອົງພະຜູ້ເປັນເຈົ້າຊົງເປັນພະຜູ້ຊ່ວຍຂອງຂ້າພະເຈົ້າ ຂ້າພະເຈົ້າ ຈະບໍ່ຢ້ານ ມະນຸດຈະເຮັດອັນໃດແກ່ຂ້າພະເຈົ້າໄດ້

ເພງສັນລະເສີນ 23:1-6
1 ພະເຈົ້າຊົງລ້ຽງດູຂ້າພະເຈົ້າເໝືອນດັ່ງລ້ຽງແກະ ຂ້າພະເຈົ້າຈະບໍ່ຂັດສົນ
2 ພະອົງຊົງກະທໍາໃຫ້ຂ້າພະເຈົ້ານອນລົງທີ່ທົ່ງຫຍ້າຂຽວສົດ ພະອົງຊົງນໍາຂ້າພະເຈົ້າໄປຮິມນໍ້າແດນສະຫງົບ
3 ຊົງຟື້ນຈິດວິນຍານຂອງຂ້າພະເຈົ້າ ພະອົງຊົງນໍາຂ້າພະເຈົ້າໄປໃນທາງຊອບທໍາ ເພາະເຫັນແກ່ພະນາມຂອງພະອົງ
4 ແມ່ນຂ້າພະອົງຈະຍ່າງໄປຕາມຫຸບເຂົາເງົາມັດຈຸລາດ ຂ້າພະອົງບໍ່ຢ້ານອັນຕະລາຍໃດໆ ເພາະພະອົງຊົງສະຖິດກັບຂ້າພະອົງ ກະທາ ແລະທານພະກອນຂອງພະອົງເລົ້າໂລມຂ້າພະອົງ
5 ພະອົງຊົງຕຽມສໍາລັບໃຫ້ຂ້າພະອົງຕໍ່ໜ້າຕໍ່ຕາສັດຕູຂອງຂ້າພະອົງ ພະອົງຊົງເຈີມສີສະຂ້າພະອົງດ້ວຍນໍ້າມັນຂັນນໍ້າຂອງ ຂ້າພະອົງກໍລົ້ນຢູ່
6 ຄວາມດີ ແລະຄວາມຮັກໝັ້ນຄົງຈະຕິດຕາມຂ້າພະເຈົ້າໄປຕະຫລອດວັນຄືນຊີວິດຂອງຂ້າພະເຈົ້າ ແລະຂ້າພະເຈົ້າຈະຢູ່ ໃນ ພະນິເວດຂອງພະເຈົ້າສືກໄປເປັນນິດ

GCI

ເພັງສັນລະເສີນ 118:5-9

5 ຂ້າພະເຈົ້າໄດ້ຮ້ອງທູນພະເຈົ້າຈາກທີ່ຄັບແຄ້ນໃຈຂອງຂ້າພະເຈົ້າ ພະເຈົ້າຊົງຕອບຂ້າພະເຈົ້າ ແລະປະທານຄວາມໂລ່ງໃຈແກ່ຂ້າພະເຈົ້າ

6 ມີພະເຈົ້າຢູ່ຝ່າຍຂ້າພະເຈົ້າ ຂ້າພະເຈົ້າບໍ່ຢ້ານມະນຸດຈະເຮັດອັນໃດແກ່ຂ້າພະເຈົ້າໄດ້

7 ພະເຈົ້າຊົງຢູ່ຝ່າຍຂ້າພະເຈົ້າ ເປັນຜູ້ຊົງຊ່ວຍຂ້າພະເຈົ້າ ຂ້າພະເຈົ້າເບິ່ງເຫັນຄົນທີ່ກຽດຊັງຂ້າພະເຈົ້າແທ້

8 ເຂົ້າລີ້ໄພຢູ່ໃນພະເຈົ້າ ກໍດີກວ່າ ທີ່ຈະເຊື່ອໃຈໃນມະນຸດ

9 ເຂົ້າລີ້ໄພຢູ່ໃນພະເຈົ້າ ກໍດີກວ່າ ທີ່ຈະເຊື່ອໃຈໃນເຈົ້ານາຍ

**<u>ການສົມລົດ</u>**

ປະຖົມມະການ 2:23-24

23 ຊາຍຈຶ່ງວ່າ "ນີ້ແຫລະກະດູກຈາກກະດູກຂອງເຮົາ ເນື້ອຈາກເນື້ອຂອງເຮົາ ຈະຕ້ອງເອີ້ນວ່າຍິງຖ້າຈະໃຫ້ຄົງຮູບຈະແປ
ເປັນຢ່າງນີ້ກໍໄດ້ "ຈະຕ້ອງເອີ້ນວ່າ ຊາຍາ ເພາະຊາຍານີ້ອອກມາຈາກຊາຍ" ເພາະຍິງເນື້ອອອກມາຈາກຊາຍ"

24 ເພາະເຫດນັ້ນຜູ້ຊາຍຈຶ່ງຈາກບິດາມານດາຂອງຕົນໄປຜູກພັນຢູ່ກັບພັນລະຍາ ແລະເຂົາທັງສອງຈະເປັນເນື້ອດຽວກັນ

1ໂກຣິນໂທ 11:11-12

11 (ເຖິງປານນັ້ນກໍດີໃນອົງພະຜູ້ເປັນເຈົ້າ ຜູ້ຊາຍກໍຕ້ອງເພິ່ງຜູ້ຍິງ ແລະຜູ້ຍິງກໍຕ້ອງເພິ່ງຜູ້ຊາຍ

12 ເພາະວ່າຜູ້ຍິງນັ້ນຊົງສ້າງມາຈາກຜູ້ຊາຍສັນໃດ ຕໍ່ມາຜູ້ຊາຍກໍເກີດມາຈາກຜູ້ຍິງສັນນັ້ນ ແຕ່ສິ່ງສາລະພັດມີມາຈາກພະເຈົ້າ)

**<u>ຄວາມຄິດໃນແງ່ຮ້າຍ</u>**

ຟີລິບບອຍ 4:8

8 ດູກ່ອນພີ່ນ້ອງທັງຫລາຍ ໃນທີ່ສຸດນີ້ຂໍຈົ່ງໄຕ່ຄອນເຖິງສິ່ງທີ່ຈິງ ສິ່ງທີ່ໜ້ານັບຖື ສິ່ງທີ່ຍຸດຕິທຳ ສິ່ງທີ່ບໍລິສຸດສິ່ງທີ່ໜ້າຮັກ
ສິ່ງທີ່ງຄຸນ ຄືຖ້າມີສິ່ງໃດທີ່ລ້ຳເລີດ ສິ່ງໃດທີ່ຄວນແກ່ການສັນລະເສີນ ກໍຂໍຈົ່ງໄຕ່ຄອນເບິ່ງ

ຟີລິບບອຍ 4:13

13 ຂ້າພະເຈົ້າປະເຊີນທຸກສິ່ງໄດ້ ໂດຍພະອົງຜູ້ຊົງຊູກຳລັງ

**<u>ການຖືກປະຕິເສດ</u>**

ເພັງສັນລະເສີນ 68:5-6

5 ພະເຈົ້າໃນທີ່ປະທັບບໍລິສຸດຂອງພະອົງ ຊົງເປັນພະບິດາຂອງຄົນກຳພ້າ ແລະຊົງເປັນຜູ້ປ້ອງກັນຍິງມ້າຍ

6 ພະເຈົ້າຊົງໃຫ້ຄົນເປົ່າປ່ຽວອາໃສຢູ່ຕາມບ້ານເຮືອນພະອົງຊົງນຳຊະເລີຍອອກມາເຖິງຄວາມລຸ້ງໂລດ ແຕ່ຄົນມັກ ກະບົດອາໃສໃນແຜ່ນດິນທີ່ແຕກແຫງ

ເພັງສັນລະເສີນ 139:17-18

17 ຂ້າແດ່ພະເຈົ້າ ພະດຳລິຂອງພະອົງປະເສີດແກ່ຂ້າພະອົງແທ້ໆ ລວມກັນເຂົ້າກໍໄພສານໜັກໜາ

18 ຖ້າຂ້າພະອົງຈະນັບກໍຫລາຍກວ່າເມັດຊາຍ ເມື່ອຂ້າພະອົງຕື່ນຂຶ້ນ ຂ້າພະອົງກໍຈະຍັງຢູ່ກັບພະອົງ

**<u>ການກັບໃຈໃໝ່</u>**

2ພົງສາວະດານ 7:14

14 ຖ້າປະຊາກອນຂອງເຮົາຜູ້ຊຶ່ງເຂົາເອີ້ນກັນໂດຍຊື່ຂອງເຮົານັ້ນຈະຖ່ອມຕົວລົງ ແລະອະທິຖານແລະສະແຫວງຫາໜ້າຂອງເຮົາ ແລະຫັນເສັຽຈາກ ທາງຊົ່ວຂອງເຮົາ ເຮົາກໍຈະຟັງຈາກສະຫວັນ ແລະຈະໃຫ້ອະໄພແກ່ບາບຂອງເຂົາ ແລະຈະຮັກສາແຜ່ນດິນຂອງ ເຂົາໃຫ້ຫາຍ

ເອຊາຢາ55:6-7

6 "ຈົ່ງສະແຫວງຫາພະເຈົ້າ ເມື່ອຈະພົບພະອົງໄດ້ ຈທົ່ງທູນພະອົງ ຂະນະພະອົງຊົງຢູ່ໃກ້

7 ໃຫ້ຄົນອະທຳຖິ້ມທາງຂອງເຂົາ ແລະຄົນບໍາຊອນທຳສະຫລະຄວາມຄິດຂອງເຂົາ ໃຫ້ເຂົາກັບຍັງພະເຈົ້າ ເພື່ອພະອົງຈະຊົງກະລຸນາເຂົາ ແລະຍັງພະເຈົ້າຂອງເຮົາ ເພາະພະອົງຈະຊົງອະໄພຢ່າງລົ້ນເຫລືອ

GCI

ກິດຈະການ3:19
19 ເຫດສະນັ້ນທ່ານທັງຫລາຍຈົ່ງຫັນກັບ ແລະຕັ້ງໃຈໃຫມ່ ເພື່ອພະເຈົ້າຈະຊົງລົບລ້າງຄວາມຜິດບາບຂອງທ່ານເສັຽ ເພື່ອວາລະພັກຜ່ອນຢ່ອນໃຈຈະໄດ້ມາຈາກພະພັກພະເຈົ້າ

1ໂຢຮັນ1:9
9 ຖ້າເຮົາສາລະພາບບາບຂອງເຮົາ ພະອົງຊົງສັດຊື່ແລະທ່ຽງທໍາ ກໍຈະຊົງໂປດຍົກບາບຂອງເຮົາ ແລະຈະຊົງຊໍາລະ ເຮົາໃຫ້ ພົ້ນຈາກການອະທໍາທັງສິ້ນ

**<u>ການທົນທຸກ</u>**

ໂຣມ8:18
18 ເພາະຂ້າພະເຈົ້າເຫັນວ່າຄວາມທຸກລໍາບາກແຫ່ງສະໄຫມປະຈຸບັນ ບໍ່ສົມຄວນທີ່ຈະເອົາໄປປຽບກັບສັກສີ ຊຶ່ງຈະເຜີຍໃຫ້ແກ່ເຮົາທັງຫລາຍ

ໂຣມ8:28
28 ເຮົາຮູ້ວ່າ ພະເຈົ້າຊົງຊ່ວຍຄົນທີ່ຮັກພະອົງໃຫ້ເກີດຜົນອັນດີໃນທຸກສິ່ງ ຄືຄົນທັງປວງທີ່ພະອົງໄດ້ຊົງເອີ້ນຕາມພະປະສົງຂອງພະອົງ

ໂຣມ8:35–37
37 ແຕ່ວ່າໃນເຫດການທັງປວງເຫລົ່ານີ້ ເຮົາມີໄຊເໜືອລົ້ນໂດຍພະອົງຜູ້ໄດ້ຊົງຮັກເຮົາທັງຫລາຍ

**<u>ການທົດລອງໃຈ</u>**

ສຸພາສິດ1:10
10 ບຸດຊາຍຂອງເຮົາເອີຍ ຖ້າຄົນບາບລໍ່ຊວນເຈົ້າ ຢ່າໄດ້ຍອມຕາຍ

ສຸພາສິດ4:14–15
14 ຢ່າເຂົ້າໄປໃນວິຖີຂອງຄົນຊົ່ວຮ້າຍ ແລະຢ່າຍ່າງໃນທາງຂອງຄົນອະທໍາ
15 ຈົ່ງຫລີກເສັຽ ຢ່າຍ່າງເທິງນັ້ນ ລ້ຽວອອກໄປເສັຽ ແລະຈົ່ງຜ່ານໄປ

ມັດທາຍ 26:41
41 ທ່ານທັງຫລາຍຈົ່ງເຝົ້າລະວັງ ແລະອະທິຖານ ເພື່ອທ່ານຈະບໍ່ຕ້ອງຖືກທົດລອງຈິດໃຈພ້ອມແລ້ວກໍຈິງແຕ່ກາຍຍັງອ່ອນກໍາລັງ”

1ໂກຣິນໂທ10:13
13 ບໍ່ມີການທົດລອງໃດໆເກີດຂຶ້ນກັບທ່ານ ນອກເໜືອຈາກການທົດລອງຊຶ່ງເຄີຍເກີດກັບມະນຸດທັງຫລາຍ ພະເຈົ້າຊົງສັດຊື່ ພະອົງຈະບໍ່ຊົງໃຫ້ທ່ານຕ້ອງຖືກທົດລອງເກີນກວ່າທີ່ທ່ານຈະທົນໄດ້ ແລະເມື່ອທ່ານຖືກທົດລອງນັ້ນພະອົງຈະຊົງໂປດໃຫ້ທ່ານມີທາງທີ່ຈະຫລີກລ້ຽງໄດ້ດ້ວຍເພື່ອທ່ານຈະມີກໍາລັງທົນໄດ້

**<u>ການບໍ່ໃຫ້ອະໄພ</u>**

ມັດທາຍ 6:14–15
14 ເພາະວ່າຖ້າທ່ານຍົກຄວາມຜິດຂອງເພື່ອນມະນຸດ ພະບິດາຂອງທ່ານຜູ້ຊົງສະຖິດໃນສະຫວ ນຈະຊົງໂປດຍົກຄວາມ ຜິດບາບຂອງທ່ານດ້ວຍ
15 ແຕ່ຖ້າທ່ານບໍ່ຍົກຄວາມຜິດຂອງເພື່ອນມະນຸດ ພະບິດາຂອງທ່ານຈະບໍ່ຊົງໂປດຍົກຄວາມຜິດຂອງທ່ານຄືກັນ

ມາຣະໂກ 11:25
25 ເມື່ອທ່ານຢືນອະທິຖານຢູ່ ຖ້າທ່ານມີເຫດກັບຜູ້ນຶ່ງຜູ້ໃດຈົ່ງຍົກໂທດໃຫ້ຜູ້ນັ້ນເສັຽເພື່ອພະບິດາຂອງທ່ານຜູ້ຊົງສະຖິດໃນສະຫວັນຈະໂປດຍົກຄວາມຜິດຂອງທ່ານດ້ວຍ

GCI

ເອເຟໂຊ 4:32

32 ແລະທ່ານຈົ່ງເມດຕາຕໍ່ກັນມີໃຈເອັນດູຕໍ່ກັນ ແລະອະໄພໂທດໃຫ້ກັນເໝືອນດັ່ງທີ່ພະເຈົ້າໄດ້ຊົງໂປດອະໄພໂທດໃຫ້ແກ່ທ່ານໃນພະຄຣິດນັ້ນ

**<u>ການແກ້ແຄ້ນ</u>**

ໂຣມ 12:19

19 ດູກ່ອນ ທ່ານຜູ້ເປັນທີ່ຮັກຂອງຂ້າພະເຈົ້າ ຢ່າເຮັດການແກ້ແຄ້ນ ແຕ່ຈົ່ງມອບການນັ້ນໄວ້ ແລ້ວແຕ່ພະເຈົ້າຈະຊົງລົງພະອາຍາ
ເພາະມີຄຳຂຽນໄວ້ໃນພະຄຳພີວ່າ ອົງພະຜູ້ເປັນເຈົ້າຕັດວ່າ "ການແກ້ແຄ້ນເປັນຂອງເຮົາ ເຮົາເອງຈະຕອບສະໜອງ"